ສະໜັບສະໜູນການສ້າງຕົ້ນສະບັບໂດຍງົບປະມານແຫ່ງລັດ
ສະໜັບສະໜູນການພິມໂດຍທະນາຄານພັດທະນາອາຊີ

ພິມທີ່ໂຮງພິມ Eastern Printing Public Co. ltd. (ປະເທດໄທ)
ຕາມທບ 214 ພຈ 27.03.2014
ຂະໜາດ 18 × 25 ຊມຈຳນວນພິມ 4,915 ຫົວ
ສະຫງວນລິຂະສິດ

ຄູ່ມືຄູ ສຶກສາພົນລະເມືອງ ຊັ້ນມັດທະຍົມສຶກສາ ປີທີ 5

# ຄູ່ມືຄູ
# ສຶກສາພົນລະເມືອງ
## ຊັ້ນມັດທະຍົມສຶກສາປີທີ 5





ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2014

ຫ້າມຂາຍ

# ຄູ່ມືຄູ
# ສຶກສາພົນລະເມືອງ
## ຊັ້ນມັດທະຍົມສຶກສາ ປີທີ 5


ຮຽງຮຽງໂດຍ: ຮສ. ຄຳຜິວ ນາມລຳມູນ, ພາກວິຊາວິທະຍາສາດສັງຄົມ, ມ.ຊ
ບຸນແຍງ ໄຊຍະວົງ, ພະນັກງານບຳນານ
ພັນສອນ ທັນນະວົງ, ສ.ວ.ສ
ມີໄຊສະຫວັດ ແສງສະຫວ່າງ, ສ.ວ.ສ
ກວດແກ້ໂດຍ: ດຣ. ດາວເຮືອງ ສິນຕະນາກ, ຄະນະໂຄສະນາອົບຮົມສູນກາງພັກ
ດຣ. ອ່ອນແກ້ວ ນວນນະວົງ, ສ.ວ.ສ

ພິມເຂົ້າໜ້າໂດຍ: ມີໄຊສະຫວັດ ແສງສະຫວ່າງ
ໂດຍການຮ່ວມມືກວດຜ່ານຈາກ: ວິໄລວັນ ວົງສາ, ຄະນະໂຄສະນາອົບຮົມ ສູນກາງພັກ
ບຸນຂວັນ ອາດສົມແສງ, ນິເທດ ແຂວງ ຄຳມ່ວນ
ພູໂຂງ ວົງພູທອນ, ນິເທດ ແຂວງ ບໍລິຄຳໄຊ
ຍຸນເຮືອງ ອຸລາຫຼົງ, ມສ. ເມືອງໄຊ ແຂວງອຸດົມໄຊ
ຖິ່ນ ພິມມະສອນ, ມສ. ຜັກຂະ ແຂວງສະຫວັນນະເຂດ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2014

**ສາລະບານ**

ໜ້າ


ຄຳນຳ………………………………………………………………………......

ແນະນຳລວມ…………………………………………………………………….1

**ພາກທີI: ການປະກອບສ້າງໂລກະທັດວັດຖຸນິຍົມ ແລະ ວິທີວິທະຍາ**……………………………...16

ບົດທີ1: ໂລກະທັດ ແລະ ວິທີສັດຈະວິພາກວັດຖຸນິຍົມ………………………………………...16

ບົດທີ2: ໂລກວັດຖຸຄົງຕົວພາວະວິໄສ……………………………………………………...25

ບົດທີ3: ການເຄື່ອນເໜັງ ແລະ ການຂະຫຍາຍຕົວຂອງໂລກວັດຖຸ……………………………31

ບົດທີ4: ຕົ້ນກຳເນີດການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ………39

ບົດທີ5: ຮູບແບບການເຄື່ອນເໜັງ, ການຂະຫາຍຕົວຂອງສິ່ງວັດຖຸ ແລະ ປາກົດການ…………..46

ບົດທີ6: ທ່າອ່ຽງຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ………………………………..50

ບົດທີ7: ພຶດຕິກຳ ແລະ ບົດບາດຂອງພຶດຕິກຳຕໍ່ກັບຄວາມຮັບຮູ້………………………………56

ບົດທີ8: ການຄົງຕົວຂອງສັງຄົມ ແລະ ສະຕິສັງຄົມ……………………………………...62

ບົດທີ9: ມະນຸດເປັນຜູ້ສ້າງປະຫວັດສາດ ແລະ ເປັນເປົ້າໝາຍພັດທະນາສັງຄົມ………………..70

**ພາກທີII: ຄຸນສົມບັດ**…………………………………………………………….77

ບົດທີ10: ຄວາມສຳນຶກກ່ຽວກັບຄຸນສົມບັດ……………………………………………...77

ບົດທີ11: ພັນທະພື້ນຖານ ແລະ ຄຸນສົມບັດ………………………...........……………82

ບົດທີ12: ການພັດທະນາຕົນເອງໃຫ້ສົມບູນ……………………………………………89

ບົດທີ13: ການສ້າງຄອບຄົວ…………………………………………………………...94

ບົດທີ14: ຊຸມຊົນ……………………………………………………………………100

ບົດທີ15: ພາລະກິດກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ…………………………...107

ບົດທີ16: ບາງບັນຫາຈະຕ້ອງແກ້ໄຂໃນສັງຄົມໂລກ…………………………………113

ເອກະສານອ້າງອີງ………………………………………………………………...120

## ຄຳນຳ

ປຶ້ມຄູ່ມືຄູເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອນຳໃຊ້ເຂົ້າໃນການຮຽນ-ການສອນ ວິຊາສຶກສາພົນລະເມືອງຂັ້ນມ.5 ຫຼັກສູດສະບັບນີ້ປະຕິຮູບຕາມລະບົບ 3 ປີຮຽນຂອງຊັ້ນຮຽນມັດທະຍົມສຶກສາຕອນປາຍທີ່ກະຊວງສຶກສາທິການ ແລະ ກິລາ ໄດ້ປະກາດໃຊ້ໃນປີ2010. ປຶ້ມຫົວນີ້ຄວບຄູ່ກັບປຶ້ມແບບຮຽນວິຊາສຶກສາພົນລະເມືອງຂັ້ນມ. 5 ໂດຍມີຈຸດປະສົງ ເພື່ອໃຫ້ຄູ-ອາຈານທີ່ສິດສອນວິຊາສຶກສາພົນລະເມືອງມີທິດນຳຢ່າງຖືກຕ້ອງໃນການສິດສອນວິຊານີ້, ອີກຢ່າງໜຶ່ງກໍເພື່ອໃຫ້ບັນລຸຈຸດປະສົງ ແລະ ສະມັດຖະພາບທີ່ວາງໄວ້. ຄະນະຮຽບຮຽງໄດ້ພະຍາມຈັດຂັ້ນຕອນຕ່າງໆ ເພື່ອຊ່ວຍໃນການກະກຽມແຜນການສອນຢ່າງລະອຽດ ເຊິ່ງປະກອບມີ: ຈຸດປະສົງ, ເນື້ອໃນຕົ້ນຕໍ, ສື່ການຮຽນ-ການສອນ, ກິດຈະກຳການຮຽນ-ການສອນ, ການວັດ ແລະ ປະເມີນຜົນ. ໃນກິດຈະກຳຄະນະຮຽບຮຽງໄດ້ໃຊ້ ຫຼາຍວິທີ, ຫຼາຍຫົວຂໍ້, ເຊິ່ງຄູ-ອາຈານສາມາດເລືອກເອົາວິທີຕ່າງໆ ທີ່ເໝາະສົມກັບລະດັບ, ເວລາ, ສະພາບຕົວຈິງ ແລະ ຄວາມສະດວກຂອງແຕ່ລະທ້ອງຖິ່ນ ຫຼື ໂຮງຮຽນ. ຖ້າຄູ-ອາຈານຫາກມີວິທີສິດສອນ ຫຼື ສື່ການຮຽນໃດທີ່ດີກໍສາມາດນຳໃຊ້ເຂົ້າໃນການສອນຍິ່ງເປັນການດີ. ຂໍ້ທົດສອບສາມາດນຳໃຊ້ໄດ້ສອງຢ່າງທັງປະລະໄນ ແລະ ອັດຕະໄນໄປພ້ອມກັນ.

ເນື້ອໃນ ແລະ ຄວາມຮູ້ໃນຂັ້ນ ມ.5 ໄດ້ສືບຕໍ່ມາແຕ່ຊັ້ນມັດທະຍົມຕອນຕົ້ນ ເຊິ່ງຮຽນຮູ້ເຖິງຄວາມສາມັກຄີ, ຮີດຄອງປະເພນີ, ວັດທະນະທຳ... ນອກຈາກນີ້ກໍມີເນື້ອໃນໃໝ່ເພີ່ມເຂົ້າເພື່ອໃຫ້ມີຄວາມຮູ້ກວ້າງຂວາງ ແລະ ເລິກເຊິ່ງເຊັ່ນ: ການປະກອບສ້າງໂລກະທັດວັດຖຸນິຍົມ, ໂລກວັດຖຸຄືງຕົວຕາມພາວະວິໄສ, ການເຄື່ອນເໜັງ ແລະ ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ, ກຳລັງການຜະລິດ ແລະ ການພົວພັນການຜະລິດ...ເນື້ອໃນລະອຽດໄດ້ສະເໜີໃນປຶ້ມແບບຮຽນ ແລະ ມີບາງຕົວຢ່າງຢູ່ໃນປຶ້ມຄູ່ມືຄູ.

ຄະນະຮຽບຮຽງຫວັງວ່າປຶ້ມຄູ່ມືຄູເຫຼັ້ມນີ້ ຈະມີປະໂຫຍດຫຼາຍໃຫ້ແກ່ຄູ-ອາຈານໃນການກະກຽມແຜນການ ແລະ ບົດສອນໄດ້ເປັນຢ່າງດີ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ແນະນຳລວມ

ວິຊາສຶກສາພົນລະເມືອງແມ່ນວິຊາໜຶ່ງ ທີ່ສຶກສາໃຫ້ຜູ້ຮຽນມີມາດຖານຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ທາງດ້ານວິທະຍາສາດ, ການແກ້ໄຂບັນຫາຕ່າງໆເຂົ້າໃນຊີວິດປະຈຳວັນ, ຄວາມຮັບຜິດຊອບຂອງພົນລະເມືອງຕໍ່ຂົງເຂດເສດຖະກິດ, ລັດທິສັງຄົມວິທະຍາສາດ, ປັດຊະຍາ, ບັນດານະໂຍບາຍຕ່າງໆຂອງພັກ-ລັດ, ການພັດທະນາ, ການປົກປັກຮັກສາປະເທດຊາດ. ເນື້ອໃນ ແລະ ກິດຈະກຳທີ່ໄດ້ບັນຈຸໃນແຕ່ລະບົດຮຽນນັ້ນເປັນຄວາມຮູ້ພື້ນຖານໃຫ້ນັກຮຽນນອກນັ້ນຍັງສຶກສາໃຫ້ນັກຮຽນມີຄວາມເອກອ້າງທະນົງໃຈ ແລະ ພາກພູມໃຈທີ່ເປັນຄົນລາວ, ຊາດລາວ ແລະ ຮັກລະບອບປະຊາທິປະໄຕປະຊາຊົນ, ທັງເປັນຜູ້ປະຕິບັດສິດ ແລະ ພັນທະຕໍ່ປະເທດຊາດໃນປະຈຸບັນ ແລະ ອະນາຄົດ.

## 1. ຈຸດພິເສດຂອງວິຊາ

ວິຊາສຶກສາພົນລະເມືອງຂັ້ນ ມ.5 ເປັນວິຊາທີ່ໃຫ້ຄວາມຮູ້ກ່ຽວກັບໂລກະທັດວັດຖຸນິຍົມສັດຈະວິພາກ, ວັດຖຸຄົງຕົວພາວະວິໄສ, ການເຄື່ອນເໜັງ ແລະ ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການໃຫ້ຄວາມຮູ້ກ່ຽວກັບບົດບາດຂອງພຶດຕິກຳຕໍ່ກັບຄວາມຮັບຮູ້, ມະນຸດເປັນຜູ້ສ້າງປະຫວັດສາດ ແລະ ເປັນເປົ້າໝາຍໃນການພັດທະນາສັງຄົມ, ຄວາມຮູ້ທາງດ້ານຄຸນສົມບັດ, ການພັດທະນາ ແລະ ການປົກປັກຮັກສາປະເທດຊາດ.

## 2. ຈຸດປະສົງ

- **ດ້ານຄວາມຮູ້**
  - ຮູ້ ແລະ ເຂົ້າໃຈເນື້ອໃນພື້ນຖານ ຂອງໂລກະທັດວັດຖຸນິຍົມ ແລະ ວິທີສັດຈະວິພາກ
  - ຮູ້ ແລະ ເຂົ້າໃຈທາດແທ້ຂອງໂລກະທັດວັດຖຸນິຍົມ ແລະ ຈິດຕະນິຍົມ, ການເຄື່ອນເໜັງ ແລະ ການຂະຫຍາຍຕົວແມ່ນໄປຕາມກົດເກນພາວະວິໄສ ແມ່ນສິ່ງທີ່ມີຢູ່ແລ້ວຂອງໂລກວັດຖຸ, ມະນຸດສາມາດຮັບຮູ້ ແລະ ໝູນໃຊ້ກົດເກນດັ່ງກ່າວໄດ້.
  - ຮູ້ ແລະ ເຂົ້າໃຈມາດຕະເກນພື້ນຖານຂອງຄຸນສົມບັດທີ່ມີການພົວພັນ ໂດຍກົງກັບຄຸນສົມບັດຂອງນັກຮຽນຂັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍ.

- **ດ້ານທັກສະ**
  - ສາມາດນຳໃຊ້ຄວາມຮູ້ທາງດ້ານປັດຊະຍາກັບທັດສະນະຂອງໂລກະທັດ, ວິທີສັດຈະວິພາກເພື່ອໄຈ້ແຍກບັນດາເຫດການທຳມະຊາດ, ສັງຄົມ, ເຫດການຂອງຄຸນສົມບັດ, ເສດຖະກິດ, ກົດໝາຍ, ນະໂຍບາຍຂອງພັກ ແລະ ລັດ.
  - ສາມາດວິເຄາະ, ຕີລາຄາບັນດາທັດສະນະຄຸນສົມບັດ ເຂົ້າໃນການດຳລົງຊີວິດປະຈຳວັນຢູ່ໃນຄອບຄົວ, ໂຮງຮຽນ ແລະ ສັງຄົມ.
  - ສາມາດປັບປຸງ, ແກ້ໄຂຕົນເອງດ້ວຍຄວາມສາມາດ ແລະ ມີຄວາມຮອບຄອບ
- **ດ້ານທັດສະນະຄະຕິ ແລະ ຄ່ານິຍົມ**
  - ຮັກສິ່ງທີ່ດີງາມ, ຮັກບ້ານເກີດ, ຮັກປະເທດຊາດ, ປົກປັກຮັກສາ ແລະ ຜັນຂະຫຍາຍມູນເຊື້ອອັນດີງາມຂອງຊາດ.
  - ເຊື່ອໝັ້ນຕໍ່ການນຳພາຂອງພັກ, ເຄົາລົບ ແລະ ປະຕິບັດກົດໝາຍຂອງລັດວາງອອກ
  - ເຝິກຝົນຫຼໍ່ຫຼອມຕົນເອງໃຫ້ມີຄຸນສົມບັດ ສິນທຳປະຕິວັດ, ເປັນພົນລະເມືອງດີມີຄວາມມຸ້ງຫວັງ ແລະ ມີເປົ້າໝາຍໃນການດຳລົງຊີວິດ.
  - ຕ້ານການປະພຶດທີ່ບໍ່ດີໃນການເຮັດວຽກງານ ແລະ ການດຳລົງຊີວິດ.

## 3. ເນື້ອໃນຕົ້ນຕໍ

**ພາກທີI : ການປະກອບສ້າງໂລກະທັດວັດຖຸນິຍົມ ແລະ ວິທີວິທະຍາ**

ບົດທີ1 : ໂລກະທັດວັດຖຸນິຍົມ ແລະ ວິທີວິທະຍາ

ບົດທີ2 : ໂລກວັດຖຸຄົງຕົວພາວະວິໄສ

ບົດທີ3 : ການເຄື່ອນເໜັງ ແລະ ການຂະຫຍາຍຕົວຂອງໂລກວັດຖຸ

ບົດທີ4 : ຕົ້ນກຳເນີດການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ

ບົດທີ5 : ຮູບແບບການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ

ບົດທີ6 : ທ່າອ່ຽງຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ

ບົດທີ7 : ພຶດຕິກຳ ແລະ ບົດບາດຂອງພຶດຕິກຳຕໍ່ກັບຄວາມຮັບຮູ້

ບົດທີ8 : ການຄົງຕົວຂອງສັງຄົມ ແລະ ສະຕິສັງຄົມ

ບົດທີ9 : ມະນຸດເປັນຜູ້ສ້າງປະຫວັດສາດ ແລະ ເປັນເປົ້າໝາຍພັດທະນາສັງຄົມ

**ພາກທີII** : **ຄຸນສົມບັດ**

ບົດທີ10 : ຄວາມສຳນຶກກ່ຽວກັບຄຸນສົມບັດ
ບົດທີ11 : ມາດຖານພື້ນຖານຂອງຄຸນສົມບັດ
ບົດທີ12 : ການພັດທະນາຕົນເອງໃຫ້ສົມບູນ
ບົດທີ13 : ການສ້າງຄອບຄົວ
ບົດທີ14 : ຊຸມຊົນ
ບົດທີ15 : ພາລະກິດກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ
ບົດທີ16 : ບາງບັນຫາຈະຕ້ອງແກ້ໄຂໃນສັງຄົມໂລກ

## 4. ແນະນຳວິທີສິດສອນ ແລະ ກິດຈະກຳການສອນ

**ວິທີສິດສອນ**

ເຕັກນິກການສອນແມ່ນຂະບວນການຕ່າງໆ ທີ່ຄູນຳມາໃຊ້ໃນການສິດສອນເພື່ອໃຫ້ການຮຽນ-ການສອນມີປະສິດທິພາບໃນດ້ານຄວາມຮູ້, ຄວາມເຂົ້າໃຈ ແລະ ສາມາດປ່ຽນແປງພຶດຕິກຳພ້ອມທັງເກີດການຮຽນຮູ້ໄດ້ສຶກສາຄົ້ນຄວ້າ ແລະ ປັບຕົວໃຫ້ຖືກຕ້ອງເຂົ້າໃນການດຳລົງຊີວິດ

**ກິດຈະກຳການສອນ**

ເຕັກນິກການສອນມີຫຼາຍວິທີ ແລະ ຫຼາຍຮູບແບບແຕກຕ່າງກັນສຳລັບວິຊາສຶກສາພົນລະເມືອງຂໍສະເໜີດັ່ງນີ້:

ການສອນແບບບັນຍາຍຖາມ-ຕອບ, ການສອນແບບລະດົມສະໝອງ, ການສອນແບບສົນທະນາກຸ່ມ, ການສອນແບບໄປທັດສະນະສຶກສາ, ການສອນແບບຫຼິ້ນເກມ, ການສອນແບບແກ້ໄຂບັນຫາ ແລະ ການສອນແບບໂຄງການນ້ອຍ.

## 5. ແນະນຳການນຳໃຊ້ສື່ການສອນ

**ສື່ການສອນ** ແມ່ນອຸປະກອນທີ່ນຳໃຊ້ເຂົ້າໃນການຮຽນ-ການສອນ ເຊິ່ງປະກອບມີຫຼາຍຢ່າງສາມາດປະເມີນໄດ້ຕາມຈຸດປະສົງ ແລະ ເໝາະສົມກັບເວລາ ໂດຍສະເພາະແມ່ນວິຊາສຶກສາພົນລະເມືອງຈະເນັ້ນການຮຽນ-ການສອນດັ່ງນີ້:

**ສື່ປະຕິສຳພັນ** : ແມ່ນການປາກເວົ້າ, ການຖາມ-ຕອບ, ການອະທິບາຍ, ການເຮັດກິດຈະກຳເປັນກຸ່ມ, ການເຮັດໂຄງການຮ່ວມກັນ, ການເຊີນບຸກຄະລາກອນມາໃຫ້ຄວາມຮູ້ບົດບາດ

ສົມມຸດ, ການສ້າງສະຖານະການຈຳລອງ... ແຕ່ໃຊ້ຫຼາຍແມ່ນການສະແດງລະຄອນ, ຈັດກຸ່ມ, ຫຼິ້ນເກມແຂ່ງຂັນ, ສາທິດ ແລະ ການສຶກສານອກສະຖານທີ່.

**ສື່ຂອງຈິງ (ວັດຖຸປະຈັກຕາ)** : ແມ່ນລວມທັງສື່ທີ່ມີຊີວິດ ແລະ ບໍ່ມີຊີວິດເຊັ່ນ: ສະຖານທີ່, ສະພາບແວດລ້ອມ ແລະ ເຫດການຕ່າງໆ ນັບທັງບັນຍາກາດໃນຫ້ອງຮຽນ ແລະ ທຸກສິ່ງທຸກຢ່າງທີ່ຢູ່ອ້ອມຂ້າງພວກເຮົາ ກໍລ້ວນແຕ່ມີຜົນປະໂຫຍດຕໍ່ການຮຽນ-ການສອນສາມາດບັນລຸຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້.

**ສື່ສິ່ງພິມ** : ເປັນສື່ທີ່ໃຊ້ຢ່າງຫຼວງຫຼາຍເຊັ່ນ: ປຶ້ມແບບຮຽນ, ຄູ່ມືຄູ, ໜັງສືພິມ, ວາລະສານ, ຂ່າວສານ, ເອກະສານ...

**ສື່ໂສດທັດສະນຸອຸປະກອນ** : ເປັນສື່ປະເພດຮູບນິ້ງ, ຮູບເຄື່ອນໄຫວ, ຮູບຖ່າຍ, ຮູບແຕ້ມ, ຮູບກຣາຟິກ, ແຜ່ນພູມ, ຕາຕະລາງ, ສະໄລ, ຮູບເງົາ, ວີດີໂອ ແລະ ສຽງຂອງຜູ້ສອນເປັນສື່ ເຊິ່ງເປັນສຽງທຳມະຊາດ, ຕະຫຼອດຮອດສຽງວິທະຍຸ, ເທັບ ແລະ ແຜ່ນສຽງ.

**ສື່ປະເພດຄອມພິວເຕີ** : ແມ່ນສຳລັບໃຫ້ນັກຮຽນຊອກເອົາຄວາມຮູ້ຕ່າງໆ ທາງອິນເຕີເນັດ ແລະ ເວັບໄຊຕ່າງໆ ແລະ ໃຫ້ນັກຮຽນໃຊ້ຄອມພິວເຕີເປັນ.

ສື່ທີ່ສະເໜີມາຂ້າງເທິງນັ້ນຍັງບໍ່ພຽງພໍ, ສະນັ້ນ ການສອນຈະຕ້ອງໄດ້ຄົ້ນຄວ້າຊອກຫາວິທີໃນການນຳໃຊ້ສື່ຕື່ມອີກ ເພື່ອຈັດການຮຽນ-ການສອນຂອງທ່ານໃຫ້ເໝາະສົມກັບເນື້ອໃນ ແລະ ບົດບາດຂອງວິຊາ.

## 6. ການແນະນຳການວັດ ແລະ ປະເມີນຜົນ

ແມ່ນການນຳໃຊ້ ຫຼື ຊອກຫາຈຳນວນປະລິມານ, ອັນດັບ, ລາຍລະອຽດຂອງຄຸນລັກສະນະພຶດຕິກຳ, ຄວາມສາມາດຂອງນັກຮຽນ.

- **ການວັດ ແລະ ປະເມີນຜົນມີ 3 ໄລຍະຄື** :

**ການປະເມີນຜົນກ່ອນການຮຽນ**: ແມ່ນເພື່ອກວດສອບຄວາມຮູ້ພື້ນຖານ ແລະ ທັດສະນະເບື້ອງຕົ້ນຂອງນັກຮຽນ.

**ການປະເມີນຜົນລະຫວ່າງການຮຽນ**: ແມ່ນເພື່ອໃຫ້ນັກຮຽນຮູ້ຜົນການຮຽນຂອງນັກຮຽນ ແລະ ເປັນການປະເມີນຜົນຕາມແຕ່ລະໄລຍະວ່າ: ໄດ້ຕາມຈຸດປະສົງຂອງການຮຽນທີ່ໄດ້ກຳນົດໄວ້ໃນແຕ່ລະຊັ້ນຮຽນ ຫຼື ບໍ່ ແລະ ເພື່ອເປັນການພັດທະນາການຮຽນຂອງນັກຮຽນດີຂຶ້ນ.

**ການປະເມີນຜົນທ້າຍການຮຽນ**: ແມ່ນການກວດກາທ້າຍບົດ ແລະ ການເສັງທ້າຍພາກຮຽນ ຫຼື ເສັງຈົບຊັ້ນວ່າໄດ້ຮັບຜົນດີຫຼາຍ ຫຼື ໜ້ອຍພຽງໃດ, ສູງ ຫຼື ຕ່ຳກວ່າແຜນການທີ່ໄດ້ກຳນົດໄວ້ແນວໃດ ແລະ ຄວາມຮູ້ຂອງນັກຮຽນໄດ້ຕາມຈຸດປະສົງທີ່ໄດ້ກຳນົດໄວ້ ຫຼື ບໍ່ ນອກຈາກນັ້ນ ການປະເມີນຜົນຍັງມີການສັງເກດນັກຮຽນຈາກ: ການຕອບຄຳຖາມ, ການອະທິບາຍບົດຮຽນ, ການວິເຄາະ, ວິໄຈເນື້ອໃນບົດຮຽນ, ການສົນທະນາກຸ່ມ, ການສະຫຼຸບບົດຮຽນ, ການເຮັດບົດເຝິກຫັດ ແລະ ການເຮັດວຽກບ້ານ. ນອກຈາກນີ້ການປະເມີນກໍໄດ້ປະເມີນຈາກການຕອບຄຳຖາມຂອງນັກຮຽນຕາມການອອກຂໍ້ສອບຂອງຄູ, ເຊິ່ງການອອກຂໍ້ສອບປະກອບມີ 2 ວິທີຄື: ອັດຕະໄນ ແລະ ປະລະໄນ.

## 7. ແນະນຳການສ້າງແຜນການສອນປະຈຳປີ

| ພາກຮຽນ | ເດືອນ | ອາທິດ | ຊື່ພາກ/ບົດ | ຈ/ນຊ/ມ ຕໍ່ອາທິດ | ໝາຍເຫດ |
|---|---|---|---|---|---|
| I | 9 | 1 | ພາກທີI: ການປະກອບສ້າງໂລກະທັດວັດຖຸນິຍົມ ແລະ ວິທີວິທະຍາ<br>ບົດທີ1: ໂລກະທັດ ແລະ ວິທີສັດຈະວິພາກວັດຖຸນິຍົມ | 1 | |
| | 9 | 2 | ບົດທີ1:ໂລກະທັດ ແລະ ວິທີສັດຈະວິພາກວັດຖຸນິຍົມ (ຕໍ່) | 1 | |
| | 9 | 3 | ບົດທີ2: ໂລກວັດຖຸຄົງຕົວພາວະວິໄສ | 1 | |
| | 9 | 4 | ບົດທີ2: ໂລກວັດຖຸຄົງຕົວພາວະວິໄສ (ຕໍ່) | 1 | |
| | 10 | 1 | ບົດທີ3: ການເຄື່ອນເໜັງ ແລະ ການຂະຫຍາຍຕົວຂອງໂລກວັດຖຸ | 1 | |
| | 10 | 2 | ບົດທີ4: ຕົ້ນກຳເນີດການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ | 1 | |
| | 10 | 3 | ບົດທີ4: ຕົ້ນກຳເນີດການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ (ຕໍ່) | 1 | |

| | | | | | |
|---|---|---|---|---|---|
| | 10 | 4 | ບົດທີ5: ຮູບແບບການເຄື່ອນເໜັງ, ການຂະ ຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ | 1 | |
| | 11 | 1 | ບົດທີ6: ທ່າອ່ຽງຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ | 1 | |
| | 11 | 2 | ບົດທີ7: ພຶດຕິກຳ ແລະ ບົດບາດຂອງພຶດຕິ ກຳຕໍ່ກັບຄວາມຮັບຮູ້ | 1 | |
| | 11 | 3 | ບົດທີ7: ພຶດຕິກຳ ແລະ ບົດບາດຂອງພຶດຕິ ກຳຕໍ່ກັບຄວາມຮັບຮູ້ (ຕໍ່) | 1 | |
| | 11 | 4 | ບົດທີ8: ການຄົງຕົວຂອງສັງຄົມ ແລະ ສະ ຕິສັງຄົມ | 1 | |
| | 12 | 1 | ບົດທີ8: ການຄົງຕົວຂອງສັງຄົມ ແລະ ສະ ຕິສັງຄົມ (ຕໍ່) | 1 | |
| | 12 | 2 | ບົດທີ8: ການຄົງຕົວຂອງສັງຄົມ ແລະ ສະ ຕິສັງຄົມ (ຕໍ່) | 1 | |
| | 12 | 3 | ບົດທີ9: ມະນຸດເປັນຜູ້ສ້າງປະຫວັດສາດ ແລະເປັນເປົ້າໝາຍພັດທະນາສັງຄົມ | 1 | |
| | 12 | 4 | ບົດທີ9: ມະນຸດເປັນຜູ້ສ້າງປະຫວັດສາດ ແລະເປັນເປົ້າໝາຍພັດທະນາສັງຄົມ (ຕໍ່) | 1 | |
| | 1 | 1 | ທວນຄືນ | 1 | |
| | 1 | 2 | ສອບເສັງ | 1 | |
| | 1 | 3 | ກິດຈະກຳໂຮງຮຽນ | 1 | |
| | 1 | 4 | ພັກພາກຮຽນ | 1 | |
| | 2 | 1 | ພາກທີII: ຄຸນສົມບັດ<br>ບົດທີ10: ຄວາມສຳນຶກກ່ຽວກັບຄຸນສົມບັດ | 1 | |
| | 2 | 2 | ບົດທີ10: ຄວາມສຳນຶກກ່ຽວກັບຄຸນສົມບັດ (ຕໍ່) | 1 | |
| | 2 | 3 | ບົດທີ11: ມາດຖານພື້ນຖານຂອງຄຸນສົມບັດ | 1 | |

| | | | | | |
|---|---|---|---|---|---|
| II | 2 | 4 | ບົດທີ11: ມາດຖານພື້ນຖານຂອງຄຸນສົມບັດ (ຕໍ່) | 1 | |
| | 3 | 1 | ບົດທີ11: ມາດຖານພື້ນຖານຂອງຄຸນສົມບັດ (ຕໍ່) | 1 | |
| | 3 | 2 | ບົດທີ12: ການພັດທະນາຕົນເອງໃຫ້ສົມບູນ | 1 | |
| | 3 | 3 | ບົດທີ12: ການພັດທະນາຕົນເອງໃຫ້ສົມບູນ (ຕໍ່) | 1 | |
| | 3 | 4 | ບົດທີ13: ການສ້າງຄອບຄົວ | 1 | |
| | 4 | 1 | ບົດທີ13: ການສ້າງຄອບຄົວ (ຕໍ່) | 1 | |
| | 4 | 2 | ບົດທີ14: ຊຸມຊົນ | 1 | |
| | 4 | 3 | ບົດທີ14: ຊຸມຊົນ (ຕໍ່) | 1 | |
| | 4 | 4 | ບົດທີ15: ພາລະກິດກໍ່ສ້າງ ແລະ ປົກປັກ ຮັກສາປະທເດຊາດ | 1 | |
| | 5 | 1 | ບົດທີ15: ພາລະກິດກໍ່ສ້າງ ແລະ ປົກປັກ ຮັກສາປະທເດຊາດ (ຕໍ່) | 1 | |
| | 5 | 2 | ບົດທີ16: ບາງບັນຫາຈະຕ້ອງແກ້ໄຂໃນສັງ ຄົມໂລກ | 1 | |
| | 5 | 3 | ບົດທີ16: ບາງບັນຫາຈະຕ້ອງແກ້ໄຂໃນສັງ ຄົມໂລກ (ຕໍ່) | 1 | |
| | 5 | 4 | ບົດທີ16: ບາງບັນຫາຈະຕ້ອງແກ້ໄຂໃນສັງ ຄົມໂລກ (ຕໍ່) | 1 | |
| | 6 | 1 | ທວນຄືນ | 1 | |
| | 6 | 2 | ມ.4 ເສັງຈົບຊັ້ນ | 1 | |
| | 6 | 3 | ມ.7 ເສັງຈົບຊັ້ນ | 1 | |

8. ບົດສອນຕົວຢ່າງ

# ພາກທີ I ຄວາມຮູ້ພື້ນຖານກ່ຽວກັບປັດຊະຍາ ແລະ ວິທີວິທະຍາ

## ບົດທີ 5 ຮູບແບບການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ

ເວລາ1ຊົ່ວໂມງ

**1. ຈຸດປະສົງ**

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍດ້ານປະລິມານ ແລະ ຄຸນນະພາບຂອງສິ່ງວັດຖຸ, ຄວາມແຕກຕ່າງລະຫວ່າງການປ່ຽນແປງດ້ານປະລິມານກັບດ້ານຄຸນນະພາບ, ປັບປຸງ ແລະ ພັດທະນາຕົນເອງທາງດ້ານຄວາມຮູ້, ຄວາມສາມາດ ແລະ ຄຸນສົມບັດສິນທຳປະຕິວັດ ເພື່ອໃຫ້ກາຍເປັນຊັບພະຍາກອນທີ່ດີຂອງຊາດ.

| ຈຸດປະສົງ | ເນື້ອໃນ | ກິດຈະກຳຄູ | ກິດຈະກຳນັກຮຽນ | ເວລາ | ສື່ການຮຽນ-ການສອນ | ວັດປະເມີນຜົນ |
|---|---|---|---|---|---|---|
| | | • ຂັ້ນນຳເຂົ້າສູ່ບົດຮຽນ | | | | |

| | | | | | | |
|---|---|---|---|---|---|---|
| - ເພື່ອຢັ່ງເບິ່ງຄວາມຮູ້ເກົ່າທີ່ໄດ້ຮຽນຜ່ານມາ | - ຂໍ້ຂັດແຍ່ງແມ່ນການປະທະກັນ, ຕ້ານກັນ ໃນປັດຊະຍາມາກ-ເລນິນຂໍ້ຂັດແຍ່ງແມ່ນຄວາມເປັນເອກະພາບ ຢູ່ໃນສິ່ງວັດຖຸດຽວກັນ ເຊິ່ງໃນນັ້ນມີ2 ດ້ານກົງກັນຂ້າມ ເປັນເອກະພາບກັນ ແລະ ທັງຕໍ່ສູ້ກັນ | - ທວນຄືນບົດຮຽນຜ່ານມາ<br>- ຄູຕັ້ງຄຳຖາມ:<br>+ ຂໍ້ຂັດແຍ່ງແມ່ນຫຍັງ?<br>- ໃຫ້ນັກຮຽນຄົ້ນຄວ້າ ແລະ ຕອບຄຳຖາມ<br>- ຄູສະຫຼຸບຄຳຕອບແລ້ວລ້ຽວເຂົ້າສູ່ບົດຮຽນ | - ນັກຮຽນຄົ້ນຄວ້າ ແລະ ຕອບຄຳຖາມ 1-2 ຄົນ | 5 | ປຶ້ມແບບຮຽນວິຊາສຶກສາພົນລະເມືອງ ຂັ້ນ ມ.5 | -ສັງເກດການຕອບຄຳຖາມຂອງນັກຮຽນ |
| | ບົດທີ5<br>ຮູບແບບການ ເຄື່ອນເໜັງ,ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ | • ຂັ້ນສອນ<br>1. ສົນທະນາເປັນກຸ່ມກ່ຽວກັບຄຸນນະພາບ ແລະ ປະລິມານຂອງສິ່ງວັດຖຸ | -ນັກຮຽນຈັດກັນ | 40 | - ປຶ້ມແບບ | |

| | | | | | | |
|---|---|---|---|---|---|---|
| - ເພື່ອໃຫ້ນັກຮຽນເຂົ້າໃຈຄຸນນະພາບຂອງສິ່ງວັດຖຸ | ປາກົດການ<br>1 ຄຸນນະພາບແມ່ນຫຍັງ<br>2 ປະລິມານແມ່ນຫຍັງ? | - ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ<br>- ຄູຕັ້ງຄຳຖາມ<br>+ ຄຸນນະພາບແມ່ນຫຍັງ? ຈົ່ງຍົກຕົວຢ່າງ<br>+ ຄຸນນະພາບມີລັກສະນະຫຍັງແດ່?<br>+ ປະລິມານແມ່ນຫຍັງ? ຈົ່ງຍົກຕົວຢ່າງ<br>+ ປະລິມານມີລັກສະນະຫຍັງແດ່?<br>- ຄູໃຫ້ແຕ່ລະກຸ່ມຄົ້ນຄວ້າ, ສັງລວມຄຳຕອບ ແລ້ວໃຫ້ຕາງໜ້າກຸ່ມຂຶ້ນລາຍງາຍ, ຄູສະຫຼຸບຄືນ<br>+ ຄຸນນະພາບແມ່ນຄວາມສຳນຶກທີ່ຊີ້ບອກລັກສະນະກຳນົດພາຍໃນ ທີ່ມີມາແຕ່ເດີມຂອງສິ່ງວັດຖຸ ແລະ ປາກົດການ...<br>+ ຄຸນນະພາບຂອງສິ່ງວັດຖຸ ແລະ ປາກົດການ ມີລັກສະນະພາວະວິໄສສະເພາະໂດຍບໍ່ຂຶ້ນກັບຈິດໃຈຂອງຄົນເຮົາ | ເປັນ ກຸ່ມ<br>- ແຕ່ລະກຸ່ມຄົ້ນຄວ້າຕາມຄຳຖາມ“<br>- ຫົວໜ້າກຸ່ມສັງລວມບົດຮຽນເປັນເອກະພາບເພື່ອຂຶ້ນລາຍງານ | | ຮຽນວິຊາ ສຶກສາພົນລະເມືອງຂັ້ນມ.5 | |

| | | | | | | |
|---|---|---|---|---|---|---|
| - ເພື່ອໃຫ້ນັກຮຽນເຂົ້າໃຈກ່ຽວກັບປະລິມານຂອງສິ່ງວັດຖຸ | 3. ການພົວພັນ | + ປະລິມານແມ່ນຄວາມສຳນຶກທີ່ຊີ້ບອກລັກສະນະປະຈຳຕົວທີ່ມີມາແຕ່ເດີມຂອງສິ່ງວັດຖຸ, ປະລິມານຊີ້ບອກຂະໜາດຄື: ໃຫຍ່, ນ້ອຍ, ຕ່ຳ, ສູງ...<br>+ ປະລິມານຂອງສິ່ງວັດຖຸມີລັກສະ ນະພາວະວິໄສ ເພາະມັນແມ່ນລັກສະນະກຳນົດພາຍໃນ ແລະ ແມ່ນລັກສະນະປະຈຳຕົວທີ່ມີມາແຕ່ເດີມ ໂດຍບໍ່ຂຶ້ນກັບຈິດໃຈຂອງຄົນເຮົາ.<br>2. ສົນທະນາພົດທ້ອງກ່ຽວກັບການປ່ຽນແປງດ້ານປະລິມານໄປສູ່ການປ່ຽນແປງດ້ານຄຸນນະພາບຂອງສິ່ງວັດຖຸ ແລະ ຄຸນນະພາບໃໝ່ ແລະ ປະ ລິມານໃໝ່<br>- ຄູຕັ້ງຄຳຖາມ<br>+ ປະລິມານ ແລະ ຄຸນນະພາບມີການ | | | | |

| | | | | | | |
|---|---|---|---|---|---|---|
| | ລະຫວ່າງການປ່ຽນແປງທາງດ້ານປະລິມານ ແລະ ຄຸນນະພາບ<br>3.1 ການປ່ຽນແປງດ້ານປະລິມານໄປສູ່ການປ່ຽນແປງດ້ານຄຸນນະພາບ | ພົວພັນກັນແນວໃດ?<br>+ ການປ່ຽນແປງທາງດ້ານປະລິມານ ຈະນຳໄປສູ່ການປ່ຽນແປງດ້ານໃດແດ່?<br>+ ສິ່ງວັດຖຸໃດໜຶ່ງມີການປ່ຽນແປງຈາກຄຸນນະພາບເກົ່າໄປສູ່ຄຸນນະພາບ ໃໝ່ ສິ່ງວັດຖຸນັ້ນຈະເກີດມີປະລິມານ ໃໝ່ ຫຼື ບໍ່?<br>- ຄູໃຫ້ນັກຮຽນສົນທະນາກັນກັບໝູ່ນັ່ງຂ້າງ ຈາກນັ້ນໃຫ້ອາສາສະໝັກຕອບຕາມລຳດັບ<br>- ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນເພື່ອໃຫ້ເປັນເອກະພາບ<br>+ ປະລິມານ ແລະ ຄຸນນະພາບມີການພົວພັນກັນຢ່າງສັດຈະວິພາກ ແລະ ພ້ອມກັນຄົງຕົວຢູ່ໃນສິ່ງວັດຖຸ ແລະ ປາກົດການດຽວກັນ, ບໍ່ມີສິ່ງວັດຖຸໃດຄົງຕົວພຽງແຕ່ປະລິມານ ແລະ ບໍ່ມີສິ່ງວັດຖຸໃດຄົງຕົວຢູ່ແຕ່ດ້ານຄຸນນະພາບ | | | | |

| | | | | | | |
|---|---|---|---|---|---|---|
| | | + ການປ່ຽນແປງດ້ານປະລິມານ ຈະນຳໄປສູ່ການປ່ຽນແປງດ້ານຄຸນນະພາບຢ່າງແນ່ນອນ ໃນເມື່ອການປ່ຽນແປງດ້ານປະລິມານຫາກເຖິງຈຸດຂີດຂັ້ນຂອງມັນແລ້ວ.<br>+ ສິ່ງວັດຖຸໃດໜຶ່ງມີການປ່ຽນແປງຈາກຄຸນນະພາບເກົ່າໄປສູ່ຄຸນນະພາບໃໝ່, ສິ່ງວັດຖຸນັ້ນຈະເກີດປະລິມານໃໝ່ແນ່ນອນອາດຈະໄວ ຫຼື ຊ້າເທົ່ານັ້ນ | | | | |
| | | • ຂັ້ນປະເມີນ<br>- ຄູອາດຈະຕັ້ງຄຳຖາມໃນແຕ່ລະຫົວຂໍ້ທີ່ຮຽນຜ່ານມາ ເພື່ອປະເມີນເບິ່ງ ຄວາມຮັບຮູ້, ຄວາມເຂົ້າໃຈຂອງນັກ ຮຽນ<br>+ ຄຸນນະພາບແມ່ນຫຍັງ?<br>+ ປະລິມານແມ່ນຫຍັງ?<br>+ ການປ່ຽນແປງດ້ານປະລິມານຈະນຳໄປ | | 5 | | |

| | | | | | | |
|---|---|---|---|---|---|---|
| | | ສູ່ການປ່ຽນແປງດ້ານຄຸນນະ ພາບ<br>ແນວໃດ?<br>- ຄູໃຫ້ນັກຮຽນຈຳນວນໜຶ່ງຕອບຄຳຖາມ<br>ຖ້ານັກຮຽນຕອບບໍ່ຈະແຈ້ງຄູອະ ທິບາຍ<br>ເພີ່ມເຕີມ | | | | |
| | | • ຂັ້ນສະຫຼຸບ<br>- ຄູສະຫຼຸບຄືນເນື້ອໃນສຳຄັນແຕ່ລະຂໍ້<br>ໃຫ້ນັກຮຽນເຂົ້າໃຈ ແລະ ສັງລວມເປັນ<br>ບົດຮຽນໃຫ້ນັກຮຽນຈົດເອົາ | | 5 | | |
| | | • ຂັ້ນປັບປຸງ<br>- ຄູແນະນຳນັກຮຽນຊອກອ່ານເອກະ ສານ<br>ທີ່ກ່ຽວຂ້ອງກັບບົດຮຽນ | | 5 | | |
| | | • ຂັ້ນວັດ-ປະເມີນຜົນ<br>ສັງເກດນັກຮຽນຈາກ:<br>+ ການຕອບຄຳຖາມ<br>+ ການຮ່ວມກິດຈະກຳກຸ່ມຂອງນັກຮຽນ | | | | |

| | | | | | | |
|---|---|---|---|---|---|---|
| | | **+ ການຂຶ້ນລາຍງານບົດ**<br>**+ ການເຮັດບົດວຽກບ້ານ** | | | | |



# ພາກທີ I ການປະກອບສ້າງໂລກະທັດວັດຖຸນິຍົມ ແລະ ວິທີວິທະຍາ

## ບົດທີ 1 ໂລກະທັດ ແລະ ວິທີສັດຈະວິພາກວັດຖຸນິຍົມ

**ເວລາ 2 ຊົ່ວໂມງ**

### 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ບອກຄວາມໝາຍ, ພາລະບົດບາດໂລກະທັດ ແລະ ວິທີວິທະຍາຂອງປັດຊະຍາ
- ອະທິບາຍລັດທິວັດຖຸນິຍົມສັດຈະວິພາກ ແມ່ນຄວາມເປັນເອກະພາບກາຍອິນຊີລະຫວ່າງໂລກະທັດວັດຖຸນະຍົມ ແລະ ວິທີສັດຈະວິພາກ
- ຈຳແນກໂລກະທັດວັດຖຸນິຍົມ ແລະ ໂລກະທັດຈິດຕະນິຍົມ
- ກຳໄດ້ເນື້ອໃນພື້ນຖານ ວິທີສັດຈະວິພາກ ແລະ ວິທີອະພິທຳ
- ຕີລາຄາບາງປາກົດການຂອງທັດສະນະວັດຖຸນິຍົມ ແລະ ຈິດຕະນິຍົມ

### 2. ເນື້ອໃນ

- ໂລກະທັດ ແລະ ວິທີວິທະຍາ
  + ປັດຊະຍາແມ່ນຫຍັງ
  + ບົດບາດຂອງໂລກະທັດ ແລະ ວິທີຂອງປັດຊະຍາ
  + ວິທີສັດຈະວິພາກ ແລະ ວິທີອະພິທຳ
- ລັດທິວັດຖຸນິຍົມສັດຈະວິພາກ, ຄວາມເປັນເອກະພາບກາຍອິນຊີ ລະຫວ່າງ ໂລກະທັດວັດຖຸນິຍົມ ແລະ ວິທີສັດຈະວິພາກ
  + ການກຳເນີດປັດຊະຍາ
  + ການກຳເນີດປັດຊະຍາມາກ

## 3. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາສຶກສາພົນລະເມືອງຊັ້ນ ມ.5
- ສ້າງຕາຕະລາງປຽບທຽບກ່ຽວກັບການຄົ້ນຄວ້າຂອງປັດຊະຍາ ແລະ ວິຊາວິທະຍາສາດອື່ນໆ
- ຕາຕະລາງປຽບທຽບກ່ຽວກັບໂລກະທັດວັດຖຸນິຍົມ ແລະ ໂລກະທັດຈິດຕະນິຍົມ
- ຕະຕະລາງປຽບທຽບກ່ຽວກັບວິທີສັດຈະວິພາກ ແລະ ວິທີອະພິທຳ

**ຕົວຢ່າງ**

1. ຕາຕະລາງປຽບທຽບກ່ຽວກັບເປົ້າໝາຍຄົ້ນຄວ້າຂອງປັດຊະຍາ ແລະ ວິຊາວິທະຍາສາດອື່ນໆ

| | ປັດຊະຍາ | ວິຊາວິທະຍາສາດອື່ນໆ |
|---|---|---|
| ບັນດາກົດເກນ | | |
| ຕົວຢ່າງ | | ຄະນິດສາດ |

2. ຕາຕະລາງປຽບທຽບກ່ຽວກັບໂລກະທັດວັດຖຸນິຍົມ ແລະ ໂລກະທັດຈິດຕະນິຍົມ

| | ໂລກະທັດວັດຖຸນິຍົມ | ໂລກະທັດຈິດຕະນິຍົມ |
|---|---|---|
| ການພົວພັນລະຫວ່າງວັດຖຸ ແລະ ສະຕິ | | |
| ຕົວຢ່າງ | | |

3. ຕາຕະລາງປຽບທຽບກ່ຽວກັບວິທີສັດຈະວິພາກ ແລະ ວິທີອະພິທຳ

| | ວິທີສັດຈະວິພາກ | ວິທີອະພິທຳ |
|---|---|---|
| ການພົວພັນລະຫວ່າງບັນດາວັດຖຸ, ປາກົດການ, ການເຄື່ອນເໜັງ ແລະ ການຂະຫຍາຍຕົວ | | |
| ຕົວຢ່າງ | | |

- ບົດເລື່ອງທີ່ເວົ້າເຖິງປັດຊະຍາ, ເລື່ອງເທບນິຍາຍ, ນິທານ, ຄຳສຸພາສິດ, ຄຳຜະຫຍາ (ຖ້າມີ)

## 4. ກິດຈະກຳການຮຽນ-ການສອນ

**ຊົ່ວໂມງທີ** 1

- ເພື່ອດຶງດູດນັກຮຽນເຂົ້າສູ່ບົດຮຽນຄູອາດຈະຕັ້ງຄຳຖາມ:
  + ໂລກເຮົາຢູ່ປະຈຸບັນເປັນແນວໃດ?
  + ໂລກເກີດມາຈາກໃສ? ອັນໃດເກີດເປັນໂລກ?
- ຄູໃຫ້ນັກຮຽນຕອບຕາມຄວາມເຂົ້າໃຈ
- ຄູຍົກຕົວຢ່າງກ່ຽວກັບໂລກະທັດວັດຖຸນິຍົມສັດຈະວິພາກ ຫຼື ອາດຈະຍົກເລື່ອງເທບນິຍາຍ ຫຼື ໃຫ້ນັກຮຽນອ່ານເລື່ອງ "ນໍ້າເຕົ້າປຸງ", "ກໍ່າພ້າຜີນ້ອຍ" (ໃນປຶ້ມແບບຮຽນ) ຫຼື ເລື່ອງອື່ນໆ (ຖ້າມີ)

**1. ສົນທະນາກ່ຽວກັບບົດບາດໂລກະທັດ ແລະ ວິທີວິທະຍາຂອງປັດຊະຍາ**

- ຄູອາດຈະໃຊ້ວິທີສິດສອນ ແບບຖາມ-ຕອບ ໂດຍຄູເປັນຜູ້ຕັ້ງຄຳຖາມ:
  + ປັດຊະຍາແມ່ນຫຍັງ?
  + ປັດຊະຍາຄົ້ນຄວ້າກ່ຽວກັບຫຍັງ?
- ຄູໃຫ້ນັກຮຽນຈຳນວນໜຶ່ງຕອບຄຳຖາມ

**ຄູສະຫຼຸບ**

- ປັດຊະຍາແມ່ນທິດສະດີວິທະຍາສາດ, ແມ່ນໂລກະທັດທີ່ສ້າງຄວາມຮູ້ ແລະ ບົດບາດແຫ່ງການດຳລົງຊີວິດຂອງໂລກມະນຸດ. ສະນັ້ນ, ປັດຊະຍາແມ່ນບັນດາທັດສະນະຄວາມສຳນຶກລວມກ່ຽວກັບໂລກ ແມ່ນໂລກະທັດຂອງຊົນຊັ້ນໜຶ່ງທີ່ແນ່ນອນ.
- ປັດຊະຍາແມ່ນວິຊາຮຽນໜຶ່ງທີ່ຊ່ວຍໃຫ້ພວກເຮົາຮຽນຮູ້ກ່ຽວກັບ:
  + ບົດບາດຂອງໂລກະທັດ ແລະ ວິທີວິທະຍາຂອງປັດຊະຍາ
  + ເນື້ອໃນພື້ນຖານຂອງໂລກະທັດວັດຖຸນິຍົມ ແລະ ວິທີສັດຈະວິພາກ

  ວິທີສັດຈະວິພາກວັດຖຸນິຍົມ ແມ່ນທິດສະດີຂອງລັດທິມາກ-ເລນິນແມ່ນທິດຊີ້ນຳກ່ຽວກັບການເບິ່ງບັນຫາ, ສາຍກ່ຽວພັນ, ການເຄື່ອນເໜັງ ແລະ ການຂະຫຍາຍຕົວ.

ສະນັ້ນ, ປັດຊະຍາແມ່ນຄົ້ນຄວ້າບັນດາກົດເກນລວມ, ກົດເກນທົ່ວໄປຂອງການເຄື່ອນເໜັງ ແລະ ການຂະຫຍາຍຕົວຂອງທຳມະຊາດ-ສັງຄົມ ແລະ ຈິນຕະນາການ, ສ່ວນວິຊາວິທະຍາສາດອື່ນໆ ແມ່ນຄົ້ນຄ້ວາກົດເກນສະເພາະຂອງໃຜມັນເຊັ່ນ:

+ ວິຊາປະຫວັດສາດຄົ້ນຄວ້າກ່ຽວກັບປະຫວັດສາດຂອງມວນມະນຸດ
+ ວິຊາເຄມີສາດຄົ້ນຄວ້າກ່ຽວກັບຮ່າງກາຍ, ລັກສະນະ ແລະ ການປ່ຽນແປງຂອງທາດຕ່າງໆ

**2. ສົນທະນາກຸ່ມກ່ຽວກັບໂລກະທັດວັດຖຸນິຍົມ ແລະ ໂລກະທັດຈິດຕະນິຍົມ**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູແບ່ງໃຫ້ແຕ່ລະກຸ່ມຄົ້ນຄວ້າລະອຽດກ່ຽວກັບ:
  + ໂລກະທັດແມ່ນຫຍັງ?
  + ໂລກແມ່ນເທວະດາ, ຟ້າແຖນ ຫຼື ພະຜູ້ເປັນເຈົ້າສ້າງຂຶ້ນ ຫຼື ບໍ່?
  + ໂລກເກີດຂຶ້ນໄດ້ແນວໃດ?
  + ມະນຸດເກີດມາຈາກໃສ ແລະ ມະນຸດສາມາດຮັບຮູ້ໂລກອ້ອມຂ້າງໄດ້ບໍ? ເພາະເຫດໃດ?
  + ວັດຖຸແມ່ນຫຍັງ?
  + ໂລກະທັດຈິດຕະນິຍົມແມ່ນແນວໃດ?
- ບັນຫາສຳຄັນໃນຫົວຂໍ້ນີ້ຢາກໃຫ້ນັກຮຽນກຳໄດ້ການຈັດປະເພດບັນດາຮູບຖານໂລກະທັດ (ໂລກະທັດວັດຖຸນິຍົມ ແລະ ໂລກະທັດຈິດຕະນິຍົມ). ໂດຍສະເພາະແມ່ນໃຫ້ເຂົ້າໃຈເນື້ອໃນຢູ່ໃນປຶ້ມແບບຮຽນ, ບໍ່ຈຳເປັນລົງເລິກຮູບຖານໂລກະທັດໃນປະຫວັດສາດ.
- ນັກຮຽນສົນທະນາ, ຄົ້ນຄ້ວາ ແລ້ວໃຫ້ຕ່າງໜ້າກຸ່ມຂຶ້ນສະເໜີ

**ຄູສະຫຼຸບ ...**

**ຊົ່ວໂມງທີ 2**

**3. ສົນທະນາກຸ່ມ ຫຼື ຄົ້ນຄວ້າລວມໝົດຫ້ອງ ກ່ຽວກັບວິທີສັດຈະວິພາກ ແລະ ວິທີອະພິທຳ**

- ຄູໃຫ້ນັກຮຽນຄົ້ນຄວ້າຄຳຖາມ
  + ວິທີ ແລະ ວິທີສັດຈະວິພາກແມ່ນຫຍັງ?
  + ວິທີອະພິທຳແມ່ນຫຍັງ?

- ໃນບົດນີ້ໃຫ້ນັກຮຽນກຳໄດ້ເນື້ອໃນພື້ນຖານຂອງວິທີສັດຈະວິພາກ ແລະ ວິທີອະພິທຳ, ກຳໄດ້ບາງລັກສະນະທີ່ເປັນສັນຍາລັກຂອງບັນດາປັດຊະຍາ ທີ່ຂຶ້ນກັບສອງປະເພດວິທີສັດຈະວິພາກ ໃນຂໍ້ນີ້ຈະບໍ່ລົງເລິກຄວາມໝາຍຂອງຄຳສັບ, "ວິທີ", ວິທີສັດຈະວິພາກ ແລະ ປະຫວັດສາດການຂະຫຍາຍຕົວ
- ຄູອາດຈະຍົກບາງເຫດການ ທີ່ມີເນື້ອໃນກ່ຽວກັບວິທີສັດຈະວິພາກ ເພື່ອຂະຫຍາຍການອະທິບາຍຂອງຄູ.

**ວິທີສັດຈະວິພາກ**: ແມ່ນວິທີການເບິ່ງບັນຫາ, ແກ້ໄຂບັນຫາຢູ່ໃນສາຍກ່ຽວພັນ, ເຄື່ອນເໜັງ ແລະ ຂະຫຍາຍຕົວຂອງທຳມະຊາດ-ສັງຄົມ ແລະ ຈິນຕະນາການທັງຊ່ວຍໃຫ້ຄົນເຮົາຮັບຮູ້, ເຂົ້າໃຈ ທາດແທ້ຂອງໂລກຢ່າງຖືກຕ້ອງ.

**4. ສົນທະນາກ່ຽວກັບລັດທິວັດຖຸນິຍົມສັດຈະວິພາກ, ຄວາມເປັນເອກະພາບລະຫວ່າງໂລກະທັດວັດຖຸນິຍົມ ແລະ ວິທີສັດຈະວິພາກ.**

- ຂໍ້ນີ້ເຂົ້າໃຈຍາກ, ຖ້າຄູອະທິບາຍໄດ້ດີ, ນັກຮຽນຈະເຂົ້າໃຈດີກ່ຽວກັບປັດຊະຍາມາກ-ເລນິນ ເຊິ່ງເປັນໄລຍະຂະຫຍາຍຕົວລະດັບສູງຂອງປະຫັວດສາດປັດຊະຍາ.
- ຂໍ້ນີ້ຕ້ອງໃຫ້ນັກຮຽນກຳໄດ້ຄວາມເປັນລະບົບປັດຊະຍາກ່ອນມາກບໍ່ເດັດຂາດ ເພາະບັນດາລະບົບປັດຊະຍານັ້ນບໍ່ທັນເປັນເອກະພາບກັນ ລະຫວ່າງ ໂລກະທັດວັດຖຸນິຍົມ ແລະ ວິທີສັດຈະວິພາກ ເດັ່ນສຸດໃນເວລານັ້ນແມ່ນປັດຊະຍາຂອງເຟີບາກ ແລະ ລະບົບປັດຊະຍາຂອງເຮເກນ.

ສະນັ້ນ, ມີແຕ່ປັດຊະຍາຂອງມາກ-ເລນິນເທົ່ານັ້ນ ທີ່ເປັນຈຸດສູງສຸດຂອງການຂະຫຍາຍຕົວ. ເພາະປັດຊະຍາມາກ-ເລນິນ ໄດ້ແກ້ໄຂຂໍ້ຈຳກັດກ່ຽວກັບໂລກະທັດວັດຖຸນິຍົມ ແລະ ວິທີອະພິທຳ, ພ້ອມກັນນັ້ນ ກໍສືບຕໍ່ປະດິດສ້າງ ແລະ ຂະຫຍາຍບັນດາປັດໄຈຂອງສິ່ງວັດຖຸ ແລະ ສັດຈະວິພາກ ຂອງບັນດາລະບົບປັດຊະຍາ ກ່ອນມາກ-ເລນິນ ໂດຍໄດ້ປະຕິບັດຄວາມເປັນເອກະພາບແບບກາຍອິນຊີ ລະຫວ່າງໂລກະທັດວັດຖຸນິຍົມ ແລະ ວິທີສັດຈະວິພາກ.

- ຄູອາດໃຊ້ຕາຕະລາງລຸ່ມນີ້ເພື່ອອະທິບາຍ.

| | ໂລກະທັດ | ວິທີສັດຈະວິພາກ | ຕົວຢ່າງ |
|---|---|---|---|
| ບັນດານັກວັດຖຸນິຍົມກ່ອນມາກ | | | |

| | | | |
|---|---|---|---|
| ບັນດານັກສັດຈະວິພາກ ກ່ອນມາກ | | | |
| ປັດຊະຍາມາກ-ເລນິນ | | | |

**ຄູອະທິບາຍ**

- ບັນດານັກປັດຊະຍາວັດຖຸກ່ອນມາກ: ມີອິມມານູ ແອນກັງ (1724-1804), ເຟີແບັກ (1804-1872). ພວກເຂົາບໍ່ໄດ້ນຳໃຊ້ໂລກະທັດວັດຖຸນິຍົມ ເພື່ອສ້າງວິທີສັດຈະວິພາກແບບວິທະຍາສາດ. ໜ້າທີ່ຂອງປັດຊະຍາ ພຽງແຕ່ຄົ້ນຄ້ວາທຳມະຊາດ ແລະ ມະນຸດ ແຕ່ພວກເຂົາອະທິບາຍວ່າ: ທຳມະຊາດຄືງຕົວຢູ່ນອກມະນຸດ ແລະ ມະນຸດພຽງແຕ່ເປັນພາກສ່ວນໜຶ່ງຂອງທຳມະຊາດ. ພວກເຂົາກໍມີທັດສະນະວັດຖຸຢູ່, ແຕ່ເວລາຈະອະທິບາຍກ່ຽວກັບປະຫວັດສາດ, ສັງຄົມ ແລະ ມະນຸດພັດຖືທັດສະນະຈິດຕະນິຍົມ (ສະຕິ).
- ບັນດານັກສັດຈະວິພາກກ່ອນມາກ: ມີປຣາຕົງ (425-347ກ່ອນຄ.ສ) ເຮເກນ (1770-1831), ພວກເຂົາມີແນວຄິດກ່ຽວກັບສັດຈະວິພາກຢູ່, ແຕ່ພວກເຂົາກໍຍັງຢູ່ໃນຫຼັກໝັ້ນຈິດຕະນິຍົມ. ສັດຈະວິພາກຂອງເຂົາແມ່ນສະແດງອອກໃນດ້ານວັດຖຸ, ປາກົດການ, ພາວະວິໄສ, ແຕ່ສັດຈະວິພາກຂອງເຂົາແມ່ນຈິດສຳນຶກ. ຈິດສຳນຶກແມ່ນສິ່ງທີ່ມີມາກ່ອນ, ຕັດສິນວັດ ຖຸ ແລະ ປາກົດການ (ເກີດມາຕາມຫຼັງ)

ປັດຊະຍາມາກ-ເລນິນ: ໂລກະທັດວັດຖຸນິຍົມ ແລະ ວິທີສັດຈະວິພາກເປັນເອກະພາບແບບກາຍອິນຊີນຳກັນ. ທາດແທ້ຂອງໂລກະທັດແມ່ນວັດຖຸ ລ້ອນແຕ່ມີການເຄື່ອນເໜັງ ແລະ ຂະຫຍາຍຕົວຕາມກົດເກນພາວະວິໄສ. ແຕ່ບັນດາກົດເກນນັ້ນແມ່ນຄົນເປັນຜູ້ຮັບຮູ້ ແລະ ສ້າງເປັນວິທີສັດຈະວິພາກ. ສະນັ້ນ ໂລກະທັດ ແລະ ວິທີສັດຈະວິພາກມີການພົວພັນກັນ.

- ຄູໃຫ້ນັກຮຽນອ່ານບົດຮຽນດ້ວຍຕົນເອງ ແລ້ວໃຫ້ນັກຮຽນສັງລວມລະບົບປັດຊະຍາກ່ອນມາກ-ເລນິນມີຄືແນວໃດ ແລະ ສັງລວມເນື້ອໃນສຳຄັນຂອງບົດຮຽນ ແລະ ເຮັດບົດເຝິກຫັດໃນປຶ້ມແບບຮຽນ.

## 5. ການວັດ ແລະ ປະເມີນຜົນ

### 1. ແນະນຳຄຳຖາມ ແລະ ຕອບຄຳຖາມທີ 1

- ວິເຄາະຄວາມແຕກຕ່າງ ກ່ຽວກັບເປົ້າໝາຍການຄົ້ນຄວ້າ ລະຫວ່າງ ປັດຊະຍາຕໍ່ກັບວິຊາວິທະຍາວິທະຍາສາດອື່ນໆ.

ແຕ່ກ່ອນວິທະຍາສາດຍັງບໍ່ທັນຂະຫຍາຍຕົວ ຈຶ່ງບໍ່ໄດ້ແບ່ງປັນຄົ້ນຄວ້າຢ່າງລະອຽດລະຫວ່າງປັດຊະຍາກັບວິທະຍາສາດ. ແຕ່ໃນວົງການນັກຮຽນຮູ້ເວລານັ້ນຖືວ່າ: ມີຄວາມຮູ້ດ້ານປັດຊະຍາແບບວິທະຍາສາດ. ນັບແຕ່ສັດຕະວັດທີ XVI, XVII, XVIII ໂດຍສະເພາະສັດຕະວັດທີ XIX ຂະແໜງວິທະຍາສາດໄດ້ຂະຫຍາຍຕົວຢ່າງໄວວາ ແລະ ໄດ້ແບ່ງເປົ້າໝາຍຄົ້ນຄ້ວາສະເພາະຂອງໃຜມັນ.

**2. ແນະນຳຕອບຄຳຖາມທີ3**

+ ອີງໃສ່ພື້ນຖານໃດເພື່ອແບ່ງປັນບັນດາລະບົບໂລກະທັດໃນປັດຊະຍາ?
- ໂລກະທັດກ່ອນນີ້ລ້ວນແຕ່ສັງເກດດ້ວຍວິທີນີ້, ວິທີນັ້ນ ແຕ່ສຸດທ້າຍກໍຢັ້ງຢືນຕາມທັດສະນະຂອງຕົນເອງກ່ຽວກັບການພົວພັນລະຫວ່າງສິ່ງວັດຖຸ(ທຳມະຊາດ, ການຄົງຕົວ ແລະ ສະຕິ (ຈິດໃຈ, ຈິດສຳນຶກ). ພວກເຮົາຈະເຊື່ອໝັ້ນປັດຊະຍາອັນໃດເປັນພື້ນຖານ? (ໃນປຶ້ມແບບຮຽນ)
- ໂລກະທັດວັດຖຸນິຍົມໄດ້ຢັ້ງຢືນວ່າ: ວັດຖຸແມ່ນທາດແທ້ຂອງໂລກ, ສະຕິແມ່ນຜະລິດຕະພັນໃນຮູບຮ່າງຂອງວັດຖຸທີ່ມີການຈັດຕັ້ງສູງ (ສະໝອງຂອງຄົນ). ວັດຖຸແມ່ນສິ່ງທີ່ມີມາກ່ອນ ແລະ ຕັດສິນສະຕິ. ໂລກວັດຖຸຫາກເກີດຂຶ້ນເອງ ບໍ່ມີກຳລັງມະຫັດສະຈັນໃດໃນທຳມະຊາດປະດິດສ້າງຂຶ້ນ, ມັນຄົງຕົວຢູ່ຕະຫຼອດການ, ບໍ່ມີໃຜຈະດັບສູນໄດ້. ດັ່ງນັ້ນ, ບັນດານັກປັດຊະຍາວັດຖຸນິຍົມເຄີຍເວົ້າວ່າ: ໂລກະທັດເກີດຂຶ້ນເອງບໍ່ມີເທວະດາ, ຟ້າແຖນ, ຜີສາງໃດສ້າງຂຶ້ນ.
- ປັດຊະຍາຈິດຕະນິຍົມຢັ້ງຢືນວ່າ: ໂລກະທັດວັດຖຸແມ່ນສະຕິ, ຈິດສຳນຶກມີມາກ່ອນ ແລະ ຕັດສິນໂລກທຳມະຊາດ, ຊີວິດສັງຄົມ ແລະ ມະນຸດ.

**3. ແນະນຳການກວດກາ ແລະ ປະເມີນຜົນ**

ຄູອາດຈະນຳໃຊ້ 3 ຕາຕະລາງປຽບທຽບ (ຢູ່ໃນສື່ການຮຽນ-ການສອນ) ເພື່ອກວດກາ, ຕີລາຄາຜົນການຮຽນຂອງນັກຮຽນ

## ເອກະສານອ່ານເພີ່ມສຳລັບຄູ

1. ຄຳສັບສຳລັບໃຊ້ວິຊາສະເພາະຄື: ລັດທິວັດຖຸນິຍົມ ແລະ ລັດທິຈິດຕະນິຍົມຄວນເຂົ້າໃຈຄືແນວໃດ?

- ຄົນທຳອິດທີ່ໃຊ້ຄຳສັບລັດທິວັດຖຸນິຍົມ ແລະ ລັດທິຈິດຕະນິຍົມແມ່ນ ທ່ານແບບນິດ (1646-1716) ນັກປັດຊະຍາເຢຍລະມັນ).

- ເດໂມກຣິດ (460-370 ກ່ອນ ຄສ) ເວົ້າວ່າ: ວັດຖຸແມ່ນທາດແທ້ຂອງໂລກະທັດ ແລະ ທາດແທ້ຂອງໂລກແມ່ນຈິດໃຈ (ສະຕິ).
- ປຣາຕົງ ( 427-347 ກ່ອນ ຄ.ສ) ໄດ້ແບ່ງໂລກອອກເປັນສອງຊະນິດຄື:
  - **ໂລກວັດຖຸ** ສຳຜັດໄດ້ເຊັ່ນ: ໂຕະ, ຕັ່ງ, ຄົນ, ຄວາຍ, ງົວ…
  - **ໂລກແຫ່ງຄວາມສຳນຶກ** ແມ່ນໂລກໃນອຸດົມຄະຕິ, ໂລກທີ່ເຮົາບໍ່ສາມາດສຳຜັດ ຫຼື ບໍ່ມອງເຫັນໄດ້ (1820-1895)
- ຟ. ອັງແກນ: ໄດ້ເວົ້າວ່າ: ບັນຫາພື້ນຖານຂອງປັດຊະຍາແມ່ນບັນຫາການພົວພັນລະຫວ່າງຈິດໃຈກັບການຄົງຕົວ, ລະຫວ່າງສະຕິກັບທຳມະຊາດ. ການແກ້ໄຂບັນຫາດັ່ງກ່າວນັ້ນໄດ້ແບ່ງປັດຊະຍາອອກເປັນສອງຝ່າຍທີ່ແຕກຕ່າງກັນຄື: ຝ່າຍວັດຖຸນິຍົມ ແລະ ຝ່າຍຈິດຕະນິຍົມ ດັ່ງນັ້ນ, ຈຶ່ງນຳໃຊ້ສອງຄຳສັບນີ້ເຂົ້າໃນປັດຊະຍາຕະຫຼອດມາ.

**2. ຄຳສັບ**:

| | | |
|---|---|---|
| - ມາດຕະເກນ | : | ແມ່ນຄວາມສຳນຶກກວ້າງສຸດ, ມັນສ່ອງແສງເຖິງບັນດາລັກສະນະຈຳເພາະບັນດາສາຍພົວພັນຂອງທຸກສິ່ງວັດຖຸ ແລະ ປາກົດການໃນໂລກພາວະວິໄສ. |
| - ຮູບການ | : | ບອກເຖິງແບບວິທີຄົງຕົວ ແລະ ຂະຫຍາຍຕົວຂອງສິ່ງວັດຖຸ |
| - ທາດແທ້ | : | ຊີ້ບອກການສັງລວມບັນດາດ້ານ, ບັນດາສາຍພົວພັນທີ່ຈຳເປັນພາຍໃນ ກຳນົດການເຄື່ອນເໜັງ ແລະ ການຂະຫຍາຍຕົວຂອງສິ່ງວັດຖຸ |
| - ຄວາມອາດສາມາດ | : | ຊີ້ບອກສິ່ງອາດຈະປາກົດຕົວຂຶ້ນໃນຕໍ່ໜ້າ ບົນພື້ນຖານທີ່ມີໜໍ່ແໜງ ແລະ ປັດໄຈທີ່ມີຢູ່ແລ້ວ |
| - ຄວາມເປັນຈິງ | : | ຊີ້ບອກສິ່ງທີ່ມີຢູ່ແລ້ວ ແລະ ພວມຄົງຕົວຢູ່ໃນທຳມະຊາດ - ສັງຄົມ |


ພາກທີI ການປະກອບສ້າງໂລກະທັດວັດຖຸ ນິຍົມ ແລະ ວິທີວິທະຍາ
ບົດທີ1 ໂລກະທັດແລະວິທີສັດຈະວິພາກ
1)ວິທີ ແລະ ວິທະ ຍາແມ່ນຫຍັງ
2)ວິທີສັດຈະວິ ພາກແລະອະພິທຳ
1. ໂລກະທັດ ແລະ ວິທີວິທະຍາ
1.3 ວິທີສັດຈະວິ ພາກ ແລະ ອະພິທຳ
2.ລັດທິວັດຖຸນິຍົມສັດ ຈະ ວິພາກ,ຄວາມເປັນ ເອກະ ພາບກາຍອິນຊີ ລະຫວ່າງ ໂລກະທັດວັດຖຸນິຍົມ ແລະ ວິທີສັດຈະວິພາກ
1.1 ບົດບາດຂອງໂລ ກະທັດ ແລ ວິທີວິທະ ຍາຂອງປັດຊະຍາ
1.2ໂລກະທັດວັດຖຸ ນິຍົມແລະໂລກະທັດ ຈິດຕະນິຍົມ
2.1 ການກຳ ເນີດປັດຊະຍາ
1) ປັດຊະຍາ ແມ່ນຫຍັງ
1)ໂລກະທັດ ແມ່ນຫຍັງ
3)ໂລກະທັດ ຈິດຕະນິຍົມ
2)ການກຳເນີດ ປັດຊະຍາກ່ອນ ມາກ
2) ບົດບາດຂອງໂລ ກະທັດແລະວິທີວິທະ ຍາຂອງປັດຊະຍາ
2)ໂລກະທັດວັດຖຸ ນິຍົມ
1) ປັດຊະຍາ ກ່ອນມາກ

# ບົດທີ 2 ໂລກວັດຖຸຄົງຕົວຕາມພາວະວິໄສ

ເວລາ 2 ຊົ່ວໂມງ

## 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍໂລກທຳມະຊາດຄົງຕົວຕາມພາວະວິໄສ
- ນຳໃຊ້ຄວາມຮູ້ທີ່ໄດ້ຮຽນມາ ເພື່ອພິສູດຕົ້ນກຳເນີດຂອງພືດ, ສັດ ແລະ ມະນຸດທີ່ມາຈາກໂລກທຳມະຊາດ
- ພິສູດມະນຸດສາມາດຮັບຮູ້, ປະດິດສ້າງໂລກທຳມະຊາດ ແລະ ຊີວິດສັງຄົມໄດ້
- ເຊື່ອໝັ້ນຄວາມສາມາດຮັບຮູ້ ແລະ ປະດິດສ້າງຂອງມະນຸດ, ຕຳນິວິຈານທັດສະນະຈິດຕະນິຍົມກ່ຽວກັບຕົ້ນກຳເນີດຂອງວັດຖຸ

## 2. ເນື້ອໃນ

- ໂລກທຳມະຊາດຄົງຕົວພາວະວິໄສ
- ມະນຸດ ແລະ ສັງຄົມແມ່ນຜະລິດຕະພັນຂອງໂລກທຳມະຊາດ
  + ມະນຸດແມ່ນຜະລິດຕະພັນຂອງໂລກທຳມະຊາດ
  + ສັງຄົມແມ່ນຜະລິດຕະພັນຂອງໂລກທຳມະຊາດ
  + ມະນຸດສາມາດຮັບຮູ້, ປະດິດສ້າງໂລກພາວະວິໄສ

## 3. ສື່ການຮຽນ-ການສອນ

- ປື້ມແບບຮຽນ ແລະ ຄູ່ມືຄູ ວິຊາສຶກສາພົນລະເມືອງຂັ້ນມ.5
- ຮູບພາບ, ຮູບຖ່າຍທີ່ພົວພັນເຖິງເນື້ອໃນບົດຮຽນ (ຖ້າມີ)
- ເຈ້ຍແຜ່ນໃຫຍ່, ບິກ, ສໍ, ມີດຕັດ, ກາວ, ສະກ໋ອດ… (ຖ້າມີ)
- ຄູອາດນຳໃຊ້ວິທີສອນແບບບັນຍາຍ, ຖາມ-ຕອບ, ແກ້ໄຂບັນຫາ, ສົນທະນາ, ລະດົມສະໝອງ, ພົວພັນກັບຊີວິດຕົວຈິງ…

## 4. ກິດຈະກຳການຮຽນ-ການສອນ

### ຊົ່ວໂມງທີ 1

- ຄູຕັ້ງຄຳຖາມ ຢູ່ອ້ອມຂ້າງພວກເຮົາມີສິ່ງວັດຖຸຫຍັງແດ່ ແລະ ມັນຄົງຕົວຄືແນວໃດ?

- ຄູອາດຈະນຳໃຊ້ຮູບພາບ, ຮູບຖ່າຍ, ວີດີໂອກ່ຽວກັບໂລກທຳມະຊາດ ເພື່ອມາສະເໜີໃຫ້ນັກຮຽນເບິ່ງ (ຖ້າມີ)
- ທວນຄືນບົດຮຽນເກົ່າ

**1. ສົນທະນາລວມໝົດຫ້ອງກ່ຽວກັບໂລກທຳມະຊາດຄົງຕົວຕາມພາວະວິໄສ**

- ຄູຕັ້ງຄຳຖາມສົນທະນາ

**ຄຳຖາມ**:

+ ນັກຮຽນຄິດວ່າ: ໂລກທຳມະຊາດລວມມີບັນດາປັດໄຈຫຍັງແດ່?
+ ມີສິ່ງໃດແດ່ທີ່ພົວພັນເຖິງຕົ້ນກຳເນີດຂອງສິ່ງທີ່ມີຊີວິດ?
+ ອີງໃສ່ຄວາມຮູ້ກ່ຽວກັບປະຫວັດສາດ, ຊີວະສາດ..., ຈົ່ງຍົກຕົວຢ່າງເພື່ອ**ພິສູດວ່າ**: ໂລກທຳມະຊາດໄດ້ຂະຫຍາຍຕົວແຕ່ຂັ້ນຕ່ຳໄປຫາຂັ້ນສູງ, ແຕ່ງ່າຍດາຍຫາສັບສົນ.
+ ການເຄື່ອນໄຫວ ແລະ ການຂະຫຍາຍຕົວຂອງໂລກທຳມະຊາດຂຶ້ນກັບຄວາມມັກຂອງມະນຸດບໍ? ເພາະເຫດໃດ? ຈົ່ງຍົກຕົວຢ່າງມາພິສູດ
+ ເປັນຫຍັງຈຶ່ງເວົ້າວ່າ: ໂລກທຳມະຊາດຄົງຕົວພາວະວິໄສ?

- ຄູເອີ້ນນັກຮຽນຈຳນວນໜຶ່ງຕອບ
- ຈາກນັ້ນ ຄູອາດຈະອະທິບາຍສິ່ງທີ່ນັກຮຽນບໍ່ທັນເຂົ້າໃຈຕື່ມ

**ຄູສະຫຼຸບ**

+ ໂລກທຳມະຊາດແມ່ນທຸກສິ່ງທຸກຢ່າງຂອງໂລກວັດຖຸ
+ ໂລກທຳມະຊາດຄົງຕົວພາວະວິໄສຍ້ອນວ່າ: ໂລກທຳມະຊາດມີຢູ່ແລ້ວ, ທຸກສິ່ງວັດຖຸ, ປາກົດການໃນໂລກທຳມະຊາດລ້ວນ ແຕ່ມີຂະບວນວິວັດແຫ່ງການປະກອບສ້າງຂຶ້ນ ການເຄື່ອນໄຫວ ແລະ ການຂະຫຍາຍຕົວໄປຕາມກົດເກນທີ່ມີຢູ່ໃນຕົວຂອງມັນເອງ.

**2. ສົນທະນາເປັນກຸ່ມກ່ຽວກັບມະນຸດ ແລະ ສັງຄົມມະນຸດແມ່ນຜະລິດຕະພັນຂອງໂລກທຳມະຊາດ**

- ຄູຢາຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າສົນທະນາ ຕາມຄຳຖາມລຸ່ມນີ້:

+ ຈົ່ງໃຊ້ຄວາມຮູ້ໃນດ້ານປະຫວັດສາດ ຫຼື ຊີວະສາດ ເພື່ອອະທິບາຍວ່າ: ມະນຸດມີຂະບວນວິວັດແຫ່ງການຂະຫຍາຍຕົວຄືແນວໃດ?

+ ຈົ່ງບອກທັດສະນະ ຫຼື ພິສູດຂະແໜງວິທະຍາສາດໄດ້ຢັ້ງຢືນວ່າ: ມະນຸດມີຕົ້ນກຳເນີດມາຈາກສັດ, ນັກຮຽນເຫັນດີກັບການຄົ້ນຄ້ວາໃນດ້ານວິທະຍາສາດນັ້ນບໍ? ເພາະເຫດໃດ?

+ ມະນຸດມີຈຸດພິເສດຄືແນວໃດ?

+ ມະນຸດມີຈຸດພິເສດຕ່າງກັບສັດແນວໃດ?ນັກຮຽນຈະມີຂໍ້ສະຫຼຸບກ່ຽວກັບຕົ້ນກຳເນີດຂອງມະນຸດແນວໃດ?

**ຄູຂຽນຫຍໍ້ຄຳສະເໜີຂອງແຕ່ລະກຸ່ມໃສ່ກະດານແລ້ວຄູອະທິບາຍຕື່ມວ່າ:**

- ໃນປະຈຸບັນຈຸດພິເສດໃນດ້ານຊີວະສາດຂອງສັດ ທີ່ລ້ຽງລູກດ້ວຍນ້ຳນົມ ເຊິ່ງລະບົບຮອບວຽນລະບົບລະລາຍ, ເກີດລູກ ແລະ ລະບົບສັນຍານຂັ້ນຕົ້ນຂອງສັດເລົ່ານັ້ນເຄື່ອນໄຫວຄ້າຍຄືຮ່າງກາຍຂອງມະນຸດແຕ່ມະນຸດບໍ່ດຳລົງຊີວິດແບບສັນຊາດຕະຍານ, ມະນຸດຮູ້ໝູນໃຊ້ທຳມະຊາດມາຮັບໃຊ້ການດຳລົງຊີວິດຂອງຕົນທິດສະດີລັດທິວັດຖຸນິຍົມຂອງດາກວິນ ມີຫຼາຍຜົນງານ ທາງດ້ານວິທະຍາສາດເປັນພື້ນຖານໃຫ້ ປັດຊະຍາສັດຈະວິພາກໄດ້ຢັ້ງຢືນວ່າ: ມະນຸດເປັນຜະລິດຕະພັນຂອງໂລກທຳມະຊາດເຖິງວ່າ ມີແຕ່ມະນຸດເທົ່ານັ້ນທີ່ຮູ້ອອກແຮງງານມີຈຸດປະສົງ, ມີພາສາ ແລະ ມີຈິນຕະນາ ການ; ພ້ອມກັນນັ້ນ ມະນຸດຍັງສາມາດປະດິດສ້າງທຳມະຊາດ ມາຮັບໃຊ້ການດຳລົງຊີ ວິດຂອງຕົນ, ດັ່ງນັ້ນ, ຈຶ່ງເວົ້າໄດ້ວ່າ: ມະນຸດບໍ່ພຽງແຕ່ເປັນຜະລິດຕະພັນຂອງໂລກທຳມະຊາດເທົ່ານັ້ນຫາກຍັງເປັນຜະລິດຕະພັນທີ່ສົມບູນແບບຂອງໂລກທຳມະຊາດ.

**ຄູສະຫຼຸບ**

- ມະນຸດແມ່ນຜະລິດຕະພັນຂອງໂລກທຳມະຊາດເຊິ່ງໄດ້ຄົງຕົວ ແລະ ພັດທະນາພ້ອມກັບສະພາບແວດລ້ອມທຳມະຊາດ.

**ຊົ່ວໂມງທີ 2**

**3. ສົນທະນາຮ່ວມກັບນັກຮຽນ**

- ຄູຕັ້ງຄຳຖາມໃຫ້ນັກຮຽນໄດ້ຄົ້ນຄິດ

**ຄຳຖາມ:**

+ ນັກຮຽນເຫັນດີກັບທັດສະນະທີ່ວ່າ: ຟ້າແຖນເປັນຜູ້ຕັດສິນການຂະຫຍາຍຕົວຂອງສັງຄົມບໍ? ເພາະເຫດໃດ?

+ ສັງຄົມມີຕົ້ນກຳເນີດມາຈາກໃສ? ອີງໃສ່ພື້ນຖານອັນໃດມາຢັ້ງຢືນ?

+ ສັງຄົມມະນຸດໄດ້ຜ່ານໄລຍະຂະຫຍາຍຕົວໃດແດ່?

+ ອີງໃສ່ປັດໄຈພື້ນຖານໃດ ທີ່ເຮັດໃຫ້ສັງຄົມມີການປ່ຽນແປງ?

+ ເປັນຫຍັງຈຶ່ງເວົ້າວ່າມະນຸດ ແລະ ສັງຄົມເປັນຜະລິດຕະພັນຂອງໂລກທຳມະຊາດ?

- ຄູຕ້ອງຊຸກຍູ້ໃຫ້ນັກຮຽນທຸກຄົນໄດ້ຕອບຄຳຖາມ
- ຄູຂຽນຫຍໍ້ຄຳເຫັນຂອງນັກຮຽນໃສ່ກະດານ
- ຄູແບ່ງປະເພດຄວາມຄິດເຫັນຂອງນັກຮຽນອັນໃດຄືກັນ ແລະ ອັນໃດຕ່າງກັນໃສ່ກະດານ.

**ຄູອະທິບາຍ** ຕື່ມຄວາມຄິດທີ່ບໍ່ທັນຈະແຈ້ງ,ຈາກນັ້ນຄູສະຫຼຸບ

- ການປາກົດຕົວຂອງມະນຸດ ແລະ ສັງຄົມມະນຸດ ແມ່ນຢູ່ໄລຍະດຽວກັນກັບໂຄງປະກອບລວມໝູ່ຂອງທະນີຄົນບູຮານ ແມ່ນເງື່ອນໄຂທຳມະຊາດເບື້ອງຕົ້ນທີ່ປະກອບສ້າງເປັນສັງຄົມມະນຸດ, ເມື່ອທະນີຄົນບູຮານໄດ້ວິວັດທະນາການອັນຍາວນານ ຈຶ່ງກາຍມາເປັນຄົນ ແລະ ໃນສັງຄົມມີການພົວພັນກັນ ເມື່ອໃນສັງຄົມມີການພົວພັນເຊິ່ງກັນ ແລະ ກັນແລ້ວກໍ່ກາຍມາເປັນສັງຄົມມະນຸດ. ສະນັ້ນ, ສັງຄົມ ແມ່ນຜະລິດຕະພັນຂອງໂລກທຳມະຊາດ, ເປັນພາກສ່ວນໜຶ່ງສະເພາະຂອງໂລກທຳມະຊາດ.
- ແມ່ນຮູບແບບການຈັດຕັ້ງສູງສຸດ. ຂອງໂລກທຳມະຊາດ ເຊິ່ງມີໂຄງສ້າງສັງຄົມທີ່ມີລັກສະນະປະຫວັດສາດ ແລະ ມີກົດເກນ ໂດຍສະເພາະ.

**4. ສົນທະນາກຸ່ມກ່ຽວກັບມະນຸດສາມາດຮັບຮູ້, ປະດິດສ້າງໂລກພາວະວິໄສ**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູຢາຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າ

**ຄຳຖາມ**:

+ ມະນຸດສາມາດປະດິດສ້າງໂລກທຳມະຊາດພາວະວິໄສໄດ້ບໍ?ເພາະເຫດໃດ? ຍົກຕົວຢ່າງ

+ ອີງໃສ່ຫຍັງມະນຸດຈຶ່ງສາມາດປະດິດສ້າງໂລກພາວະວິໄສ?

+ ການເຄື່ອນໄຫວໃດທີ່ກະທົບໃສ່ທຳມະຊາດ ຫຼື ສັງຄົມ ທີ່ນັກຮຽນຮູ້, ການເຄື່ອນໄຫວໃດມີຜົນປະໂຫຍດ ແລະ ການເຄື່ອນໄຫວໃດສ້າງຜົນເສຍຫາຍຕໍ່ມະນຸດ, ທຳມະຊາດ ຫຼື ສັງຄົມຍ້ອນເຫດຜົນໃດ?

+ ໃນການປະດິດສ້າງທຳມະຊາດ ແລະ ສັງຄົມ, ຖ້າບໍ່ໄປຕາມກົດເກນພາວະວິໄສຈະມີຫຍັງເກີດຂຶ້ນ? ຍົກຕົວຢ່າງ

- ແຕ່ລະກຸ່ມຄົ້ນຄວ້າສົນທະນາໃຫ້ເປັນເອກະພາບ, ຈາກນັ້ນຂຽນໃສ່ເຈ້ຍ ເພື່ອນຳສະເໜີຕາງໜ້າກຸ່ມຂຶ້ນສະເໜີ, ໝົດຫ້ອງພ້ອມກັນປະກອບຄວາມເຫັນຕື່ມ

**ຄູສະຫຼຸບ**:

- ມະນຸດບໍ່ສາມາດສ້າງທຳມະຊາດໄດ້ ແຕ່ມະນຸດສາມາດປະດິດສ້າງທຳມະຊາດມາຮັບໃຊ້ປະໂຫຍດຂອງຕົນໄດ້ບົນພື້ນຖານທີ່ເຄົາລົບ ແລະ ປະຕິບັດຕາມກົດເກນການເຄື່ອນເໜັງພາວະວິໄສທີ່ມີຢູ່ໃນຕົວຂອງມັນເອງ. ຖ້າບໍ່ເຄົາລົບກົດເກນພາວະວິໄສ, ມະນຸດບໍ່ພຽງສ້າງຜົນເສຍຫາຍໃຫ້ແກ່ທຳມະຊາດເທົ່ານັ້ນ ແຕ່ຍັງສ້າງໄພພິບັດໃຫ້ແກ່ຕົນເອງອີກດ້ວຍ.
- ຄູໃຫ້ນັກຮຽນເຮັດບົດເຝິກຫັດໃນປຶ້ມແບບຮຽນ
  + ຄຳຖາມທີ 2
  + ບົດເຝິກຫັດ ທີ 1 ແລະ 2
- ອ່ານເອກະສານເພີ່ມເຕີມ (ທັດສະນະຂົງຈື໊ ກ່ຽວກັບທຳມະຊາດ)

## 5. ການວັດ ແລະ ປະເມີນຜົນ

1. ແນະນຳການຕອບຄຳຖາມ ແລະ ແກ້ບົດເຝິກຫັດໃນປຶ້ມແບບຮຽນ
   - ຄົນສາມາດຮັບຮູ້ໂລກພາວະວິໄສໄດ້
2. ແນະນຳການກວດກາ ແລະ ປະເມີນຄວາມຮັບຮູ້ບົດຮຽນຂອງນັກຮຽນ

**ຕົວຢ່າງ**

+ ຈົ່ງຍົກບາງຕົວຢ່າງເພື່ອພິສູດໂລກທຳມະຊາດຄົງຕົວພາວະວິໄສ ໂດຍບໍ່ຂຶ້ນກັບສະຕິຂອງມະນຸດ
+ ນັກຮຽນເຫັນດີກັບທັດສະນະທີ່ວ່າ: ມະນຸດແມ່ນຜະລິດຕະພັນຂອງໂລກທຳມະຊາດບໍ? ເພາະເຫດໃດ?
+ ຄົນເຮົາເວົ້າວ່າ: ນ້ຳຖ້ວມ, ແຜ່ນດິນໄຫວ ແມ່ນການເຄື່ອນໄຫວເລິກລັບຂອງທຳມະຊາດ, ມະນຸດບໍ່ສາມາດຮັບຮູ້ ແລະ ບໍ່ສາມາດຫຼຸດຜ່ອນລະດັບຜົນເສຍຫາຍຂອງໄພທຳມະຊາດໄດ້. ຄຳເຫັນນີ້ ຖືກ ຫຼື ຜິດ? ເພາະເຫດໃດ?

**ອະທິບາຍສັບ**

- ວິວັດທະນາການ : ຄວາມຈະເລີນຮຸ່ງເຮືອງ
- ສັນຊາດຕະຍານ : ຄວາມຮູ້ທີ່ມີມາແຕ່ກຳເນີດຂອງຄົນ ແລະ ສັດ ໂດຍບໍ່ມີໃຜສັ່ງໃຫ້ເຮັດ
- ເອກະພາບ : ຄວາມເປັນອັນໜຶ່ງອັນດຽວກັນ, ຄວາມສອດຄ່ອງກົມກຽວກັນ

# ບົດທີ 3 ການເຄື່ອນເໜັງ ແລະ ການຂະຫຍາຍຕົວ ຂອງໂລກວັດຖຸ

ເວລາ2ຊົ່ວໂມງ

## 1. ຈຸດປະສົງ

**ໃຫ້ນັກຮຽນສາມາດ:**

- ອະທິບາຍການເຄື່ອນເໜັງ ແລະ ແບບວິທີຄົງຕົວຂອງໂລກວັດຖຸ
- ຈຳແນກ ຫ້າ ຮູບແບບການເຄື່ອນເໜັງຂອງໂລກວັດຖຸ
- ປຽບທຽບຈຸດຄືກັນ ແລະ ຕ່າງກັນລະຫວ່າງການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ
- ສັງເກດ ແລະ ວິເຄາະການເຄື່ອນເໜັງ, ປາກົດການ ແລະ ການຂະຫຍາຍຕົວຂອງສິ່ງວັດຖຸ
- ປັບປຸງຕົນເອງບໍ່ໃຫ້ມີທັດສະນະແຂງກະດ້າງ, ໃຈຮ້ອນ, ມີອະຄະຕິ ແລະ ມີຄວາມອາຄາດບາດໝາງເຊິ່ງກັນ ແລະ ກັນໃນການດຳລົງຊີວິດ

## 2. ເນື້ອໃນ

- ການເຄື່ອນເໜັງຂອງໂລກວັດຖຸ
  + ການເຄື່ອນເໜັງແມ່ນຫຍັງ
  + ການເຄື່ອນເໜັງແມ່ນແບບວິທີຄົງຕົວຂອງໂລກວັດຖຸ
  + ບັນດາຮູບແບບການເຄື່ອນເໜັງພື້ນຖານຂອງໂລກວັດຖຸ
  + ວັດຖຸເຄື່ອນເໜັງໃນກາລະ, ເທສະ
- ການຂະຫຍາຍຕົວຂອງໂລກວັດຖຸ
  + ການຂະຫຍາຍຕົວແມ່ນຫຍັງ
  + ການຂະຫຍາຍຕົວແມ່ນທ່າອ່ຽງລວມຂອງໂລກວັດຖຸ

## 3. ສື່ການຮຽນ-ການສອນ

- ປື້ມແບບຮຽນ ແລະ ຄູ່ມືຄູ ວິຊາສຶກສາພົນລະເມືອງຂັ້ນມ.5
- ແຕ້ມເສັ້ນສະແດງ (ແຜນວາດ) ກ່ຽວກັບທິດຕ່າງໆ ຂອງການເຄື່ອນເໜັງ ເຊິ່ງມີການພົວພັນລະຫວ່າງບັນດາຮູບແບບການເຄື່ອນເໜັງ ແລະ ຄວາມສຳນຶກກ່ຽວກັບການຂະຫຍາຍຕົວ, ທ່າອ່ຽງຂອງການຂະຫຍາຍຕົວ…
- ກຽມຮູບພາບພິສູດກ່ຽວກັບການຂະຫຍາຍຕົວ, ປາກົດການ ແລະ ອື່ນໆ (ຖ້າມີ)

## 4. ກິດຈະກຳການຮຽນ-ການສອນ

**ຊົ່ວໂມງທີ 1**

**1. ທົບທວນບົດຮຽນ (ບົດທີ 2)**

**2. ສົນທະນາລວມໝົດຫ້ອງກ່ຽວກັບການເຄື່ອນເໜັງ**

- **ຄູຕັ້ງຄຳຖາມ**:
  + ການເຄື່ອນເໜັງແມ່ນຫຍັງ?
  + ຖ້າວັດຖຸໃດໜຶ່ງບໍ່ມີການເຄື່ອນເໜັງຈະເປັນແນວໃດ?
- ຄູໃຫ້ນັກຮຽນແຕ່ລະຄົນຄົ້ນຄວ້າ ຫຼື ສົນທະນາກັບໝູ່ນັ່ງຂ້າງ
- ຄູເອີ້ນນັກຮຽນຈຳນວນໜຶ່ງຕອບຄຳຖາມ

**ຄູສະຫຼຸບ**:

- ການເຄື່ອນເໜັງແມ່ນການປ່ຽນແປງຂອງບັນດາສິ່ງວັດຖຸ ແລະ ປາກົດການຢູ່ໃນໂລກທຳມະຊາດ ແລະ ໂລກສັງຄົມຄວນຫຼີກເວັ້ນຄວາມເຂົ້າໃຈຝ່າຍດຽວວ່າ: ການເຄື່ອນເໜັງບໍ່ພຽງແຕ່ມີການເຄື່ອນໄຫວສະເພາະຢູ່ໃນສັງຄົມຄື: ການເລືອກຕັ້ງ, ນັກກິລາແລ່ນ ແລະ ລານ…

**3. ສົນທະນາເປັນກຸ່ມກ່ຽວກັບການເຄື່ອນເໜັງແມ່ນແບບວິທີຄົງຕົວຂອງສິ່ງວັດຖຸ**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູຢາຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າ

**ຄຳຖາມ**:

+ ເປັນຫຍັງ ການເຄື່ອນເໜັງຈຶ່ງແມ່ນແບບວິທີການຄົງຕົວຂອງໂລກວັດຖຸ?
+ ການເຄື່ອນເໜັງແມ່ນລັກສະນະທີ່ມີຢູ່ໃນຕົວຂອງມັນເອງບໍ ຫຼື ມັນເປັນແບບວິທີຄົງຕົວຂອງສິ່ງວັດຖຸ ແລະ ປາກົດການ
+ ຫ້າຮູບແບບການເຄື່ອນເໜັງພື້ນຖານມີການພົວພັນກັນຄືແນວໃດ?

- ຄູໃຫ້ແຕ່ລະກຸ່ມຄົ້ນຄວ້າ ແລະ ສົນທະນາ
- ຕາງໜ້າແຕ່ລະກຸ່ມຂຶ້ນສະເໜີ
- ນັກຮຽນຜູ້ອື່ນໆ ປະກອບຄວາມເຫັນເພີ່ມເຕີມ ຖ້າເຫັນວ່າຄຳຖາມໃດໜຶ່ງຕອບບໍ່ທັນຄົບຖ້ວນ
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບ

**ຄູສະຫຼຸບ**:

- ໂລກວັດຖຸ ຍາມໃດກໍຢູ່ໃນຂະບວນວິວັດແຫ່ງການເຄື່ອນເໜັງຢ່າງບໍ່ຢຸດຢັ້ງ ແຕ່ມັນກວມເອົາທັງປາກົດການຢຸດນິ້ງແບບທຽບຖານ, ຖ້າປາກົດການໃດບໍ່ມີການຢຸດນິ້ງທຽບຖານກໍຈະບໍ່ມີສິ່ງວັດຖຸໃດ ແລະ ປາກົດການໃດໆ ຄົງຕົວຢູ່ໄດ້. ໂລກວັດຖຸໄດ້ສະແດງອາການອອກໃນຮ່າງວັດຖຸຈິງ, ສິ່ງວັດຖຸໃດໆ ກໍລ້ວນແຕ່ຢູ່ໃນອາການຄົງຕົວດ້ວຍການເຄື່ອນເ ໜັງໃນຮູບການຕ່າງໆຂອງມັນ.

ປາກົດການຢຸດນິ້ງ ຈະເກີດຂຶ້ນໃນແບບວິທີການເຄື່ອນເໜັງໃດໜຶ່ງ, ເຊິ່ງໃນນັ້ນມີການພົວພັນກັນຢ່າງແນ່ນອນ ທ່ານຟ. ອັງແກນໄດ້ຂຽນວ່າ: " ທຸກອາການຢຸດນິ້ງ ແລະ ອາການຊື່ຕົງລ້ວນແຕ່ແມ່ນທຽບຖານ (ທຽບກັບສິ່ງອື່ນ), ການຢຸດນິ້ງມີລັກສະນະຊົ່ວຄາວ, ການເຄື່ອນເໜັງມີລັກສະນະເລື້ອຍໆຄົງຕົວ ແລະ ສະແດງອອກຫຼາຍຮູບການ ເຊິ່ງມີຄວາມໝາຍເອົາໄປທຽບກັບແບບວິທີການເຄື່ອນເໜັງອັນແນ່ນອນໃດໜຶ່ງ... ".

+ ການເຄື່ອນເໜັງຂອງວັດຖຸ ມີ 5 ຮູບແບບທີ່ເປັນພື້ນຖານເຊັ່ນ: ກົນຈັກ, ຟີຊິກ, ເຄມີ, ຊີວະສາດ, ສັງຄົມສາດ.

**ຕົວຢ່າງ**:

- ເຮືອນທີ່ເຮົາສ້າງຂຶ້ນມານັ້ນ ຢູ່ໃນສະພາບສະຫງົບ (ຢຸດນິ້ງ) ໂດຍທຽບຖານກັບໜ່ວຍໂລກກັບໜ້າດິນ ແຕ່ໃນໄລຍະດຽວກັນນັ້ນ ເຮືອນໝູນໄປພ້ອມກັບໜ່ວຍໂລກທີ່ໝູນໄປຮອບ

ໜຶ່ງ 24 ຊົ່ວໂມງ ແລະ ໝູນອ້ອມດວງຕາເວັນ. ສະນັ້ນ, ການເຄື່ອນເໜັງແມ່ນສິ່ງທີ່ຕັດຂາດອອກ ຈາກສິ່ງວັດຖຸບໍ່ໄດ້ມັນເປັນສິ່ງຖາວອນ, ບໍ່ອາດປັ້ນແຕ່ງ ແລະ ດັບສູນໄດ້

**3. ສົນທະນາບັນດາຮູບແບບການເຄື່ອນເໜັງພື້ນຖານຂອງໂລກວັດຖຸ**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄວ້າແຜນວາດ ຫຼື ເສັ້ນສະແດງກ່ຽວກັບຫ້າຮູບແບບການເຄື່ອນເໜັງພື້ນຖານຂອງວັດຖຸ ມີການພົວພັນກັບກາຍອິນຊີຄືແນວໃດ? ໂດຍຄູເປັນຜູ້ກະກຽມມາກ່ອນແລ້ວຢາຍໃຫ້ນັກຮຽນແຕ່ລະກຸ່ມ.




- ຄູໃຫ້ນັກຮຽນແຕ່ລະກຸ່ມຄົ້ນຄວ້າແຜນວາດ ຫຼື ເສັ້ນສະແດງກ່ຽວກັບຫ້າຮູບແບບການເຄື່ອນເໜັງພື້ນຖານຂອງວັດຖຸມີການພົວພັນກັບກາຍອິນຊີຄືແນວໃດ? ໂດຍຄູເປັນຜູ້ກະກຽມມາກ່ອນແລ້ວຢາຍໃຫ້ນັກຮຽນແຕ່ລະກຸ່ມ.

**ຕົວຢ່າງ: ແຜນວາດ ແລະ ເສັ້ນສະແດງ**

**ເສັ້ນສະແດງ**

- **ກ.** ການເຄື່ອນເໜັງແບບກົນຈັກ
- **ຟ.** ການເຄື່ອນເໜັງແບບຟີຊິກ
- **ຄ.** ການເຄື່ອນເໜັງແບບເຄມີສາດ
- **ຊ.** ການເຄື່ອນເໜັງແບບຊີວະສາດ
- **ສຄ.** ການເຄື່ອນເໜັງແບບສັງຄົມ
- ນັກຮຽນແຕ່ລະກຸ່ມຄົ້ນຄວ້າ, ສົນທະນາຈາກນັ້ນໃຫ້ຫົວໜ້າກຸ່ມສັງລວມຄວາມຄິດເຫັນ ຂອງສະມາຊິກໃນກຸ່ມ
- ຕາງໜ້າກຸ່ມຂຶ້ນສະເໜີ




**ແຜນວາດ**

- ນັກຮຽນແຕ່ລະຄົນປະກອບຄວາມຄິດເຫັນເພີ່ມ ຖ້າເຫັນວ່າບໍ່ທັນຈະແຈ້ງ ຫຼື ບໍ່ຊັດເຈນ

**ຄູສະຫຼຸບ**:

- ແຕ່ລະສິ່ງວັດຖຸ ແລະ ປາກົດການລ້ວນແຕ່ມີການພົວພັນກັບບັນດາຮູບແບບການເຄື່ອນເໜັງແຕກຕ່າງກັນ. ໃນແຕ່ລະຮູບແບບການເຄື່ອນເໜັງຂອງວັດຖຸມີຈຸດພິເສດ ແລະ ກົດເກນສະເພາະຂອງມັນ ຈຶ່ງເກີດມີບັນດາຂະແໜງວິທະຍາສາດສະເພາະເພື່ອຄົ້ນຄວ້າເຊັ່ນ: ຟີຊິກ, ເຄມີ, ຊີວະສາດ ແລະ ອື່ນໆ.

- ໃນປື້ມແບບຮຽນ ໄດ້ແບ່ງປະເພດຂອງບັນດາຮູບແບບການເຄື່ອນເໜັງ ຕາມລຳດັບແຕ່ຕ່ຳໄປຫາສູງ ແລະ ໄດ້ຢັ້ງຢືນວ່າ: ບັນດາຮູບແບບການເຄື່ອນເໜັງມີການພົວພັນແບບກາຍອິນຊີຢ່າງແໜ້ນແຟ້ນ, ໃນເງື່ອນໄຂອັນແນ່ນອນໃດໜຶ່ງ ພວກມັນກໍເຊື່ອມເຂົ້າກັນຄືດັ່ງແຜນວາດ ຫຼື ເສັ້ນສະແດງທີ່ພວກເຮົາໄດ້ສຶກສາຄົ້ນຄວ້ານີ້.

**4. ສົນທະນາກ່ຽວກັບວັດຖຸເຄື່ອນເໜັງໃນກາລະ, ເທສະ**

- ຄູຕັ້ງຄຳຖາມ
  + ກາລະແມ່ນຫຍັງ?
  + ເທສະແມ່ນຫຍັງ?
  + ກາລະ ແລະ ເທສະ ແມ່ນຮູບແບບແນວໃດ ຂອງການຄົງຕົວໂລກວັດຖຸ?
- ຄູໃຫ້ນັກຮຽນຄົ້ນຄວ້າຄຳຖາມກັບເພື່ອນນັ່ງຂ້າງ
- ຄູໃຫ້ຕາງໜ້ານັກຮຽນຂຶ້ນສະເໜີ,ຜູ້ອື່ນປະກອບຄວາມເຫັນເພີ່ມເຕີມ
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບ

**ຄູສະຫຼຸບ**

- **ກາລະ** ແມ່ນສິ່ງທີ່ຊີ້ບອກການເຄື່ອນເໜັງຂອງສິ່ງວັດຖຸ ແລະ ປາກົດການ, ເຊິ່ງເກີດຂຶ້ນໃນເວລາໃດ, ວັນ, ເດືອນ, ປີໃດ ໄວ ຫຼື ຊ້າ
- **ເທສະ** ແມ່ນຊີ້ບອກທຸກສິ່ງວັດຖຸ ແລະ ປາກົດການລ້ວນແຕ່ມີຂະໜາດ, ຂອບເຂດທີ່ແນ່ນອນເຊັ່ນ: ຕ່ຳ, ສູງ, ສັ້ນ, ຍາວ, ກວ້າງ, ແຄບ, ໃກ້, ໄກ ແລະ ເບື້ອງຊ້າຍ ຫຼື ເບື້ອງຂວາ.

- **ກາລະ ແລະ ເທສະ** ແມ່ນຮູບແບບທົ່ວໄປຂອງການຄົງຕົວຂອງວັດຖຸ, ວັດຖຸບໍ່ອາດເຄື່ອນເໜັງຢູ່ນອກກາລະ, ເທສະໄດ້. ທຸກການເຄື່ອນເໜັງຂອງວັດຖຸແມ່ນຢູ່ໃນກາລະເທສະ.

ຊົ່ວໂມງທີ 2

**5. ສົນທະນາລວມພົດທ້ອງກ່ຽວກັບການຂະຫຍາຍຕົວຂອງໂລກວັດຖຸ**

- ຄູແນະນຳໃຫ້ນັກຮຽນຄົ້ນຄວ້າເປັນລາຍບຸກຄົນ ຫຼື ສົນທະນາກັບໝູ່ນັ່ງຂ້າງ

**ຄຳຖາມ**:

+ ການຂະຫຍາຍຕົວແມ່ນຫຍັງ?
+ ແນວໃດຈຶ່ງເອີ້ນວ່າສິ່ງໃໝ່?
+ ແນວໃດຈຶ່ງເອີ້ນວ່າສິ່ງເກົ່າ?
+ ແນວໃດຈຶ່ງເອີ້ນວ່າສິ່ງກ້າວໜ້າ?

- ຄູເອີ້ນນັກຮຽນຈຳນວນໜຶ່ງປະກອບຄວາມເຫັນ ແຕ່ລະຄຳຖາມປະມານ 1-2 ຄົນ
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບຄືນ

**ຄູສະຫຼຸບເນັ້ນຄວາມສຳຄັນໃຫ້ນັກຮຽນກຳໄດ້**

- ການຂະຫຍາຍຕົວແມ່ນສິ່ງໃໝ່: ເກີດຂຶ້ນ, ປ່ຽນແທນສິ່ງເກົ່າສິ່ງກ້າວໜ້າປ່ຽນແທນສິ່ງຫຼ້າຫຼັງບໍ່ຄວນເຂົ້າໃຈຫຼົງກັບການຂະຫຍາຍແບບລວມໆທຳມະດາ ແລະ ບໍ່ຄວນຢັ້ງຢືນວ່າ: ສິ່ງວັດຖຸໃດ, ປາກົດການໃດທີ່ຫາກໍເກີດຂຶ້ນໃໝ່ ກໍແມ່ນໝາກຜົນຂອງການຂະຫຍາຍຕົວ, ສິ່ງທີ່ກ່າວມານີ້ແມ່ນບັນດາມາດຕະເກນທີ່ເປັນນາມມະທຳ, ເຂົ້າໃຈຍາກ, ໂດຍສະເພາະເມື່ອເຮົາສັງເກດບັນດາປາກົດການສັງຄົມ, ເຮົາຈະເຫັນໄດ້ວ່າແຕ່ລະຊົນຊັ້ນຈະມີທັດສະນະ (ຄວາມເຂົ້າໃຈ) ຕ່າງກັນ. ສະນັ້ນ, ຄູຈະຕ້ອງແນະນຳໃຫ້ນັກຮຽນໄດ້ຍົກຕົວຢ່າງຢູ່ໃນໂລກທຳມະຊາດ, ໃນຊີວິດສັງຄົມ ແລະ ສະຕິເພື່ອໃຫ້ເຫັນຄວາມສຳນຶກຕໍ່ກັບການຂະຫຍາຍຕົວພ້ອມກັນນັ້ນກໍຕ້ອງກຳແໜ້ນວັດຖຸນິຍົມປະຫວັດວິພາກມາຢັ້ງຢືນສິ່ງໃໝ່ ແລະ ສິ່ງກ້າວໜ້າຂອງບັນດາປາກົດການສັງຄົມເພື່ອຫຼີກເວັ້ນຄວາມເຂົ້າໃຈຜິດພາດ.

**6. ຄູ ແລະ ນັກຮຽນຮ່ວມກັນສົນທະນາກ່ຽວກັບການຂະຫຍາຍຕົວ ແມ່ນທ່າອ່ຽງຈຳເປັນຂອງຂະບວນວິວັດແຫ່ງການເຄື່ອນເໜັງຂອງສິ່ງວັດຖຸ ແລະ ປາກົດການ**

- ຄູແນະນຳໃຫ້ນັກຮຽນເຂົ້າໃຈວ່າ:
  + ຈະຄົ້ນຄວ້າແຕ່ການຂະຫຍາຍຕົວແມ່ນທ່າອ່ຽງລວມໆຂອງຂະບວນວິວັດແຫ່ງການເຄື່ອນເໜັງ ຂອງສິ່ງວັດຖຸ ແລະ ປາກົດການ

+ ບໍ່ລົງເລິກບັນຫາການແກ້ໄຂຮູບແບບການຂະຫຍາຍຕົວເທື່ອ

+ ໃຫ້ນັກຮຽນຮູ້ແຕ່ການເຄື່ອນເໜັງມີຫຼາຍທ່າອ່ຽງເຊັ່ນ:

- ທ່າອ່ຽງກ້າວໜ້າ
- ທ່າອ່ຽງຖອຍຫຼັງ
- ທ່າອ່ຽງແບບຮອບວຽນ

ໃນນັ້ນທ່າອ່ຽງກ້າວຂຶ້ນ (ຂະຫຍາຍຕົວ) ແມ່ນທ່າອ່ຽງຈຳເປັນ, ແມ່ນທ່າອ່ຽງຄອບຄອງຂອງ ສິ່ງວັດຖຸ

- ຄູແນະນຳໃຫ້ນັກຮຽນວິເຄາະເຫດການທີ່ເກີດຂຶ້ນນັບແຕ່ປີ 1945-1975 (ຕົວຢ່າງໃນປື້ມແບບຮຽນໜ້າ36)ໂດຍໃຊ້ຄວາມຮູ້ໃນບົດນີ້ເພື່ອມາວິເຄາະເຫດການດັ່ງກ່າວຄູອາດຈະໃຊ້ຄຳຖາມເຈາະຈີ້ມຕື່ມ

**ຄຳຖາມ**:

+ ຍ້ອນເຫດຜົນຫຍັງປະຊາຊົນລາວຈຶ່ງລຸກຂຶ້ນຕໍ່ສູ້?

+ ຖ້າບໍ່ມີການຕໍ່ສູ້ປະເທດລາວມີການປ່ຽນແປງບໍ? ເພາະເຫດໃດ?

+ ເປັນຫຍັງຈຶ່ງເວົ້າວ່າ: ການຕໍ່ສູ້ເປັນກຳລັງຊຸກດັນໃຫ້ສັງຄົມມີການຂະຫຍາຍຕົວ?

- ຄູເອີ້ນນັກຮຽນຈຳນວນໜຶ່ງປະກອບຄວາມຄິດເຫັນ
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບຫຍໍ້ຕາມຄຳຖາມເຈາະຈີ້ມ

**ຄູສະຫຼຸບ**:

- ການຮຽນຮູ້ບັນດາກົດເກນພື້ນຖານຂອງວິທີສັດຈະວິພາກ ໄດ້ຊ່ວຍໃຫ້ພວກເຮົາມີວິທີວິທະຍາສາດ ໃນການຮັບຮູ້ທາງທຳມະຊາດ, ສັງຄົມ ແລະ ຈິນຕະນາການບົນພື້ນຖານນັ້ນພວກເຮົາຈຶ່ງມີການກະທຳຢ່າງຖືກຕ້ອງ, ມີພື້ນຖານທິດສະດີ ເພື່ອເຝິກຝົນຫຼໍ່ຫຼອມຕົນເອງໃຫ້ມີທັດສະນະພາວະວິໄສຮອບດ້ານ ຮູ້ປະຫວັດສາດການຂະຫຍາຍຕົວ ແລະ ມີຄວາມລະອຽດ, ຕົວຈິງ, ພ້ອມນັ້ນກໍເຮັດໃຫ້ເຮົາມີສະຕິ, ປັດເປົ່າແນວຄິດ ແລະ ການກະທຳທີ່ຜິດພາດ.

## 5. ການວັດ ແລະ ປະເມີນຜົນ

- ຄູໃຫ້ນັກຮຽນເຮັດບົດເຝິກຫັດໃນປື້ມແບບຮຽນ

- ຄູແນະນຳນັກຮຽນເຮັດຕາຕະລາງສະຫຼຸບຫຍໍ້ຕາມຄວາມເຂົ້າໃຈຂອງຕົນກ່ຽວກັບລັກສະນະ, ແບບວິທີ, ການເຄື່ອນເໜັງ ແລະ ການຂະຫຍາຍຕົວ (ຍົກຕົວຢ່າງ)

**ຕົວຢ່າງ: ຕາຕະລາງ**

| ລັກສະນະ | ແບບວິທີ | ການເຄື່ອນເໜັງ | ການຂະຫຍາຍຕົວ |
|---|---|---|---|
| ...................... .... | ...................... ........... | ...................... ........ | ...................... |
| ....................... . | ...................... ........ | ...................... ..... | ...................... |
| ....................... | ...................... ....... | ...................... ..... | ...................... |
| ...................... .... | ...................... ....... | ...................... ...... | ........................ |
| ...................... ...... | ...................... ....... | ...................... ........... | ...................... ..... |
| ...................... ..... | ...................... ...... | ...................... .......... | ...................... ..... |
| ...................... .......... | ...................... .......... | ...................... ....... | ...................... ........... |

- ຄູແນະນຳໃຫ້ນັກຮຽນອ່ານບົດຮຽນຄືນ

# ບົດທີ 4 ຕົ້ນກຳເນີດການເຄື່ອນເໜັງ, ການຂະຫຍາຍຕົວ ຂອງສິ່ງວັດຖຸ ແລະ ປາກົດການ

ເວລາ 2 ຊົ່ວໂມງ

## 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍຂໍ້ຂັດແຍ່ງຕາມທັດສະນະຂອງລັດທິວັດຖຸນິຍົມສັດຈະວິພາກ
- ອະທິບາຍການຕໍ່ສູ້ລະຫວ່າງບັນດາດ້ານທີ່ກົງກັນຂ້າມ ເປັນຕົ້ນກຳເນີດພາວະວິໄສ ຂອງທຸກການເຄື່ອນເໜັງ, ການຂະຫຍາຍຕົວ ຂອງສິ່ງວັດຖຸ ແລະ ປາກົດການ.
- ວິເຄາະບາງຂໍ້ຂັດແຍ່ງໃນບັນດາວັດຖຸ ແລະ ປາກົດການ
- ປະກອບສ່ວນແກ້ໄຂບາງຂໍ້ຂັດແຍ່ງໃນການດຳລົງຊີວິດໃຫ້ສອດຄ່ອງກັບໄວອາຍຸ

## 2. ເນື້ອໃນ

- ເຫດຜົນການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ
- ຂໍ້ຂັດແຍ່ງຂອງສິ່ງວັດຖຸ
  + ຂໍ້ຂັດແຍ່ງແມ່ນຫຍັງ?
  + ດ້ານກົງກັນຂ້າມຂອງຂໍ້ຂັດແຍ່ງ
  + ຄວາມເປັນເອກະພາບລະຫວ່າງບັນດາດ້ານກົງກັນຂ້າມ
  + ການຕໍ່ສູ້ລະຫວ່າງບັນດາດ້ານກົງກັນຂ້າມ
- ຕົ້ນກຳເນີດການເຄື່ອນເໜັງ, ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ
  + ການແກ້ໄຂຂໍ້ຂັດແຍ່ງ
  + ຂໍ້ຂັດແຍ່ງຕ້ອງແກ້ໄຂດ້ວຍການຕໍ່ສູ້

  ໃນບົດນີ້ໃຫ້ຄູອະທິບາຍລົງເລິກ 2 ເນື້ອໃນຕົ້ນຕໍ
- ຄວາມສຳນຶກໂດຍສັງເຂບກ່ຽວກັບຂໍ້ຂັດແຍ່ງ
- ບົດບາດຂອງກົດເກນຂໍ້ຂັດແຍ່ງ

## 3. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ຄູ່ມືຄູ ວິຊາສຶກສາພົນລະເມືອງຂັ້ນມ.5

- ຄູອາດນຳໃຊ້ຮູບແຕ້ມ, ເສັ້ນສະແດງ ເພື່ອອະທິບາຍແຕ່ລະຫົວຂໍ້ຂອງບົດຮຽນ
- ຄູຍົກຕົວຈິງມາອະທິບາຍໃຫ້ນັກຮຽນເຂົ້າໃຈແຈ້ງ
- ຄູຕັ້ງຄຳຖາມ ເພື່ອລະດົມສະໝອງ, ຄຳຖາມເຈາະຈີ້ມກ່ຽວກັບເງື່ອນໄຂໃດໜຶ່ງ ຫຼື ຂ່າວສານ ເພື່ອໃຫ້ນັກຮຽນໄດ້ຄົ້ນຄິດ

## 4. ກິດຈະກຳການຮຽນ-ການສອນ

### ຊົ່ວໂມງທີ 1

- ທົບທວນຄືນບົດຮຽນຜ່ານມາ
- ສ້າງບັນຍາກາດເຂົ້າສູ່ບົດຮຽນເຊັ່ນ:
  • ສະເໜີບົດກ່ອນແລ້ວນຳເຂົ້າສູ່ບົດຮຽນທີ່ຈະຮຽນ
  • ສ້າງສະຖານະການກ່ຽວກັບບັນຫາໃດໜຶ່ງຂຶ້ນມາ

**ຕົວຢ່າງ**

- ນິວເຕິນ ເປັນນັກກົນຈັກເວົ້າວ່າ: “ຕົ້ນກຳເນີດຂອງການເຄື່ອນເໜັງຢູ່ນອກວັດຖຸ” ຍ້ອນມີ “ເວດມົນຂອງຟ້າແຖນ”
- ໂຮນແບັກ ນັກປັດຊະຍາດີເດັ່ນໃນສະຕະວັດ XVIII ຂອງຝຣັ່ງເວົ້າວ່າ: “ການເຄື່ອນເໜັງແມ່ນກຳລັງແຮງທີ່ມີຢູ່ໃນຕົວຂອງມັນເອງ, ບໍ່ຈຳເປັນມີສິ່ງໃດພາຍນອກມາຊຸກດັນ ”
- ບຣູໂນ (1548-1600) ນັກປັດຊະຍາໃນດ້ານການຮັບຮູ້ໂລກທ່ານໄດ້ຂຽນວ່າ: “ໃຜຢາກຮູ້ຄວາມລັບອັນໃຫຍ່ສຸດຂອງທຳມະຊາດຕ້ອງເບິ່ງ ແລະ ສັງເກດສິ່ງທີ່ໃຫຍ່ສຸດ ແລະ ສິ່ງນ້ອຍສຸດຂອງຂໍ້ຂັດແຍ່ງ ແລະ ສິ່ງກົງກັນຂ້າມ ”

ສິ່ງທີ່ກ່າວມາຂ້າງເທິງນີ້ພຽງແຕ່ເປັນຕົວຢ່າງ ໃນການນຳເຂົ້າສູ່ບົດຮຽນ, ບໍ່ແມ່ນຕາຍຕົວຕ້ອງໃຫ້ຄູປະຕິບັດຕາມແບບນີ້. ແຕ່ລະຄົນອາດຈະມີຫົວຄິດປະດິດສ້າງຕ່າງກັນ ແລະ ດີກວ່ານີ້.

**1. ສົນທະນາກ່ຽວກັບຂໍ້ຂັດແຍ່ງ**

- ຄູອາດຈະຕັ້ງຄຳຖາມລະດົມສະໝອງ

**ຄຳຖາມ**:

+ ເປັນຫຍັງເຮົາຈຶ່ງສັງເກດເຫັນໃນທຳມະຊາດ ແລະ ສັງຄົມມີການປ່ຽນແປງ?
+ ເປັນຫຍັງແຕ່ລະຂໍ້ຂັດແຍ່ງ ຈຶ່ງມີສອງດ້ານກົງກັນຂ້າມກັນ?

- ຄູໃຫ້ນັກຮຽນຈຳນວນໜຶ່ງຕອບຄຳຖາມ

**ຄູສະຫຼຸບ**:

- ກົດເກນເອກະພາບ ແລະ ການຕໍ່ສູ້ລະຫວ່າງສິ່ງກົງກັນຂ້າມໃຫ້ຄຳຕອບແຈ້ງຕໍ່ບັນຫານີ້, ເຊິ່ງມັນໄດ້ອະທິບາຍໃຫ້ພວກເຮົາເຫັນຕົ້ນເຫດ ພາຍໃນຂອງການຂະຫຍາຍຕົວ ແລະ ມັນກໍນອນຢູ່ໃນລັກສະນະຂໍ້ຂັດແຍ່ງຂອງສິ່ງວັດຖຸ, ມັນກະທົບເຊິ່ງກັນ ແລະ ກັນ, ການຕໍ່ສູ້ລະຫວ່າງສິ່ງກົງກັນຂ້າມມັນມີຢູ່ໃນຕົວຂອງສິ່ງວັດຖຸເອງ.
- ແຕ່ລະຂໍ້ຂັດແຍ່ງມີສອງດ້ານກົງກັນຂ້າມທີ່ປະກອບໃນສິ່ງວັດຖຸນັ້ນ, ແຕ່ລະສິ່ງວັດຖຸ ແລະ ປາກົດການລ້ວນແຕ່ມີຫຼາຍຂໍ້ຂັດແຍ່ງຄົງຕົວຢູ່. ປາກົດການໃໝ່ເກີດຂຶ້ນກາຍເປັນຂໍ້ຂັດແຍ່ງ.

**2. ສົນທະນາກ່ຽວກັບດ້ານກົງກັນຂ້າມຂອງຂໍ້ຂັດແຍ່ງ**

***ໃນຫົວຂໍ້ນີ້ຄູຄວນເອົາໃຈໃສ່ 2 ຈຸດຄື:***

+ ດ້ານກົງກັນຂ້າມຂອງຂໍ້ຂັດແຍ່ງ ແລະ ດ້ານກົງກັນຂ້າມສັດຈະວິພາກ.

- ໃນ 2 ຈຸດນີ້ຄູອາດຈະຕັ້ງຄຳຖາມ ຫຼື ຍົກຄຳຖາມຂຶ້ນມາໃຫ້ນັກຮຽນຄົ້ນຄວ້າ

**ຕົວຢ່າງ**

+ ໄຟຟ້າລົບ ແລະ ໄຟຟ້າບວກ ຢູ່ໃນວັດຖຸ (ກ)
+ ໄຟຟ້າລົບຢູ່ວັດຖຸ (ກ)ແລະ ໄຟຟ້າບວກຢູ່ໃນວັດຖຸ (ຂ) ໃນສອງກໍລະນີນີ້ແມກໍລະນີ
+ ໃດສ້າງດ້ານກົງກັນຂ້າມຂອງຂໍ້ຂັດແຍ່ງ ແລະ ສ້າງເປັນຄູ່ຂອງຂໍ້ຂັດແຍ່ງ?

**ໃຫ້ນັກຮຽນປະກອບຄວາມເຫັນ ແລະ ອະທິບາຍໃນ 2 ກໍລະນີນີ້**

- ຖ້ານັກຮຽນບໍ່ເຂົ້າໃຈ, ຄູອາດຈະອະທິບາຍຕື່ມໂດຍຕັ້ງຄຳຖາມເຈາະຈີ້ມຕື່ມ
  + ຖ້າເຮົາລົບລ້າງດ້ານກົງກັນຂ້າມຈະມີຂໍ້ຂັດແຍ່ງເກີດຂຶ້ນບໍ? ເພາະເຫດໃດ?
- ດ້ານກົງກັນຂ້າມ: ແມ່ນຊີ້ບອກປັດໄຈ, ພາກສ່ວນ, ລັກສະນະສະເພາະທີ່ມີຈຸດພິເສດ, ທ່າອ່ຽງເຄື່ອນເໜັງປີ້ນກັນ.
- ຂໍ້ຂັດແຍ່ງແມ່ນການສ່ອງແສງຄວາມເປັນຈິງ ແລະ ເປັນບໍ່ເກີດແຫ່ງການຂະຫຍາຍຕົວ. ຂໍ້ຂັດແຍ່ງມີຢູ່ໃນ 3 ຂົງເຂດຄື: ທຳມະຊາດ, ສັງຄົມ ແລະ ຈິນຕະນາການ. ຖ້າລົບລ້າງດ້ານກົງກັນຂ້າມຂໍ້ຂັດແຍ່ງກໍບໍ່ອາດເກີດຂຶ້ນໄດ້. ເພາະສອງດ້ານກົງກັນຂ້າມມັນຜູກມັດຢູ່ໃນວັດຖຸດຽວກັນ.

**ຄູສະຫຼຸບ**

- ໄຟຟ້າລົບ ແລະ ໄຟຟ້າບວກຢູ່ໃນວັດຖຸ ກໍແມ່ນທ່າອ່ຽງ, ທາດແທ້, ຈຸດສະເພາະ… ປີ້ນກັນຢູ່ໃນວັດຖຸ ແລະ ປາກົດການດຽວກັນ.
- ດ້ານກົງກັນຂ້າມຂອງຂໍ້ຂັດແຍ່ງຍັງເອີ້ນວ່າ: ດ້ານກົງກັນຂ້າມສັດຈະວິພາກແມ່ນດ້ານກົງກັນຂ້າມຜູກມັດ, ເອກະພາບ ແລະ ຕໍ່ສູ້ກັນ ແຕ່ບໍ່ແມ່ນດ້ານກົງກັນຂ້າມໃດກໍເກີດການຕໍ່ສູ້ກັນ.
- ຖ້າມີແຕ່ໄຟຟ້າລົບຢູ່ໃນວັດຖຸ ຫຼື ໄຟຟ້າບວກຢູ່ໃນວັດຖຸຈະບໍ່ເກີດດ້ານກົງກັນຂ້າມຂອງຂໍ້ຂັດແຍ່ງ.

**ຊົ່ວໂມງທີ 2**

**3. ສົນທະນາກ່ຽວກັບຄວາມເປັນເອກະພາບ ແລະ ການຕໍ່ສູ້ລະຫວ່າງບັນດາດ້ານກົງກັນຂ້າມໃນຂໍ້ນີ້ຈະລົງເລິກ 2 ຫຼັກມູນຄື:**

ຄວາມເປັນເອກະພາບ

+ ການຕໍ່ສູ້ ລະຫວ່າງ ບັນດາດ້ານກົງກັນຂ້າມ ຫຼັກມູນການຕໍ່ສູ້ລະຫວ່າງບັນດາດ້ານກົງກັນຂ້າມມີການພົວພັນເຖິງບົດບາດຂອງ ກົດເກນຂໍ້ຂັດແຍ່ງ. ແຕ່ລະຫຼັກມູນຄູອາດຈະຕັ້ງຄຳຖາມໃຫ້ນັກຮຽນໄດ້ຄົ້ນຄິດຢ່າງຄັກແນ່

**ຄຳຖາມ**:

+ ແນວໃດຈຶ່ງເອີ້ນວ່າຄວາມເປັນເອກະພາບ?
+ ແນວໃດຈຶ່ງເອີນວ່າການຕໍ່ສູ້ລະຫວ່າງບັນດາດ້ານກົງກັນຂ້າມ?
+ ເປັນຫຍັງສອງດ້ານກົງກັນຂ້າມທັງເປັນເອກະພາບ ແລະ ທັງມີການຕໍ່ສູ້ກັນ?

- ເມື່ອຄູຕັ້ງຄຳຖາມແລ້ວ ຄູເອີ້ນນັກຮຽນຈຳນວນໜຶ່ງຕອບຄຳຖາມ ຫຼື ຕາງໜ້າໝູ່ຂຶ້ນສະເໜີ
- ຖ້າບໍ່ມີໃຜປະກອບຄວາມເຫັນຄູກໍສະຫຼຸບສັງລວມ
- ຄູສະຫຼຸບຫຍໍ້ເນື້ອໃນບົດຮຽນ (ຂໍ້ນີ້ໃຫ້ນັກຮຽນເຂົ້າໃຈແຈ້ງຕື່ມ)

**4. ສົນທະນາກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ**

- **ໃນຫົວຂໍ້ນີ້ຄູຈະຕ້ອງເອົາໃຈໃສ່ 2 ບັນຫາດັ່ງນີ້**:

  + ການແກ້ໄຂຂໍ້ຂັດແຍ່ງ
  + ການຕໍ່ສູ້ລະຫວ່າງດ້ານກົງກັນຂ້າມ

- ເພື່ອຢາກໃຫ້ນັກຮຽນເຂົ້າໃຈແຈ້ງກ່ຽວກັບ 2 ບັນຫານີ້, ຄູອາດຈະຍົກບັນຫາຂໍ້ຂັດແຍ່ງຕ່າງໆ ໃນການດຳລົງຊີວິດຈິງຂຶ້ນມາ, ໂດຍສະເພາະ ແມ່ນຂໍ້ຂັດແຍ່ງພາຍໃນ ແລະ ຂໍ້ຂັດແຍ່ງທີ່ເປັນພື້ນຖານ ເພື່ອໃຫ້ນັກຮຽນໄດ້ສົນທະນາກັນ ແລະ ແລກປ່ຽນຄວາມຄິດເຫັນເຊິ່ງກັນ ແລະ ກັນ.
- ຄູອາດຈະຕັ້ງຄຳຖາມໃຫ້ນັກຮຽນຄົ້ນຄວ້າ

**ຄຳຖາມ**:

+ ການແກ້ໄຂຂໍ້ຂັດແຍ່ງແມ່ນແນວໃດ?
+ ການຕໍ່ສູ້ລະຫວ່າງດ້ານກົງກັນຂ້າມແມ່ນແນວໃດ?
+ ຂໍ້ຂັດແຍ່ງພາຍໃນແມ່ນແນວໃດ?
+ ຂໍ້ຂັດແຍ່ງພື້ນຖານແມ່ນແນວໃດ?

- ຄູໃຫ້ນັກຮຽນຈຳນວນໜຶ່ງຂຶ້ນຕອບຄຳຖາມ
- ສ່ວນນັກຮຽນຜູ້ອື່ນປະກອບຄວາມເຫັນເພີ່ມເຕີມ
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບ

**ຄູສະຫຼຸບ**:

- ການແກ້ໄຂຂໍ້ຂັດແຍ່ງ ແມ່ນເຮັດໃຫ້ຂໍ້ຂັດແຍ່ງຈົບສິ້ນລົງ ແລະ ບັນດາດ້ານກົງກັນຂ້າມຂອງຂໍ້ຂັດແຍ່ງບໍ່ຄົງຕົວຢູ່ຕໍ່ໄປຄື ເມື່ອກ່ອນອີກ, ໂດຍປ່ຽນເປັນສິ່ງອື່ນ.
- ການຕໍ່ສູ້ລະຫວ່າງດ້ານກົງກັນຂ້າມແມ່ນເງື່ອນໄຂເບື້ອງຕົ້ນຂອງການແກ້ໄຂຂໍ້ຂັດແຍ່ງຂໍ້ຂັດແຍ່ງໄດ້ແກ້ໄຂກໍຕໍ່ເມື່ອການຕໍ່ສູ້ລະຫວ່າງບັນດາດ້ານກົງກັນຂ້າມກ້າວຂຶ້ນຈຸດສູງ ແລະ ມີເງື່ອນໄຂທີ່ເໝາະສົມ.
- ຂໍ້ຂັດແຍ່ງພາຍໃນມີບົດບາດຕັດສິນ ໂດຍກົງຕໍ່ຂະບວນການຂະຫຍາຍຕົວຂອງສິ່ງວັດຖຸ, ເມື່ອຂໍ້ຂັດແຍ່ງພື້ນຖານໄດ້ຮັບການແກ້ໄຂ ແລ້ວຈຶ່ງມີການຫັນປ່ຽນແຕ່ວັດຖຸ ແລະ ປາກົດການນີ້ກາຍເປັນສິ່ງວັດຖຸ ແລະ ປາກົດການອື່ນ.
- ຄູໃຫ້ນັກຮຽນສົນທະນາບົດເຝິກຫັດທີ 2 ໃນປື້ມແບບຮຽນ
- ຄູໃຫ້ຕາງໜ້າກຸ່ມຂຶ້ນສະເໜີ ຫຼື ສົນທະນາຮ່ວມກັນໝົດຫ້ອງ
- ຄູຂຽນເນື້ອໃນທີ່ນັກຮຽນຂຶ້ນສະເໜີໃສ່ກະດານ
- ແຕ່ລະກຸ່ມຂຶ້ນສະເໜີໝົດແລ້ວຄູກໍສະຫຼຸບຄຳຕອບ

+ ຂໍ້ຖືກສຸດແມ່ນຂໍ້ ງ ເພາະເປັນສາເຫດຂອງການຂະຫຍາຍຕົວ

+ ຂໍ້ **ກ** ແມ່ນຮູບແບບຂອງການຂະຫຍາຍຕົວ ເປັນແບບວຽນກົ້ນຫອຍ

+ ຂໍ້ **ຂ** ເນື້ອໃນຂອງການຂະຫຍາຍແມ່ນສິ່ງໃໝ່ຫາກໍເກີດຂຶ້ນ

+ ຂໍ້ **ຄ** ເງື່ອນໄຂຂອງການຂະຫຍາຍຕົວ ແມ່ນແກ້ໄຂຂໍ້ຂັດແຍ່ງ

## 5. ການວັດ ແລະ ປະເມີນຜົນ

### 1. ແນະນຳການຕອບຄຳຖາມ ແລະ ແກ້ບົດເຝິກຫັດໃນປຶ້ມແບບຮຽນ

- ແນະນຳຕອບຄຳຖາມ
- ແນະນຳການແກ້ບົດເຝິກຫັດ

### 2. ອອກຂໍ້ທົດສອບ (ກວດກາ)

+ ຂໍ້ຂັດແຍ່ງແມ່ນແນວໃດ? (ຕາມຄວາມສຳນຶກຂອງປັດຊະຍາມາກ-ເລນິນ)

+ ຈົ່ງພິສູດການຕໍ່ສູ້ລະຫວ່າງບັນດາດ້ານກົງກັນຂ້າມແມ່ນຕົ້ນກຳເນີດຂອງການເຄື່ອນເໜັງ ແລະ ການຂະຫຍາຍຕົວ.

**ເອກະສານເພີ່ມເຕີມສຳລັບຄູ**

### 1. ຂໍ້ຂັດແຍ່ງແມ່ນຕົ້ນກຳເນີດຂອງການເຄື່ອນເໜັງ

ທ່ານເລນິນ ໄດ້ຢັ້ງຢືນຄຳເວົ້າຂອງທ່ານເຮເກນວ່າ: “ ທຸກສິ່ງວັດຖຸລ້ວນແຕ່ມີລັກສະນະຂໍ້ຂັດແຍ່ງຢູ່ໃນຕົວຂອງມັນເອງ... ” ຂໍ້ຂັດແຍ່ງແມ່ນຕົ້ນກຳເນີດການເຄື່ອນເໜັງຂອງທຸກສິ່ງວັດຖຸ ແລະ ທຸກສິ່ງທີ່ມີຊີວິດຢູ່ໃນໄລຍະໃດໜຶ່ງແຕ່ລະສິ່ງວັດຖຸນັ້ນກໍຈະມີຂໍ້ຂັດແຍ່ງເກີດຂຶ້ນໃນຕົວມັນເອງຈຶ່ງມີການເຄື່ອນເໜັງ, ມີກຳລັງໃໝ່ຊຸກດັນ ແລະ ເຮັດໃຫ້ມັນເຄື່ອນໄຫວ ”.

### 2. ບັນດາຂໍ້ຂັດແຍ່ງພື້ນຖານໃນປະເທດເຮົາ

ຂໍ້ຂັດແຍ່ງລະຫວ່າງກຳລັງການຜະລິດທີ່ຫຼ້າຫຼັງເກີນໄປກັບຄວາມຮຽກຮ້ອງຕ້ອງການໃນການຂະຫຍາຍຕົວ, ການຜະລິດ, ການຕອບສະໜອງຄວາມຕ້ອງການຂອງປະຊາຊົນໃນທຸກດ້ານນັບມື້ນັບເພີ່ມຂຶ້ນຢູ່ໃນສັງຄົມ.


2.1 ຂໍ້ຂັດແຍ່ງ
ແມ່ນຫຍັງ
2.2 ດ້ານກົງກັນ
ຂ້າມຂອງຂໍ້ຂັດແຍ່ງ
2. 4 ການຕໍ່ສູ້ລະ
ຫວ່າງບັນດາດ້ານທີ່
ກົງກັນຂ້າມ
2. ຂໍ້ຂັດແຍ່ງ
ຂອງສິ່ງວັດຖຸ
2.3 ຄວາມເປັນ
ເອກະພາບລະຫວ່າງ
ດ້ານກົງກັນຂ້າມ
ບົດທີ4: ຕົ້ນກຳເນີດ
ການເຄື່ອນເໜັງ, ການ
ຂະຫຍາຍຕົວຂອງສິ່ງ
ວັດຖຸ ແລະ ປາກົດການ
1. ເຫດຜົນການເຄື່ອນເໜັງ, ການຂະ
ຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ
3. ຂໍ້ຂັດແຍ່ງແມ່ນຕົ້ນກຳເນີດການ
ເຄື່ອນເໜັງ, ການຂະຫຍາຍຕົວຂອງ
ສິ່ງວັດຖຸ ແລະ ປາກົດການ
3.1. ການແກ້ໄຂຂໍ້
ຂັດແຍ່ງ
3.2 ຂໍ້ຂັດແຍ່ງຕ້ອງ
ແກ້ໄຂດ້ວຍການ
ຕໍ່ສູ້

# ບົດທີ 5 ຮູບແບບການເຄື່ອນເໜັງຂະຫຍາຍຕົວຂອງ ສິ່ງວັດຖຸ ແລະ ປາກົດການ

**ເວລາ 1 ຊົ່ວໂມງ**

## 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍກ່ຽວກັບດ້ານປະລິມານ ແລະ ດ້ານຄຸນນະພາບຂອງສິ່ງວັດຖຸ
- ອະທິບາຍຄວາມແຕກຕ່າງ ລະຫ່ວາງ ການປ່ຽນແປງທາງດ້ານປະລິມານກັບການປ່ຽນແປງທາງດ້ານຄຸນນະພາບ
- ປັບປຸງ ແລະ ພັດທະນາຕົນເອງທາງດ້ານຄວາມຮູ້ຄວາມສາມາດ ແລະ ຄຸນສົມບັດສິນທຳປະຕິວັດຢ່າງບໍ່ຢຸດຢັ້ງເພື່ອໃຫ້ກາຍເປັນຊັບພະຍາກອນມະນຸດທີ່ດີຂອງຊາດ

## 2. ເນື້ອໃນ

- ຄຸນນະພາບແມ່ນຫຍັງ
- ປະລິມານແມ່ນຫຍັງ
- ການພົວພັນລະຫວ່າງການປ່ຽນແປງດ້ານປະລິມານ ແລະ ຄຸນນະພາບ
  + ການປ່ຽນແປງດ້ານປະລິມານໄປສູ່ການປ່ຽນແປງດ້ານຄຸນນະພາບ
  + ຄຸນນະພາບໃໝ່ກັບປະລິມານໃໝ່

## 3. ສື່ການຮຽນ-ການສອນ

- ປື້ມແບບຮຽນ ແລະ ປື້ມຄູ່ມືຄູວິຊາສຶກສາພົນລະເມືອງຂັ້ນມ. 5
- ແຜ່ນວາດ ແລະ ຮູບພາບເພື່ອສະແດງປະລິມານ ແລະ ຄຸນນະພາບຂອງສິ່ງວັດຖຸ

## 4. ກິດຈະກຳການຮຽນ-ການສອນ

### ຊົ່ວໂມງທີ 1

1. **ທົບທວນບົດຮຽນເກົ່າ (ບົດທີ 4) ຄູຕັ້ງຄຳຖາມດັ່ງນີ້:**
   + ດ້ວຍເຫດໃດສິ່ງວັດຖຸຈຶ່ງມີການເຄື່ອນເໜັງ ແລະ ຂະຫຍາຍຕົວ?
   + ຍ້ອນຫຍັງບັນດາສິ່ງວັດຖຸ ແລະ ປາກົດການຈຶ່ງມີຂໍ້ຂັດແຍ່ງ?
   + ຂໍ້ຂັດແຍ່ງມີຈັກປະເພດແຕ່ລະປະເພດມີວິທີແກ້ໄຂແນວໃດ?

2. **ສົນທະນາລວມໃນຫ້ອງ ຫຼື ກຸ່ມກ່ຽວກັບຄຸນນະພາບຂອງສິ່ງວັດຖຸ**

- ຄູຕັ້ງຄຳຖາມ:
  + ຄຸນນະພາບແມ່ນຫຍັງ? ຈົ່ງຍົກຕົວຢ່າງ
  + ຄຸນນະພາບມີລັກສະນະຫຍັງແດ່?
- ຄູໃຫ້ນັກຮຽນຄົ້ນຄວ້າ ຫຼື ສົນທະນາກັບໝູ່ທີ່ຢູ່ໃກ້ຄຽງ
- ຄູໃຫ້ນັກຮຽນຈຳນວນໜຶ່ງຕອບຄຳຖາມ

**ຄູອະທິບາຍຄືນສິ່ງນັກຮຽນບໍ່ທັນເຂົ້າໃຈແຈ້ງ ແລະ ສະຫຼຸບເນື້ອໃນຄື:**

- ຄຸນນະພາບ ແມ່ນຄວາມສຳນຶກທີ່ຊີ້ບອກລັກສະນະກຳນົດພາຍໃນ ທີ່ມີມາແຕ່ເດີມຂອງສິ່ງວັດຖຸ ແລະ ປາກົດການ ແມ່ນການສັງລວມບັນດາລັກສະນະປະຈຳຕົວທີ່ມີມາແຕ່ເດີມເພື່ອຈຳແນກສິ່ງວັດຖຸນີ້ກັບສິ່ງວັດຖຸ ແລະ ປະກົດການອື່ນ. (ຕົວຢ່າງໃນປຶ້ມແບບຮຽນ)
- ຄຸນນະພາບຂອງວັດຖຸ ແລະ ປາກົດການມີລັກສະນະພາວະວິໄສເພາະມັນແມ່ນລັກສະນະກຳນົດພາຍໃນ ແລະ ລັກສະນະປະຈຳຕົວທີ່ມີມາແຕ່ເດີມ ໂດຍບໍ່ຂຶ້ນກັບຈິດໃຈຂອງຄົນເຮົາ .

3 . **ສົນທະນາກຸ່ມກ່ຽວກັບປະລິມານຂອງສິ່ງວັດຖຸ**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມໝາະສົມ
- ຄູຢາຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າ

**ຄຳຖາມ**

  + ປະລິມານແມ່ນຫຍັງ? ຈົ່ງຍົກຕົວຢ່າງແຕ່ 1-2 ຕົວຢ່າງ
  + ປະລິມານມີລັກສະນະຫຍັງແດ່? ຍ້ອນຫຍັງ?
- ຄູໃຫ້ຜູ້ຕາງໜ້າ ແຕ່ລະກຸ່ມຂຶ້ນສະເໜີ (ລາຍງານ), ນັກຮຽນຄົນອື່ນໆ ຕິດຕາມ ແລະ ປະກອບຄວາມເຫັນເພີ່ມ
- ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນຂໍ້ນີ້
  + ປະລິມານ ແມ່ນຄວາມສຳນຶກທີ່ຊີ້ບອກ ລັກສະນະປະຈຳຕົວ ທີ່ມີມາແຕ່ເດີມຂອງສິ່ງວັດຖຸ, ປາກົດການ. ປະລິມານບໍ່ໄດ້ຊີ້ບອກຄວາມແຕກຕ່າງລະຫວ່າງສິ່ງວັດຖຸນີ້ ກັບສິ່ງວັດຖຸ ແລະ ປາກົດການອື່ນ, ມັນພຽງແຕ່ຊີ້ບອກເຖິງຂະໜາດຄື: ໃຫຍ່, ນ້ອຍ, ຕ່ຳ, ສູງ, ຈຳນວນໜ້ອຍ ຫຼື ຫຼາຍ ແລະ ອື່ນໆ ຂອງສິ່ງວັດຖຸ, ປາກົດການໃນໂລກພາວະວິໄສ.

+ ປະລິມານຂອງວັດຖຸ ແລະ ປາກົດການມີລັກສະນະພາວະວິໄສ ເພາະມັນແມ່ນລັກສະນະກຳນົດພາຍໃນ ແລະ ແມ່ນລັກສະນະປະຈຳຕົວທີ່ມີມາແຕ່ເດີມ ໂດຍບໍ່ຂຶ້ນກັບຈິດໃຈຂອງຄົນເຮົາ.

**4. ສົນທະນາລວມໃນຫ້ອງ ຫຼື ກຸ່ມກ່ຽວກັບການປ່ຽນແປງຄຸນນະພາບ ແລະ ປະລິມານຂອງສິ່ງວັດຖຸ**

- ຄູຕັ້ງຄຳຖາມ:
  + ປະລິມານ ແລະ ຄຸນນະພາບມີການພົວພັນກັນແນວໃດ?
  + ການປ່ຽນແປງທາງດ້ານປະລິມານຈະນຳໄປສູ່ການປ່ຽນແປງດ້ານໃດ?
  + ໃນເມື່ອສິ່ງວັດຖຸໃດໜຶ່ງ ໄດ້ມີການຫັນປ່ຽນຈາກຄຸນນະພາບເກົ່າ ໄປສູ່ຄຸນນະພາບໃໝ່ ແລ້ວສິ່ງວັດຖຸນັ້ນຈະເກີດມີປະລິມານໃໝ່ ຫຼື ບໍ?
- ຄູໃຫ້ນັກຮຽນໃນຫ້ອງ ຫຼື ກຸ່ມຕອບຄຳຖາມຕາມລຳດັບ

**ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນຄຳຕອບຄືດັ່ງນີ້** :

- ປະລິມານ ແລະ ຄຸນນະພາບມີການພົວພັນກັນຢ່າງສັດຈະວິພາກພ້ອມກັນຄົງຕົວຢູ່ໃນສິ່ງວັດຖຸ ແລະ ປາກົດການດຽວກັນ, ທຸກໆສິ່ງວັດຖຸ ແລະ ປາກົດການລ້ວນ ແຕ່ແມ່ນຄວາມເປັນເອກະພາບລະຫວ່າງປະລິມານ ແລະ ຄຸນນະພາບ, ບໍ່ມີສິ່ງວັດຖຸໃດທີ່ຄົງຕົວພຽງແຕ່ປະລິມານ ແລະ ບໍ່ມີສິ່ງວັດຖຸໃດທີ່ຄົງຕົວແຕ່ດ້ານຄຸນນະພາບ ໂດຍປະສາຈາກດ້ານປະລິມານ.
- ການປ່ຽນແປງທາງດ້ານປະລິມານ ຈະນຳໄປສູ່ການປ່ຽນແປງດ້ານຄຸນນະພາບຢ່າງແນ່ນອນ ໃນເມື່ອການປ່ຽນແປງທາງປະລິມານຫາກຜ່ານຈຸດຂີດຂັ້ນຂອງມັນແລ້ວ.
- ໃນເມື່ອສິ່ງວັດຖຸໃດໜຶ່ງ ໄດ້ມີການຫັນປ່ຽນຈາກຄຸນນະພາບເກົ່າ ໄປສູ່ຄຸນນະໃໝ່ສິ່ງວັດຖຸນັ້ນຈະເກີດມີປະລິມານໃໝ່ຢ່າງແນ່ນອນອາດຈະໄວ ຫຼື ຊ້າເທົ່ານັ້ນ (ຕົວຢ່າງ)
- ຄູແນະນຳໃຫ້ນັກຮຽນຮັບຮູ້, ເຂົ້າໃຈວ່າທຸກໆສິ່ງວັດຖຸ, ປາກົດການລ້ວນແຕ່ປະກອບດ້ວຍປະລິມານ ແລະ ຄຸນນະພາບ; ປະລິມານ ແລະ ຄຸນນະພາບມີການພົວພັນນຳ ກັນຢ່າງສັດຈະວິພາກ, ການປ່ຽນແປງທາງປະລິມານ ຈະພາໄປເຖິງການປ່ຽນແປງທາງດ້ານຄຸນນະພາບ, ຖ້າຄົນເຮົາຫາກມີຈຸດປະສົງຢາກເຮັດໃຫ້ສິ່ງວັດຖຸ ແລະ ປາກົດການໃດໜຶ່ງມີການປ່ຽນແປງທາງດ້ານຄຸນນະພາບ, ກໍຕ້ອງສ້າງເງື່ອນໄຂທຸກຢ່າງທີ່ຈຳເປັນເພື່ອເຮັດ

ໃຫ້ມີການສະສົມປະລິມານພຽງພໍ ໃຫ້ແກ່ການຫັນປ່ຽນຈາກຄຸນນະພາບເກົ່າໄປສູ່ຄຸນນະພາບໃໝ່. ການພົວພັນສັດຈະວິພາກລະຫວ່າງປະລິມານກັບຄຸນນະພາບກາຍເປັນກົດເກນການຫັນປ່ຽນທາງປະລິມານສູ່ການຫັນປ່ຽນທາງດ້ານຄຸນະພາບ

## 5. ການວັດ ແລະ ປະເມີນຜົນ

- ຄູແນະນຳໃຫ້ນັກຮຽນຂຽນບົດລາຍງານປະຈຳບົດ ຫຼື ຄົ້ນຄວ້າຕາມຄຳຖາມໃນປື້ມແບບຮຽນຄື:
  + ປະລິມານແມ່ນຫຍັງ?
  + ຄຸນນະພາບແມ່ນຫຍັງ?
  + ປະລິມານ ແລະ ຄຸນນະພາບມີການພົວພັນກັນແນວໃດ?
  + ຈົ່ງອະທິບາຍການປ່ຽນແປງທາງປະລິມານທີ່ພາໃຫ້ມີການປ່ຽນແປງທາງດ້ານຄຸນນະພາບຂອງສິ່ງວັດຖຸ
  + ການປ່ຽນແປງທາງປະລິມານ ແລະ ຄຸນນະພາບມີຄວາມແຕກຕ່າງກັນແນວໃດ?
  + ພວກນ້ອງນັກຮຽນທຸກໆ ຄົນຈະນຳໃຊ້ຄວາມຮູ້ການປ່ຽນແປງທາງປະລິມານ ແລະ ຄຸນນະພາບເຂົ້າໃນຊີວິດຂອງຕົນແນວໃດ?

# ບົດທີ 6 ທ່າອ່ຽງຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ

**ເວລາ 1 ຊົ່ວໂມງ**

## 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍກ່ຽວກັບການປະຕິເສດແບບອະພິທຳ ແລະ ການປະຕິເສດແບບສັດຈະວິພາກຂອງສິ່ງວັດຖຸ ແລະ ປາກົດການ
- ອະທິບາຍຄວາມແຕກຕ່າງລະຫ່ວາງການປະຕິເສດແບບອະພິທຳ ແລະ ການປະຕິເສດແບບສັດຈະວິພາກ
- ອະທິບາຍຄວາມໝາຍ ກ່ຽວກັບທ່າອ່ຽງຂະຫຍາຍຕົວ ຫຼື ການປະຕິເສດ ຊ້ອນປະຕິເສດຂອງສິ່ງວັດຖຸ ແລະ ປາກົດການ
- ປັບປຸງ ແລະ ພັດທະນາຕົນເອງທາງດ້ານຄວາມຮູ້ຄວາມສາມາດ ແລະ ຄຸນສົມບັດສົນທຳປະຕິວັດຢ່າງບໍ່ຢຸດຢັ້ງເພື່ອໃຫ້ກາຍເປັນຊັບພະຍາກອນມະນຸດທີ່ດີຂອງຊາດ.

## 2. ເນື້ອໃນ

- ການປະຕິເສດສັດຈະວິພາກ ແລະ ການປະຕິເສດແບບອະພິທຳ
  + ການປະຕິເສດແມ່ນຫຍັງ
  + ການປະຕິເສດແບບອະພິທຳ
  + ການປະຕິເສດແບບສັດຈະວິພາກ
- ທ່າອ່ຽງການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ

## 3. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາສຶກສາພົນລະເມືອງຂັ້ນມ.5
- ແຜ່ນວາດ, ຮູບພາບເພື່ອສະແດງການປະຕິເສດແບບອະພິທຳ, ການປະຕິເສດແບບສັດຈະວິພາກ ແລະ ທ່າອ່ຽງການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ

## 4. ກິດຈະກຳການຮຽນ-ການສອນ

**1. ທົບທວນບົດຮຽນເກົ່າ (ບົດທີ 5) ຄູຕັ້ງຄຳຖາມດັ່ງນີ້:**

+ ປະລິມານແມ່ນຫຍັງ?
+ ຄຸນນະພາບແມ່ນຫຍັງ?
+ ປະລິມານ ແລະ ຄຸນນະພາບມີການພົວພັນກັນຄືແນວໃດ?
+ ຈົ່ງອະທິບາຍການປ່ຽນແປງທາງປະລິມານທີ່ພາໃຫ້ມີການປ່ຽນແປງທາງດ້ານຄຸນນະພາບຂອງສິ່ງວັດຖຸ.

**2 ສົນທະນາລວມໃນຫ້ອງ ຫຼື ກຸ່ມກ່ຽວກັບການປະຕິເສດຂອງສິ່ງວັດຖຸ**

- ຄູຕັ້ງຄຳຖາມ
  + ການປະຕິເສດແມ່ນຫຍັງ?
  + ການປະຕິເສດມີຈັກປະເພດ, ຄືປະເພດໃດແດ່?
  + ການປະຕິເສດໃນທຳມະຊາດ ແລະ ໃນສັງຄົມແຕກຕ່າງກັນຄືແນວໃດ?
- ຄູໃຫ້ນັກຮຽນຄົ້ນຄວ້າ ຫຼື ສົນທະນາກັບໝູ່ທີ່ຢູ່ໃກ້ຄຽງ
- ຄູໃຫ້ນັກຮຽນຈຳນວນໜຶ່ງຕອບຄຳຖາມ
- ຄູອະທິບາຍຄືນ ແລະ ສະຫຼຸບເນື້ອໃນຄື:
  + ການປະຕິເສດແມ່ນການປ່ຽນແທນສິ່ງເກົ່າດ້ວຍສິ່ງໃໝ່ບົນພື້ນຖານສິ່ງເກົ່າ ແລະ ກ້າວໜ້າກ່ວາເກົ່າໂດຍຜ່ານຂະບວນວິວັດແຫ່ງການເຄື່ອນເໜັງ ແລະ ຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ.
  + ການປະຕິເສດມີສອງຮູບການຄື: ການປະຕິເສດແບບອະພິທຳ ແລະ ການປະຕິເສດແບບສັດຈະວິພາກ.
  + ການປະຕິເສດຢູ່ໃນທຳມະຊາດ ແລະ ຢູ່ໃນສັງຄົມ ຈະມີຈຸດຄືກັນ ແລະ ຈຸດທີ່ແຕກຕ່າງກັນໂດຍຂຶ້ນກັບລັກສະນະຈຸດພິເສດຂອງແຕ່ລະສິ່ງວັດຖຸ ແລະ ປາກົດການນັ້ນເອງ (ຕົວຢ່າງ)....

**3. ສົນທະນາເປັນກຸ່ມກ່ຽວກັບການປະຕິເສດແບບອະພິທຳ ແລະ ການປະຕິເສດແບບສັດຈະວິພາກຂອງສິ່ງວັດຖຸ**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ

- ຄູຢາຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າ

**ຄຳຖາມ**

+ ການປະຕິເສດແບບອະພິທຳແມ່ນຫຍັງ? ຈົ່ງຍົກຕົວຢ່າງ
+ ການປະຕິເສດແບບສັດຈະວິພາກແມ່ນຫຍັງແດ່? ຈົ່ງຍົກຕົວຢ່າງ

- ຄູໃຫ້ຜູ້ຕາງໜ້າແຕ່ລະກຸ່ມຂຶ້ນສະເໜີ (ລາຍງານ), ນັກຮຽນຄົນອື່ນໆ ຕິດຕາມ ແລະ ປະກອບຄວາມເຫັນເພີ່ມເຕີມ.

**ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນຄື:**

- ການປະຕິເສດແບບອະພິທຳ ແມ່ນການປ່ຽນແທນສິ່ງເກົ່າດ້ວຍສິ່ງໃໝ່ ໂດຍອີງໃສ່ການກະ ທົບຈາກພາຍນອກ ຫຼື ສາຍພົວພັນພາຍນອກ, ເປັນການທຳລາຍການຂະຫຍາຍຕົວ ແລະ ເປັນການປະຕິເສດທີ່ບໍ່ມີການສືບທອດເອົາປັດໄຈກ້າວໜ້າຂອງສິ່ງເກົ່າ.

**ຕົວຢ່າງ**

- ຕັດໄມ້ຕົ້ນໜຶ່ງໃຫ້ຂາດ (ໃຫ້ຕາຍ) ຕົ້ນໄມ້ຕົ້ນນີ້ຈະບໍ່ຂະຫຍາຍຕົວຕໍ່ໄປອີກ
- ຂ້າໄກ່ ໂຕໜຶ່ງໃຫ້ຕາຍ, ໄກ່ ໂຕນີ້ຈະບໍ່ເຕີບໃຫ່ຍຂະຫຍາຍຕົວຕໍ່ໄປອີກ
- ເຮົາທັບຈອກແກ້ວອັນໜຶ່ງໃຫ້ແຕກຈະເຫັນວ່າຈອກແກ້ວນີ້ໄດ້ປ່ຽນຮູບຮ່າງ ແລະ ບໍ່ສາມາດໃຊ້ໄດ້ອີກ ຖ້າຫາກບໍ່ນຳໄປຜະລິດຄືນໃໝ່.

+ ການປະຕິເສດສັດຈະວິພາກ ແມ່ນການປ່ຽນແທນສິ່ງເກົ່າດ້ວຍສິ່ງໃໝ່ບົນພື້ນຖານສິ່ງເກົ່າ ແລະ ກ້າວໜ້າກວ່າເກົ່າ ໂດຍຜ່ານຂະບວນວິວັດແຫ່ງການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການຢູ່ໃນໂລກພາວະວິໄສ.

**ຕົວຢ່າງ**

- ໄຂ່ໄກ່ເມື່ອໄດ້ຖືກຟັກດ້ວຍເງື່ອນໄຂອັນເໝາະສົມ ກໍຈະແຕກອອກມາເປັນຕົວໄກ່ນ້ອຍ ໝາຍຄວາມວ່າໄກ່ນ້ອຍໄດ້ປ່ຽນແທນໄຂ່ໄກ່ (ໄກ່ນ້ອຍໄດ້ປະຕິເສດໄຂ່ໄກ່)
- ເມັດເຂົ້າເປືອກເມື່ອຖືກຫວ່ານລົງດິນໂດຍມີຄວາມຊູ່ມ ແລະ ອາກາດທີ່ເໝາະສົມ ກໍຈະແຕກອອກມາເປັນຕົ້ນເຂົ້ານ້ອຍ (ຕົ້ນກ້າ) ໝາຍຄວາມວ່າຕົ້ນເຂົ້າໄດ້ປ່ຽນແທນເມັດເຂົ້າເປືອກ.

**4. ສົນທະນາລວມໃນຫ້ອງ ກ່ຽວກັບຄວາມແຕກຕ່າງ ລະຫວ່າງ ການປະຕິເສດແບບອະພິທຳ ແລະ ການປະຕິເສດແບບສັດຈະວິພາກ**

- ຄູຕັ້ງຄຳຖາມໃຫ້ນັກຮຽນຄົ້ນຄວ້າ
  + ການປະຕິເສດແບບອະພິທຳແຕກຕ່າງກັບການປະຕິເສດແບບສັດຈະວິພາກຄືແນວໃດ?
  + ການປະຕິເສດແບບສັດຈະວິພາກມີຈຸດພິເສດຫຍັງແດ່? ຈົ່ງຍົກຕົວຢ່າງການປະຕິເສດມີລັກສະນະຄືແນວໃດ?
- ຄູໃຫ້ນັກຮຽນຕອບຄຳຖາມ, ນັກຮຽນຄົນອື່ນໆ ຕິດຕາມ ແລະ ປະກອບຄວາມເຫັນເພີ່ມເຕີມ

**ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນຄື:**

- ການປະຕິເສດແບບອະພິທຳ ກັບການປະຕິເສດແບບສັດຈະວິພາກ ມີຄວາມແຕກຕ່າງກັນຍ້ອນວ່າ: ການປະຕິເສດແບບອະພິທຳ ແມ່ນການປະຕິເສດທີ່ເປັນການດັບສູນການຂະ ຫຍາຍຕົວ ໂດຍໃຊ້ກຳລັງແຮງຈາກພາຍນອກ ແຕ່ກົງກັນຂ້າມການປະຕິເສດແບບສັດ ຈະວິພາກແມ່ນການປະຕິເສດດ້ວຍຕົນເອງ ໂດຍອາໄສກຳລັງແຮງພາຍໃນ, ແມ່ນການປະຕິເສດທີ່ເປັນ ປັດໄຈໃຫ້ແກ່ການຂະຫຍາຍຕົວ ແລະ ທັງເປັນການປະຕິເສດທີ່ມີການສືບທອດເອົາປັດໄຈທີ່ກ້າວໜ້າຂອງອັນເກົ່າ ສ້າງເປັນພື້ນຖານໃຫ້ແກ່ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການນັ້ນໆ (ຕົວຢ່າງໃນປຶ້ມແບບ ຮຽນ)

**ການປະຕິເສດແບບສັດຈະວິພາກມີ 2 ຈຸດພິເສດຄື:**

+ ການປະຕິເສດສັດຈະວິພາກແມ່ນການປະຕິເສດດ້ວຍຕົນເອງໂດຍຜ່ານການເຄື່ອນເໜັງດ້ວຍຕົວເອງຂອງສິ່ງວັດຖຸ ແລະ ປາກົດການນັ້ນໝາຍວ່າ: ຜ່ານການຕໍ່ສູ້ຂອງບັນດາດ້ານທີ່ກົງກັນຂ້າມ ເຊິ່ງນອນຢູ່ໃນຕົວຂອງສິ່ງວັດຖຸ ແລະ ປາກົດການນັ້ນເອງ; ການປະຕິເສດສັດຈະວິພາກ ແມ່ນການປະຕິເສດທີ່ມີການສືບທອດເອົາປັດໄຈທີ່ກ້າວໜ້າຂອງສິ່ງເກົ່າຢ່າງມີການເລືອກເຟັ້ນ ເພື່ອສ້າງເປັນພື້ນຖານໃຫ້ແກ່ການຄົງຕົວ ແລະ ຂະຫຍາຍຕົວຂອງສິ່ງໃໝ່ຕາມເງື່ອນໄຂໃໝ່. (ຕົວຢ່າງໃນປຶ້ມແບບຮຽນ)
+ ການປະຕິເສດແມ່ນລັກສະນະລວມທົ່ວໄປ ແລະ ຈຳເປັນຂອງທຸກໆສິ່ງວັດຖຸ, ປາກົດການ; ມັນເປັນລັກສະນະພິເສດຂອງທຸກໆການຂະຫຍາຍຕົວ ແລະ ແມ່ນປັດໄຈທີ່ຂາດບໍ່ໄດ້ໃນການຂະຫຍາຕົວຂອງບັນດາສິ່ງວັດຖຸ ແລະ ປາກົດການໃນໂລກພາວະວິໄສ.

5. ສົນທະນາລວມໃນຫ້ອງ ຫຼື ໃນກຸ່ມກ່ຽວກັບທ່າອ່ຽງຂະຫຍາຍຕົວຂອງສິ່ງວັດຖຸ

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູຢາຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າ

**ຄຳຖາມ**

+ ການຂະຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການມີລັກສະນະຄືແນວໃດ? ຈົ່ງຍົກຕົວຢ່າງ
+ ຕົ້ນກຳເນີດຂອງການຂະຫຍາຍຕົວແມ່ນຫຍັງ?
+ ເປັນຫຍັງການປະຕິເສດຈຶ່ງມີລັກສະນະຮອບວຽນ?

- ຄູໃຫ້ຜູ້ຕາງໜ້າແຕ່ລະກຸ່ມຂຶ້ນສະເໜີ, ນັກຮຽນຄົນອື່ນໆ ຕິດຕາມ ແລະ ປະກອບຄວາມເຫັນເພີ່ມເຕີມ

**ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນຄື:**

- ຂະບວນວິວັດແຫ່ງການຂະຫຍາຍຕົວຂອງສິ່ງວັດຖຸມີລັກສະນະເປັນໄປຕາມຮອບວຽນ ຕົ້ນກຳເນີດຂອງການຂະຫຍາຍຕົວແມ່ນເກີດມາຈາກການຕໍ່ສູ້ຂອງບັນດາດ້ານທີ່ນອນໃນຕົວຂອງສິ່ງວັດຖຸ ແລະ ປະກົດການນັ້ນເອງ.
- ການປະຕິເສດມີລັກສະນະເປັນຮອບວຽນນັ້ນຍ້ອນວ່າບັນດາສິ່ງວັດຖຸ ແລະ ປາກົດການໃນໂລກພາວະວິໄສມີການເຄື່ອນເໜັງ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ຈຶ່ງເຮັດໃຫ້ຮອບວຽນຂອງການປະຕິເສດຊ້ອນປະຕິເສດບໍ່ສຸດ ດ້ວຍເຫດນັ້ນ ການປະຕິເສດຂອງປະຕິເສດໄດ້ເຮັດໃຫ້ຂໍ້ຂັດແຍ່ງນີ້ໄດ້ຮັບການແກ້ໄຂ ແລະ ສິ່ງວັດຖຸອັນເກົ່າທີ່ຫຼ້າຫຼັງໄດ້ຖືກປ່ຽນແທນດ້ວຍສິ່ງວັດຖຸອັນໃໝ່ທີ່ກ້າວໜ້າກ່ວາເກົ່າ, ສິ່ງວັດຖຸ ຫຼື ປາກົດການໃໝ່ເກີດຂຶ້ນ, ກໍບັນຈຸຂໍ້ຂັດແຍ່ງໃໝ່ມາດ້ວຍຕົວມັນເອງ, ຂໍ້ຂັດແຍ່ງດັ່ງກ່າວສືບຕໍ່ຂະຫຍາຍຕົວຈົນເຖິງໄລຍະເວລາໃດໜຶ່ງ ທີ່ແນ່ນອນຂໍ້ຂັດແຍ່ງນີ້ຈະໄດ້ຮັບການແກ້ໄຂ ແລະ ສິ່ງວັດຖຸເກົ່າກໍຈະຖືກປ່ຽນແທນດ້ວຍສິ່ງວັດຖຸອັນໃໝ່ອີກ ໝາຍຄວາມວ່າ: ການປະຕິເສດຂອງສິ່ງວັດຖຸ ແລະ ປາກົດການໄດ້ກາຍເປັນຮອບວຽນແຫ່ງການຂະຫຍາຍຕົວ, ຜ່ານຮອບວຽນໜຶ່ງແຫ່ງການຂະຫຍາຍຕົວ ສິ່ງວັດຖຸຈະຖືກປະຕິເສດເທື່ອໜຶ່ງ ຫຼື ຫຼາຍເທື່ອສິ່ງວັດຖຸ ແລະ ປາກົດການນັ້ນຄ້າຍຄືກັບ ອັນເກົ່າແຕ່ກ້າວໜ້າກ່ວາເກົ່າ, ບໍ່ມີການປະຕິເສດ

ໃດໆຈະເປັນການປະຕິເສດເທື່ອສຸດທ້າຍ ແລະ ບໍ່ມີອັນໃໝ່ໃດໆ ຈະເປັນອັນໃໝ່ເທື່ອສຸດທ້າຍ.

## 5. ການວັດ ແລະ ປະເມີນຜົນ

- ຄູແນະນຳໃຫ້ນັກຮຽນຂຽນບົດລາຍງານປະຈຳບົດ ຫຼື ຄົ້ນຄວ້າຕາມຄຳຖາມໃນປຶ້ມແບບຮຽນ
- ສັງເກດຈາກ:

  + ການຕອບຄຳຖາມ

  + ການເຮັດກິດຈະກຳກຸ່ມ

  + ການຂຶ້ນລາຍງານແຕ່ລະກຸ່ມ

# ບົດທີ 7 ພຶດຕິກຳ ແລະ ບົດບາດຂອງພຶດຕິກຳ ຕໍ່ກັບຄວາມຮັບຮູ້

**ເວລາ 2 ຊົ່ວໂມງ**

## 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍກ່ຽວກັບຄວາມຮັບຮູ້ຂອງມະນຸດ
- ອະທິບາຍຂະບວນວິວັດແຫ່ງຄວາມຮັບຮູ້ດ້ວຍການສຳພັດທາງອິນຊີ ແລະ ຄວາມຮັບຮູ້ດ້ວຍຕັກກະຖານ
- ອະທິບາຍຄວາມໝາຍກ່ຽວກັບພຶດຕິກຳ ແລະ ບົດບາດຂອງພຶດຕິກຳຕໍ່ກັບຄວາມຮັບຮູ້
- ປັບປຸງ ແລະ ພັດທະນາຕົນເອງທາງດ້ານຄວາມຮູ້ຄວາມສາມາດ ແລະ ຄຸນສົມບັດສົນທຳປະຕິວັດ ເພື່ອໃຫ້ກາຍເປັນຊັບພະຍາກອນມະນຸດທີ່ດີຂອງຊາດ

## 2. ເນື້ອໃນ

- ຄວາມຮັບຮູ້ແມ່ນຫັຍງ?
  + ຄວາມຮັບຮູ້ດ້ວຍການສຳພັດຖານ (ສຳພັດອິນຊີ)
  + ການຮັບຮູ້ດ້ວຍຕັກກະຖານ (ນາມມະທຳ)
- ພຶດຕິກຳແມ່ນຫັຍງ
- ບົດບາດຂອງພຶດຕິກຳຕໍ່ຄວາມຮັບຮູ້
  + ພຶດຕິກຳແມ່ນພື້ນຖານຂອງຄວາມຮັບຮູ້
  + ພຶດຕິກຳແມ່ນຈຸດປະສົງຂອງຄວາມຮັບຮູ້
  + ພຶດຕິກຳແມ່ນເປົ້າໝາຍຂອງຄວາມຮັບຮູ້
  + ພຶດຕິກຳແມ່ນມາດຖານຂອງຄວາມຮັບຮູ້

## 3. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາສຶກສາພົນລະເມືອງຂັ້ນມ.5
- ແຜ່ນວາດ, ຮູບພາບ ເພື່ອສະແດງເສັ້ນທາງສັດຈະວິພາກແຫ່ງຄວາມຮັບຮູ້ ແລະ ບົດບາດຂອງພຶດຕິກຳ.

## 4. ກິດຈະກຳການຮຽນ-ການສອນ

**ຊົ່ວໂມງທີ 1**

**1. ທົບທວນບົດຮຽນເກົ່າ (ບົດທີ6) ຄູຕັ້ງຄຳຖາມ**

+ ການປະຕິເສດແມ່ນຫຍັງ?
+ ການປະຕິເສດແບບອະພິທຳແມ່ນຫຍັງ?
+ ການປະຕິເສດແບບສັດວິພາກແມ່ນຫຍັງ?
+ ການປະຕິເສດແບບອະພິທຳ ກັບ ການປະຕິເສດແບບສັດຈະວິພາກ ມີຄວາມແຕກຕ່າງກັນແນວໃດ?
+ ເປັນຫຍັງຈຶ່ງເວົ້າວ່າການຂະຫຍາຍຕົວແມ່ນທ່າອ່ຽງລວມຂອງທຸກໆສິ່ງວັດຖຸ?
+ ຢູ່ໃນໂລກນີ້ມີສິ່ງໃດທີ່ເກົ່າຕະຫຼອດໄປ ຫຼື ໃໝ່ຕະຫຼອດໄປ? ຍ້ອນຫຍັງ?

**2. ສົນທະນາລວມໃນຫ້ອງ ຫຼື ກຸ່ມກ່ຽວກັບການປະຕິເສດຂອງສິ່ງວັດຖຸ**

- ຄູຕັ້ງຄຳຖາມ
  + ຄວາມຮັບຮູ້ແມ່ນຫຍັງ?
  + ການສອ່ງແສງມີຈັກປະເພດ, ປະເພດໃດແດ່?
  + ເປັນຫຍັງຈຶ່ງເວົ້າວ່າການສ່ອງແສງຂອງຄົນຈຶ່ງແມ່ນຮູບການສ່ອງແສງສູງສຸດ?
  + ທິດສະດີແຫ່ງຄວາມຮັບຮູ້ແມ່ນຫຍັງ?
  + ທາດແທ້ຂອງຄວາມຮັບຮູ້ແມ່ນຫຍັງ?
- ຄູໃຫ້ນັກຮຽນຄົ້ນຄວ້າ ຫຼື ສົນທະນາກັບໝູ່ທີ່ຢູ່ໃກ້ຄຽງ
- ຄູໃຫ້ນັກຮຽນຈຳນວນໜຶ່ງ ຕອບຄຳຖາມຕາມລຳດັບ

**ຄູອະທິບາຍຄືນສິ່ງນັກຮຽນບໍ່ທັນເຂົ້າໃຈແຈ້ງ ແລະ ສະຫຼຸບເນື້ອໃນຄື**:

- ຄວາມຮັບຮູ້ແມ່ນການສ່ອງແສງຄວາມເປັນຈິງ ພາວະວິໄສຢ່າງຕັ້ງໜ້າ ແລະ ມີເປົ້າໝາຍຢູ່ໃນຈິດສຳນຶກຂອງຄົນເຮົາ.
- ໃນນັ້ນການສອ່ງແສງມີຫຼາຍປະເພດຄື: ການສ່ອງແສງຂອງອະນົງຄະທາດ (ສິ່ງທີ່ບໍ່ມີຊີວິດ) ແລະ ການສອ່ງແສງຂອງອົງຄະທາດ (ສິ່ງທີ່ມີຊີວິດ)ຄື: ພຶກສາສາດ, ສັດ ແລະ ຄົນ,ການສອ່ງແສງຂອງຄົນແມ່ນຮູບການສອ່ງແສງສູງສຸດ .

- ການສ່ອງແສງຂອງຄົນແມ່ນການສ່ອງແສງໂລກພາວະວິໄສຢ່າງມີຈຸດປະສົງ, ເປົ້າໝາຍ , ມີແບບວິທີຢ່າງເປັນເຈົ້າການ ໂດຍຜ່ານການສຳຜັດທາງອິນຊີໄປເຖິງຈິນຕະນາການ ແລະ ໄດ້ຮັບການທົດສອບ, ກວດກາຈາກພຶດຕິກຳຕົວຈິງ .
- ທັດສະດີຄວາມຮັບຮູ້ ແມ່ນຫຼັກທິດສະດີກ່ຽວກັບກຳລັງຄວາມສາມາດໃນການຮັບຮູ້ໂລກພາວະວິໄສບົນພື້ນຖານການແກ້ໄຂບັນຫາພື້ນຖານຂອງປັດຊະຍາຢ່າງຖືກຕ້ອງ.
- ທິດສະດີຄວາມຮັບຮູ້ຂອງລັດທິວັດຖຸນິຍົມສັດຈະວິພາກຖືວ່າ: ຄວາມຮັບຮູ້ແມ່ນຂະບວນວິວັດແຫ່ງການສ່ອງແສງໂລກຢ່າງມີສະຕິຕື່ນຕົວເປັນເຈົ້າການ, ຖືເອົາພຶດຕິກຳເປັນພື້ນຖານ, ເປັນກຳລັງດັນ. ເປັນຈຸດປະສົງ ແລະ ເປັນມາດຖານໃນການກວດກາຕີລາຄາຄວາມຖືກຕ້ອງຊັດເຈນຂອງຄວາມຮັບຮູ້.
- ທາດແທ້ຂອງຄວາມຮັບຮູ້ ແມ່ນວິວັດແຫ່ງການສ່ອງແສງຄວາມເປັນຈິງ ພາວະວິໄສຢ່າງສັດຈະວິພາກ, ຕັ້ງໜ້າ, ແຕ່ປາກົດການເຖິງທາດແທ້ ໂດຍຜ່ານການເຄື່ອນໄຫວພຶດຕິກຳຕົວຈິງເພື່ອຮັບຮູ້ ແລະ ດັດສ້າງໂລກຂອງຄົນເຮົາ.

**3. ສົນທະນາເປັນກຸ່ມກ່ຽວກັບເສັ້ນທາງສັດຈະວິພາກແຫ່ງຄວາມຮັບຮູ້**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູຢາຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າ

**ຄຳຖາມ**

+ ຄວາມຮັບຮູ້ດ້ວຍການສຳຜັດທາງອິນຊີແມ່ນຫຍັງ? ມີຂັ້ນຕອນໃດແດ່?
+ ຄວາມຮັບຮູ້ດ້ວຍຕັກກະຖານແມ່ນຫຍັງ? ມີຂັ້ນຕອນໃດແດ່?
+ ຄວາມຮັບຮູ້ດ້ວຍການສຳຜັດທາງອິນຊີ ແລະ ຄວາມຮັບຮູ້ດ້ວຍ ຕັກກະຖານມີການພົວພັນກັນແນວໃດ?

- ຄູໃຫ້ຜູ້ຕາງໜ້ານັກຮຽນແຕ່ລະກຸ່ມຂຶ້ນສະເໜີ, ນັກຮຽນຄົນອື່ນໆຕິດຕາມ ແລະ ປະກອບຄວາມເຫັນເພີ່ມເຕີມ

**ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນຄື:**

- ຄວາມຮັບຮູ້ດ້ວຍການສຳຜັດທາງອິນຊີ ແມ່ນການສ່ອງແສງການກະທົບໂດຍກົງຢ່າງມີຊີວິດຊີວາຂອງໂລກພາວະວິໄສ ເຂົ້າໃນມັນສະໝອງຂອງຄົນເຮົາ, ໂດຍຜ່ານການເຄື່ອນໄຫວຂອງບັນດາອິນຊີ, ຈຶ່ງເຮັດໃຫ້ຄົນເຮົາມີຄວາມຮູ້ສຶກອັນແນ່ນອນໃດໜຶ່ງທີ່ ເປັນພື້ນ

**ຄູອາດຈະອະທິບາຍກ່ຽວກັບສາມຂັ້ນຕອນຕື່ມ**

- ຄວາມຮູ້ສຶກແມ່ນຮູບການທຳອິດຂອງການສ່ອງແສງໂລກພາວະວິໄສ, ໃນເມື່ອສິ່ງວັດຖຸ ແລະ ປະກົດການໄດ້ກະທົບໃສ່ອິນຊີຂອງຄົນເຮົາ ໂດຍຜ່ານການເຄື່ອນໄຫວຂອງອິນຊີທັງຫ້າຄົນເຮົາຈຶ່ງເກີດມີຄວາມຮູ້ສຶກທາງຕາ, ຫູ, ດັງ, ລີ້ນ, ຜິວໜັງ ເຊິ່ງແຕ່ລະອັນໄດ້ສ່ອງແສງພຽງແຕ່ບາງລັກສະນະສະເພາະ ແລະ ບາງດ້ານຂອງສິ່ງວັດຖຸ ຫຼື ປາກົດການເທົ່ານັ້ນ. ຄວາມຮູ້ສຶກແມ່ນຕົ້ນກຳເນີດ ແຫ່ງຄວາມຮັບຮູ້ໂລກພາວະວິໄສຂອງຄົນເຮົາ ແລະ ມີບົດບາດສຳຄັນຕໍ່ການຮັບຮູ້ ແລະ ດັດສ້າງໂລກຂອງຄົນເຮົາ.
- ຄວາມຮັບຮູ້ດ້ວຍຕັກກະຖານແມ່ນບາດກ້າວຄວາມຮັບຮູ້ສູງສຸດທີ່ເກີດຂຶ້ນບົນພື້ນຖານຂໍ້ມູນທີ່ສະສົມໄວ້ໃນໄລຍະຄວາມຮັບຮູ້ດ້ວຍການສຳຜັດຖານ, ຄວາມຮັບຮູ້ໃນໄລຍະນີ້ປະກອບມີຄວາມສຳນຶກ, ການສັນນິຖານ ແລະ ການໄຕ່ຕອງ.

**ຄູອາດຈະອະທິບາຍເພີ່ມເຕີມກ່ຽວກັບຄວາມຮັບຮູ້ໃນ 3 ໄລຍະ**

- ຄວາມຮັບຮູ້ດ້ວຍການສຳຜັດທາງອິນຊີ ແລະ ຄວາມຮັບຮູ້ດ້ວຍຕັກກະຖານມີການພົວພັນກັນຢ່າງສັດຈະວິພາກ ຖ້າບໍ່ມີຄວາມຮູ້ດ້ວຍການສຳພັດທາງອິນຊີກໍຈະບໍ່ມີແຫຼ່ງຂໍ້ມູນພື້ນຖານໃຫ້ຄວາມຮັບຮູ້ດ້ວຍຕັກກະຖານ ແລະ ກົງກັນຂ້າມຖ້າບໍ່ມີຄວາມຮັບຮູ້ດ້ວຍຕັກກະຖານ ກໍອາດຈະບໍ່ມີແນວຄິດດ້ານທິດສະດີ ເພື່ອຊີ້ນຳໃຫ້ແກ່ພຶດຕິກຳໃນການຮັບຮູ້ ແລະ ດັດສ້າງໂລກຂອງຄົນເຮົາ.

**ຊົ່ວໂມງທີ 2**

**4. ສົນທະນາລວມໃນຫ້ອງກ່ຽວກັບຄວາມໝາຍ ແລະ ເນື້ອໃນຂອງພຶດຕິກຳ**

- ຄູຕັ້ງຄຳຖາມໃຫ້ນັກຮຽນຄົ້ນຄວ້າ
  + ພຶດຕິກຳແມ່ນຫຍັງ?
  + ພຶດຕິກຳມີຈັກດ້ານຄືດ້ານໃດແດ່?
- ຄູໃຫ້ນັກຮຽນຕອບຄຳຖາມ ນັກຮຽນຄົນອື່ນໆຕິດຕາມ ແລະ ປະກອບຄວາມເຫັນເພີ່ມເຕີມ

**ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນຄື:**

- ພຶດຕິກຳແມ່ນການເຄື່ອນໄຫວທາງດ້ານວັດຖຸ ທີ່ມີລັກສະນະປະຫວັດສາ ແລະ ລັກສະນະສັງຄົມເພື່ອຮັບຮູ້ ແລະ ດັດສ້າງໂລກພາວະວິໄສຕາມຄວາມຕ້ອງການຂອງຄົນເຮົາ
- ພຶດຕິກຳປະກອບດ້ວຍການອອກແຮງງານຜະລິດວັດຖຸສິ່ງຂອງ, ການຕໍ່ສູ້ຊົນຊັ້ນໃນສັງຄົມ, ການສັງເກດ-ຄົ້ນຄວ້າວິທະຍາສາດ ແລະ ອື່ນໆ. ໃນນັ້ນການອອກແຮງງານຜະລິດວັດຖຸສິ່ງຂອງເປັນພື້ນຖານກ່ວາໝູ່ເພາະມັນເປັນການເຄື່ອນໄຫວທີ່ມີລັກສະນະຕັດສິນການຄົງຕົວ ຂະຫຍາຍຕົວຂອງສັງຄົມມະນຸດໃນແຕ່ລະຍຸກສະໄໝປະຫວັດສາດ.

ດັ່ງນັ້ນ, ພຶດຕິກຳຈຶ່ງມີບົດບາດ ແລະ ຄຸນປະໂຫຍດອັນໃຫ່ຍຫຼວງຕໍ່ມະນຸດ, ຕໍ່ຂະບວນວິວັດແຫ່ງຄວາມຮັບຮູ້ຂອງມະນຸດ.

5. **ສົນທະນາລວມໃນຫ້ອງ ຫຼື ໃນກຸ່ມກ່ຽວກັບບົດບາດຂອງພຶດຕິກຳ**

- ຄູແບ່ງນັກຮຽນອອກເປັນຫຼາຍກຸ່ມຕາມຄວາມເໝາະສົມ
- ຄູຢາຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າ

**ຄຳຖາມ**

+ ພຶດຕິກຳມີບົດບາດສຳຄັນແນວໃດຕໍ່ກັບຄວາມຮັບຮູ້?
+ ເປັນຫຍັງພຶດຕິກຳຈຶ່ງເປັນພື້ນຖານຂອງຄວາມຮັບຮູ້?

- ຄູໃຫ້ຜູ້ຕາງໜ້ານັກຮຽນແຕ່ລະກຸ່ມຂຶ້ນສະເໜີ, ນັກຮຽນຄົນອື່ນໆຕິດຕາມ ແລະ ປະກອບຄວາມເຫັນເພີ່ມເຕີມ

**ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນຄື:**

- ພຶດຕິກຳມີບົດບາດສຳຄັນຕໍ່ຂະບວນວິວັດ ແຫ່ງຄວາມຮັບຮູ້ຂອງມະນຸດເພາະວ່າ: ພຶດຕິກຳແມ່ນພື້ນຖານ, ແມ່ນຈຸດປະສົງ, ແມ່ນເປົ້າໝາຍ ແລະ ແມ່ນມາດຖານຂອງຄວາມຮັບຮູ້.
- ຄົນເຮົາຢາກຍືນຍົງຄົງຕົວ-ຂະຫຍາຍຕົວໄດ້ຢ່າງໜ້ອຍທີ່ສຸດຕ້ອງມີ 4 ປັດໄຈທີ່ເປັນພື້ນຖານຄື: ອາຫານການກິນ (ສະບຽງອາຫານ), ເຄື່ອງນຸ່ງຫົ່ມ, ຢາປົວສຸຂະພາບ, ທີ່ຢູ່ອາໄສ ແລະ ອື່ນໆ. ບັນດາສິ່ງເຫຼົ່ານັ້ນບໍ່ແມ່ນສິ່ງທີ່ສຳເລັດຮູບໃນທຳມະຊາດ ຕ້ອງໄດ້ຜ່ານຂະບວນວິວັດແຫ່ງການອອກແຮງງານຜະລິດ. ໃນການອອກແຮງງານຜະລິດຄົນເຮົາໄດ້ກະທົບໃສ່ທຳມະຊາດ, ບັນດາກົດເກນການເຄື່ອນເໜັງ, ບັນດາຈຸດພິເສດ, ບັນດາຄຸນ

ລັກສະນະຕ່າງໆ ຂອງທຳມະຊາດໄດ້ຖືກເປີດເຜີຍ ພາໃຫ້ຄົນເຮົາເກີດມີຄວາມຮັບຮູ້ໂລກທຳມະຊາດ ແລະ ການຜະລິດ, ໃນເມື່ອຂອບເຂດຂອງການອອກແຮງງານກ້ວາງອອກເທົ່າໃດຄວາມຮັບຮູ້ຂອງຄົນເຮົາກ່ຽວກັບໂລກພາວະວິໄສກໍນັບມື້ສູງຂຶ້ນເທົ່ານັ້ນ.

- ຄວາມຮັບຮູ້ຂອງຄົນເຮົາຍັງເກີດຈາກພຶດຕິກຳໃນການສັງເກດ, ຄົ້ນຄ້ວາທົດລອງການວິໃຈ ແລະ ອື່ນໆ. ຄວາມຮັບຮູ້ຂອງແຕ່ລະຄົນ, ແຕ່ລະຍຸກສະໄໝປະຫວັດສາດບໍ່ພຽງແຕ່ໄດ້ມາຈາກພຶດຕິກຳໂດຍກົງເທົ່ານັ້ນ, ຫາກຍັງໄດ້ມາຈາກການສືບທອດມູນມໍລະດົກຂອງມວນມະນຸດສະສົມໄວ້ ເຮັດໃຫ້ຄວາມຮັບຮູ້ຂອງຄົນເຮົານັບມື້ຍິ່ງອຸດົມສົມບູນຂຶ້ນ.

## 5. ການວັດ ແລະ ປະເມີນຜົນ

- ຄູແນະນຳໃຫ້ນັກຮຽນຂຽນບົດລາຍງານປະຈຳບົດ ຫຼື ຄົ້ນຄວ້າຕາມຄຳຖາມໃນປຶ້ມ ແບບຮຽນ
- ສັງເກດນັກຮຽນຈາກ:
  + ການຕອບຄຳຖາມ
  + ການຄົ້ນຄວ້າເປັນກຸ່ມ
  + ການຂຶ້ນລາຍງານຂອງແຕ່ລະກຸ່ມ

# ບົດທີ 8 ການຄົງຕົວຂອງສັງຄົມ ແລະ ສະຕິສັງຄົມ

**ເວລາ 3 ຊົ່ວໂມງ**

## 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍກ່ຽວກັບການຄົງຕົວຂອງສັງຄົມ ແລະ ສ່ວນປະກອບການຄົງຕົວຂອງສັງຄົມ
- ອະທິບາຍຄວາມໝາຍສຳຄັນຂອງປັດໄຈສະພາບແວດລ້ອມ ແລະ ປັດໄຈປະຊາກອນ
- ອະທິບາຍຄວາມໝາຍຂອງແບບວິທີການຜະລິດ ແລະ ການພົວພັນພາຍໃນແບບວິທີການຜະລິດຂອງສັງຄົມ
- ອະທິບາຍຄວາມໝາຍຂອງສະຕິສັງຄົມ ແລະ ສ່ວນປະກອບຂອງສະຕິສັງຄົມ
- ອະທິບາຍການພົວພັນລະຫວ່າງການຄົງຕົວສັງຄົມ ແລະ ສະຕິສັງຄົມ
- ປັບປຸງ ແລະ ພັດທະນາຕົນເອງທາງດ້ານຄວາມຮູ້ຄວາມສາມາດ ແລະ ຄຸນສົມບັດສົມທຳປະຕິວັດ ເພື່ອໃຫ້ກາຍເປັນຊັບພະຍາກອນມະນຸດທີ່ດີຂອງຊາດ

## 2. ເນື້ອໃນ

- ການຄົງຕົວຂອງສັງຄົມ
  - + ສິ່ງແວດລ້ອມທຳມະຊາດ
  - + ດ້ານປະຊາກອນ
  - + ຮູບແບບວິທີການຜະລິດ
- ສະຕິສັງຄົມ
  - + ສະຕິສັງຄົມແມ່ນຫຍັງ
  - + ສະຕິສັງຄົມມີສອງລະດັບ
- ການພົວພັນລະຫວ່າງການຄົງຕົວສັງຄົມກັບສະຕິສັງຄົມ
  - + ການຄົງຕົວສັງຄົມຕັດສິນສະຕິສັງຄົມ
  - + ການກະທົບຄືນຂອງສະຕິສັງຄົມໃສ່ການຄົງຕົວສັງຄົມ

## 3. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູວິຊາສຶກສາພົນລະເມືອງຂັ້ນ ມ.5
- ແຜນວາດ, ຮູບພາບເພື່ອສະແດງເຖິງການພົວພັນການຄົງຕົວສັງຄົມ ແລະ ສະຕິສັງຄົມ

## 4. ກິດຈະກຳການຮຽນ-ການສອນ

### ຊົ່ວໂມງທີ 1

**1. ທົບທວນບົດຮຽນເກົ່າ (ບົດທີ7) ຄູຕັ້ງຄຳຖາມ**

1) ຄວາມຮັບຮູ້ແມ່ນຫຍັງ?
2) ຄວາມຮັບຮູ້ດ້ວຍການສຳພັດອິນຊີແມ່ນຫຍັງ?
3) ຄວາມຮັບຮູ້ດ້ວຍຕັກກະຖານແມ່ນຫຍັງ?

**2. ສົນທະນາລວມໃນຫ້ອງ ຫຼື ກຸ່ມກ່ຽວກັບການຄົງຕົວສັງຄົມ ແລະ ສ່ວນປະກອບຂອງມັນ**

- ຄູຕັ້ງຄຳຖາມ
  + ການຄົງຕົວສັງຄົມແມ່ນຫຍັງ? ປະກອບມີພາກສ່ວນຫຍັງແດ່?
  + ສິ່ງແວດທຳມະຊາດມີບົດບາດສຳຄັນຕໍ່ການຄົງຕົວສັງຄົມແນວໃດ?
  + ປະຊາກອນມີບົດບາດສຳຄັນຕໍ່ການຄົງຕົວສັງຄົມແນວໃດ?
- ຄູໃຫ້ນັກຮຽນຄົ້ນຄວ້າ ຫຼື ສົນທະນາກັບໝູ່ທີ່ຢູ່ໃກ້ຄຽງ
- ຄູໃຫ້ນັກຮຽນຈຳນວນໜຶ່ງ ຕອບຄຳຖາມຕາມລຳດັບ

**ຄູອະທິບາຍຄືນສິ່ງທີ່ນັກຮຽນບໍ່ທັນເຂົ້າໃຈແຈ້ງ ແລະ ສະຫຼຸບເນື້ອໃນຄື**:

- ການຄົງຕົວສັງຄົມ ແມ່ນຊີວິດທາງດ້ານວັດຖຸ ຂອງສັງຄົມໃນຂອບເຂດການເຄື່ອນໄຫວທາງດ້ານພຶດຕິກຳຂອງຄົນເຊິ່ງປະກອບດ້ວຍສະພາບແວດລ້ອມທຳມະຊາດປະຊາກອນ (ພົນລະເມືອງ) ແລະ ແບບວິທີການຜະລິດຂອງສັງຄົມໃນນັ້ນແບບວິທີການຜະ ລິດເປັນປັດໄຈຕັດສິນການຄົງຕົວ ແລະ ຂະຫຍາຍຕົວຂອງສັງຄົມ.
- ສິ່ງແວດລ້ອມທຳມະຊາດແມ່ນທຸກສິ່ງທຸກຢ່າງ ທີ່ຢູ່ອ້ອມຕົວຄົນເຮົາເຊັ່ນ: ດິນ, ອາກາດ, ນ້ຳ, ພືດ, ແຮ່ທາດ ແລະ ອື່ນໆ. ໃນການດຳລົງຊີວິດຂອງຄົນເຮົາບໍ່ສາມາດຕັດແຍກອອກຈາກສິ່ງແວດລ້ອມທຳມະຊາດໄດ້ ສະນັ້ນ, ສິ່ງແວດລ້ອມທຳມະຊາດແມ່ນໜຶ່ງໃນບັນດາປັດໄຈທີ່ສຳຄັນ ແລະ ຈຳເປັນໃນການເຄື່ອນໄຫວທາງດ້ານວັດຖຸຂອງຄົນເຮົາເປັນຕົ້ນແມ່ນການເຄື່ອນໄຫວໃນການຜະລິດ ແລະ ການເຄື່ອນໄຫວທາງດ້ານສັງຄົມແຕ່ບໍ່

ແມ່ນປັດໄຈຕັດສິນການຄົງຕົວຂະຫຍາຍຕົວຂອງສັງຄົມມະນຸດ (ຕົວຢ່າງໃນປຶ້ມແບບຮຽນ).

- ພົນລະເມືອງແມ່ນການສັງລວມຄົນທີ່ດຳລົງຊີວິດຢູ່ໃນປະເທດໃດໜຶ່ງ ແລະ ໃນໂລກ ພົນລະເມືອງແມ່ນສ່ວນປະກອບທີ່ສຳຄັນທີ່ສຸດ ແລະ ຂາດບໍ່ໄດ້ຂອງທຸກໆລະບົບສັງຄົມ, ແມ່ນຜູ້ປະດິດສ້າງຂະບວນວິວັດແຫ່ງປະຫວັດສາດຂອງສັງຄົມມະນຸດ.
- ການເພີ່ມຂຶ້ນ ແລະ ຄວາມໜາແໜ້ນຂອງພົນລະເມືອງມີຜົນສະທ້ອນຢ່າງແນ່ນອນເຖິງລະດັບຄວາມໄວແຫ່ງການຂະຫຍາຍຕົວຂອງເສດຖະກິດ ແລະ ສັງຄົມ ເຊິ່ງເປັນສາເຫດໜຶ່ງຂອງໄພຫວ່າງງານ ແຕ່ມັນເປັນກຳລັງແຮງງານຢູ່ໃນການຜະລິດ ແລະ ການປ້ອງກັນຊາດຂອງແຕ່ລະປະເທດ.

**ຊົ່ວໂມງທີ 2**

**3. ສົນທະນາເປັນກຸ່ມກ່ຽວກັບແບບວິທີການຜະລິດ ແລະ ການພົວພັນຂອງມັນ**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູຢາຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າ

**ຄຳຖາມ**

+ ແບບວິທີການຜະລິດແມ່ນຫຍັງ?
+ ກຳລັງການຜະລິດແມ່ນຫຍັງ ແລະ ມີສ່ວນປະກອບຫຍັງແດ່?
+ ການພົວພັນການຜະລິດແມ່ນຫຍັງ ແລະ ມີສ່ວນປະກອບຫຍັງແດ່?
+ ກຳລັງການຜະລິດ ແລະ ການພົວພັນການຜະລິດມີການພົວພັນກັນແນວໃດ?

- ຄູໃຫ້ຜູ້ຕາງກຸ່ມຂຶ້ນສະເໜີ, ນັກຮຽນຄົນອື່ນໆ ຕິດຕາມ ແລະ ປະກອບຄວາມເຫັນເພີ່ມເຕີມ

**ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນຄື:**

- ແບບວິທີການຜະລິດແມ່ນຄວາມເປັນເອກະພາບ ລະຫວ່າງ ກຳລັງການຜະລິດກັບການພົວພັນການຜະລິດ, ບໍ່ວ່າແບບວິທີການຜະລິດໃດໆ ກໍລ້ວນແຕ່ປະກອບດ້ວຍ 2 ດ້ານຄື: ກຳລັງການຜະລິດ ແລະ ການພົວພັນການຜະລິດ, ໃນນັ້ນກຳລັງການຜະລິດສະແດງເຖິງການພົວພັນລະຫວ່າງຄົນກັບທຳມະຊາດ, ການພົວພັນການຜະລິດສະແດງເຖິງການພົວພັນ ລະຫວ່າງ ຄົນກັບຄົນໃນຂະບວນວິວັດແຫ່ງການຜະລິດ.

- ກໍາລັງການຜະລິດ ແມ່ນລະດັບການບຸກເບີກທໍາມະຊາດຂອງຄົນເຮົາ ທີ່ໄດ້ຫັນເປັນກໍາລັງວັດຖຸໝາຍຄວາມວ່າ: ຄົນເຮົານໍາໃຊ້ກໍາລັງແຮງຂອງທໍາມະຊາດ ເພື່ອກະທົບໃສ່ທໍາມະຊາດ. ສະນັ້ນ, ກໍາລັງການຜະລິດສະແດງເຖິງການພົວພັນລະຫວ່າງຄົນກັບທໍາມະຊາດ, ລະດັບຂອງກໍາລັງການຜະລິດສະແດງເຖິງການເອົາຊະນະທໍາມະຊາດຂອງຄົນເຮົາໃນແຕ່ລະຍຸກສະໄໝປະຫວັດສາດ.
- ກໍາລັງການຜະລິດ ແມ່ນຂະບວນວິວັດແຫ່ງການສົມທົບລະຫວ່າງກໍາລັງແຮງງານຂອງສັງຄົມກັບພາຫະນະການຜະລິດໃນນັ້ນຄົນຜູ້ອອກແຮງງານແມ່ນຜູ້ທີ່ມີຄວາມຮູ້ຄວາມສາມາດມີຫົວຄິດປະດິດສ້າງ, ມີຄວາມຊໍານິຊໍານານ ແລະ ມີສຸຂະພາບແຂງແຮງ. ພາຫະນະການຜະລິດປະກອບດ້ວຍເຄື່ອງຈັກ, ເຄື່ອງມື, ອຸປະກອນ ແລະ ເປົ້າໝາຍການອອກແຮງງານ ເຊິ່ງປະກອບມີເປົ້າໝາຍເກົ່າ ແລະ ເປົ້າໝາຍໃໝ່ (ເປົ້າໝາຍບໍ່ໄດ້ຂຸດຄົ້ນມາກ່ອນ)
- ການພົວພັນການຜະລິດແມ່ນການພົວພັນ ລະຫວ່າງ ຄົນກັບຄົນໃນຂະບວນວິວັດແຫ່ງການຜະລິດ, ການຜະລິດເວລາໃດກໍມີລັກສະນະສັງຄົມ ເຖິງວ່າການຜະລິດຢູ່ໃນແຕ່ລະຄອບຄົວ ແຕ່ຜູ້ອອກແຮງງານກໍຍັງມີການພົວພັນກັນໂດຍຜ່ານບັນດາຮູບການຈໍລະຈອນແຈກຢາຍຜະລິດຕະພັນຢູ່ໃນສັງຄົມ ເມື່ອການຜະລິດຍິ່ງຂະຫຍາຍຕົວເທົ່າໃດກໍ່ຍິ່ງຮຽກຮ້ອງໃຫ້ມີການແບ່ງງານສັງຄົມກວ້າງຂວາງ ຜູ້ອອກແຮງງານກໍຍິ່ງອີງໃສ່ກັນ, ຂຶ້ນຕໍ່ກັນຜູກພັນ ເຊິ່ງກັນ ແລະ ກັນເພື່ອການຄົງຕົວ, ຂະຫຍາຍຕົວຂອງຕົນ.
- ການພົວພັນການຜະລິດສະແດງອອກໃນ 3 ດ້ານຄື: ການພົວພັນລະຫວ່າງຄົນກັບຄົນກ່ຽວກັບກໍາມະສິດຕໍ່ພາຫະນະການຜະລິດ ການພົວພັນລະຫວ່າງຄົນກັບຄົນຢູ່ໃນການຈັດຕັ້ງຄຸ້ມຄອງການຜະລິດ, ການພົວພັນລະຫວ່າງຄົນ ກັບ ຄົນໃນການແຈກຢາຍຜົນຜະລິດ ໃນນັ້ນ ການພົວພັນດ້ານກໍາມະສິດຕໍ່ພາຫະການຜະລິດມີລັກສະນະຕັດສິນທຸກໆການພົວພັນເພາະວ່າ: ໃຜເປັນເຈົ້າຕໍ່ພາຫະນະການຜະລິດ ກໍເປັນເຈົ້າຕໍ່ການຈັດຕັ້ງຄຸ້ມຄອງການຜະລິດ ແລະ ເປັນເຈົ້າໃນການແຈກຢາຍຊົມໃຊ້ຜົນຜະລິດຂອງສັງຄົມ.
- ກໍາລັງການຜະລິດ ແລະ ການພົວພັນການຜະລິດມີການພົວພັນກັນຢ່າງສັດຈະວິພາກໃນລະບົບການເຄື່ອນເໜັງຂອງການຜະລິດ ໃນນັ້ນກໍາລັງການຜະລິດແມ່ນເນື້ອໃນການ

ພົວພັນການຜະລິດແມ່ນຮູບການ ແລະ ກຳລັງການຜະລິດຕັດສິນຕໍ່ການພົວພັນການຜະລິດຂອງສັງຄົມ.

- ການພົວພັນການຜະລິດກຳເນີດຂຶ້ນ ແລະ ຂະຫຍາຍຕົວໄປຕາມການເຄື່ອນເໜັງຂອງ
- ກຳລັງການຜະລິດ, ແຕ່ການພົວພັນການຜະລິດບໍ່ແມ່ນຈະຕົກຢູ່ໃນທ່າຮັບເລື້ອຍໆ ຫາກຍັງມີບົດບາດກະທົບຄືນຢ່າງຕັ້ງໜ້າ ໂດຍຜ່ານແນວທາງການເມືອງ, ລັດ ແລະ ກົດ ໝາຍ.

**ຊົ່ວໂມງທີ 3**

**4. ສົນທະນາລວມໃນຫ້ອງກ່ຽວກັບຄວາມໝາຍຂອງສະຕິສັງຄົມ ແລະ ຮູບແບບຂອງສະຕິສັງຄົມ**

- ຄູຕັ້ງຄຳຖາມໃຫ້ນັກຮຽນຄົ້ນຄວ້າ
  + ສະຕິສັງຄົມແມ່ນຫຍັງ?
  + ສະຕິບຸກຄົນແມ່ນຫຍັງ?
  + ຈິດຕະສາດສັງຄົມແມ່ນຫຍັງ?
  + ລະບົບແນວຄິດແມ່ນຫຍັງ?
- ຄູໃຫ້ນັກຮຽນຈຳນວນໜຶ່ງຕອບຄຳຖາມ, ນັກຮຽນຄົນອື່ນໆຕິດຕາມ ແລະ ປະກອບຄຳເຫັນເພີ່ມເຕີມ

**ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນຄື:**

- ສະຕິສັງຄົມແມ່ນການສ່ອງແສງການດຳລົງຄົງຕົວສັງຄົມຂອງຄົນ, ຄົນເຮົາຮັບຮູ້, ເຂົ້າໃຈ ແລະ ສອ່ງແສງການດຳລົງຄົງຕົວຂອງສັງຄົມ ໂດຍຜ່ານຄວາມຮູ້ສຶກ, ອາລົມ, ແນວຄິດ, ທິດສະດີ, ຄວາມຫຼົງຜິດ, ຄວາມໄຝ່ຝັນ, ໃນນັ້ນຄວາມຫຼົງຜິດທຸກປະເພດລ້ວນແຕ່ແມ່ນການສ່ອງແສງທີ່ບໍ່ມີວິທະຍາສາດ ແລະ ຜິດພາດຈາກຄວາມເປັນຈິງຂອງສັງຄົມ.
- ສະຕິບຸກຄົນແມ່ນການສ່ອງແສງເຖິງເງື່ອນໄຂການດຳລົງຊີວິດ ແລະ ການດຳລົງຄົງຕົວຂອງເຂົາເຈົ້າ, ສະຕິບຸກຄົນມີການພົວພັນຢ່າງສັດຈະວິພາກກັບສະຕິສັງຄົມ ເພາະວ່າທຸກຄວາມຮູ້ສຶກ, ອາລົມ, ແນວຄິດ ແລະ ທິດສະດີໃນເບື້ອງຕົ້ນເກີດມາຈາກສະຕິບຸກຄົນຈາກນັ້ນ ຈຶ່ງກາຍເປັນຊັບສົມບັດຂອງສັງຄົມ ແລະ ກາຍເປັນສະຕິສັງຄົມ.
- ຈິດຕະສາດສັງຄົມ ແມ່ນການສັງລວມບັນດາຄວາມຮູ້ສຶກ, ອາລົມ, ຄວາມຄິດຄວາມເຫັນ, ຄວາມໄຝ່ຝັນ, ຄວາມຫຼົງຜິດຂອງບັນດາກຸ່ມຄົນ, ບັນດາຊົນຊັ້ນຢູ່ໃນສັງຄົມໃນໄລ

ຍະອັນແນ່ນອນແຫ່ງການຂະຫຍາຍຕົວຂອງສັງຄົມ. ຈິດຕະສາດສັງຄົມມີໂຄງປະກອບອັນສັບສົນ ແລະ ສະແດງອອກຢ່າງສັບສົນ ໂດຍຜ່ານບັນດາຮູບຖານຂອງສະຕິສັງຄົມ.

- ລະບົບແນວຄິດແມ່ນທິດສະດີ ແລະ ວິທະຍາສາດທີ່ສ່ອງແສງການດຳລົງຄົງຕົວສັງຄົມຂອງຄົນໃນດ້ານທິດສະດີ, ການປະກົດຕົວດ້ານທິດສະດີ ແມ່ນພົວພັນເຖິງສິດຜົນປະໂຫຍດພື້ນຖານຂອງບັນດາຊົນຊັ້ນ, ບັນດາພັກຝ່າຍໃນສັງຄົມມີຊົນຊັ້ນທີ່ເປັນປໍລະປັກ ຫຼື ບໍ່ເປັນປໍລະປັກ, ລະບົບແນວຄິດອຳນວຍຄວາມສະດວກໃຫ້ແກ່ການເສີມຂະຫຍາຍ ຫຼື ຫຼຸດຜ່ອນ ແລະ ລົບລ້າງລະບອບສັງຄົມທີ່ພວມຄົງຕົວຢູ່.

ລະບົບແນວຄິດຕິດພັນ ແລະ ຂຶ້ນກັບຜົນປະໂຫຍດຂອງຊົນຊັ້ນໃດໜຶ່ງທີ່ເປັນຊົນຊັ້ນກ້າວໜ້າ ຫຼື ຫຼ້າຫຼັງ. ຊົນຊັ້ນດັ່ງກ່າວໄດ້ວາງໂຄງການດຳເນີນງານຂອງຕົນ, ກຳນົດຈຸດປະສົງ, ເປົ້າໝາຍ, ກຳນົດພາທະນະ ແລະ ເສັ້ນທາງເພື່ອບັນລຸຕາມຈຸດປະສົງເປົ້າໝາຍທີ່ໄດ້ວາງໄວ້.

**5. ສົນທະນາລວມໃນຫ້ອງ ຫຼື ກຸ່ມກ່ຽວກັບການພົວພັນລະຫວ່າງການຄົງຕົວສັງຄົມກັບສະຕິສັງຄົມ**

- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູຢາຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າ
- ຄຳຖາມ
  + ການຄົງຕົວສັງຄົມມີບົດບາດສຳຄັນແນວໃດຕໍ່ກັບສະຕິສັງຄົມ?
  + ສະຕິສັງຄົມມີບົດບາດສຳຄັນແນວໃດຕໍ່ກັບການຄົງຕົວສັງຄົມ?
- ຄູໃຫ້ຜູ້ຕາງໜ້ານັກຮຽນຂຶ້ນສະເໜີ (ລາຍງານ) ນັກຮຽນຄົນອື່ນໆຕິດຕາມ ແລະ ປະກອບຄວາມເຫັນ

**ຄູ ແລະ ນັກຮຽນພ້ອມກັນສະຫຼຸບເນື້ອໃນບົດຮຽນຄື:**

- ການຄົງຕົວສັງຄົມປະກອບດ້ວຍ 3 ປັດໄຈຄື: ທຳມະຊາດ, ປະຊາກອນ ແລະ ແບບວິທີການຜະລິດ, ໃນນັ້ນສິ່ງແວດລ້ອມທຳມະຊາດເປັນສິ່ງຕັດສິນຕໍ່ການກຳເນີດ, ຄົງຕົວ ແລະ ຂະຫຍາຍຕົວຂອງສະຕິສັງຄົມເພາະວ່າຖ້າບໍ່ມີດິນ, ອາກາດ, ນ້ຳ, ປ່າ ໄມ້, ຊັບພະຍາກອນທຳມະຊາດ ຄົນເຮົາກໍຈະບໍ່ມີຄວາມຮູ້ ແລະ ສະຕິປັນຍາກ່ຽວກັບສິ່ງດັ່ງກ່າວ, ຖ້າບໍ່ມີຄົນ (ປະຊາກອນ) ກໍຈະບໍ່ມີແນວຄິດຈິດໃຈ, ບໍ່ມີການສ່ອງແສງໃນຮູບການສູງສຸດບໍ່ມີສະຕິສັງຄົມ, ບໍ່ມີແບບວິທີການຜະລິດ ກໍຈະບໍ່ມີບັນດາຮູບການຂອງການພົວພັນ

ລະຫວ່າງຄົນກັບຄົນ ແລະ ຄົນກັບທຳມະຊາດ, ຖ້າຫາກບໍ່ມີການພົວພັນດັ່ງກ່າວນັ້ນແລ້ວກໍຈະບໍ່ມີການເມືອງ, ກົດໝາຍ, ຄຸນສົມບັດ, ສິລະປະກຳ, ວິທະຍາສາດ ແລະ ອື່ນໆ. ສະຕິສັງຄົມ ເວລາໃດກໍຖືກຕັດສິນດ້ວຍການຄົງຕົວສັງຄົມ, ແຕ່ກໍບໍ່ໝາຍວ່າຕົກຢູ່ໃນທ່າຮັບບໍ່ເປັນເອກະລາດທງບຖານ ເມື່ອສະຕິສັງຄົມກຳເນີດຂຶ້ນແລ້ວກໍມີບົດບາດກະທົບຄືນໃສ່ການຄົງຕົວສັງຄົມຢ່າງຕັ້ງໜ້າເຊິ່ງສະແດງອອກດັ່ງນີ້:

+ ສະຕິສັງຄົມ ມີລັກສະນະສືບທອດເອົາສະຕິສັງຄົມອັນເກົ່າໃນປະຫັວດສາດ ເພື່ອກໍ່ສ້າງສະຕິສັງຄົມອັນໃໝ່ ໂດຍສອດຄ່ອງກັບການຄົງຕົວຂອງສັງຄົມໃນໄລຍະໃໝ່.
+ ສະຕິສັງຄົມບໍ່ພຽງເກີດຂຶ້ນຕາມຫຼັງ ແຕ່ຫາກຍັງໄປກ່ອນການຄົງຕົວສັງຄົມ ເຊິ່ງສະແດງອອກໃນ 2 ລະດັບຄື: ການຄາດຄະເນແບບທຳມະດາ ແລະ ການຄາດຄະເນແບບທິດສະດີໂດຍສອດຄ່ອງກັບກົດເກນພາວະວິໄສຂອງທຳມະຊາດ ແລະ ສັງຄົມ.

## 5. ການວັດ ແລະ ປະເມີນຜົນ

- ຄູຕັ້ງຄຳຖາມໃຫ້ນັກຮຽນຕອບ 2-3 ຄົນ ເພື່ອຢາກຮູ້ວ່ານັກຮຽນເຂົ້າໃຈບົດຮຽນ ຫຼື ບໍ່
- ຄູແນະນຳໃຫ້ນັກຮຽນຂຽນບົດລາຍງານປະຈຳບົດ ຫຼື ຄົ້ນຄວ້າຕາມຄຳຖາມໃນປຶ້ມແບບຮຽນ



1.1 ສິ່ງແວດລ້ອມທຳມະຊາດ
1.2ດ້ານປະຊາກອນ
1)ກຳລັງການຜະລິດ
1.3 ຮູບແບບວິທີການຜະລິດ
2)ການພົວພັນການຜະລິດ
3)ການພົວພັນລະຫວ່າງກຳລັງການຜະລິດ ແລະ ການພົວພັນການຜະລິດ
1. ການຄົງຕົວສັງຄົມ
ບົດທີ8:ການຄົງຕົວຂອງສັງຄົມ ແລະ ສະຕິສັງຄົມ
2.ສະຕິສັງຄົມ
2.1 ສະຕິສັງຄົມແມ່ນຫຍັງ
2.2 ສະຕິສັງຄົມ
1) ຈິດຕະສັງຄົມ
2) ລະບົບແນວຄິດ
3. ການພົວພັນລະຫວ່າງການຄົງຕົວສັງຄົມກັບສະຕິສັງຄົມ
3.1 ການຄົງຕົວສັງຄົມຕັດສິນສະຕິສັງຄົມ
3.2 ການກະທົບຄືນຂອງສະຕິສັງຄົມ

# ບົດທີ 9 ມະນຸດເປັນຜູ້ສ້າງປະຫວັດສາດ ແລະ ເປັນ ເປົ້າໝາຍພັດທະນາສັງຄົມ

**ເວລາ 2 ຊົ່ວໂມງ**

## 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍມະນຸດເປັນຜູ້ສ້າງປະຫວັດສາດ ແລະ ມະນຸດເປັນເປັນເປົ້າໝາຍພັດທະນາສັງຄົມ
- ພິສູດຄຸນຄ່າທາງດ້ານວັດຖຸ ແລະ ຈິດໃຈຂອງສັງຄົມແມ່ນຍ້ອນມະນຸດເປັນຜູ້ປະດິດສ້າງຂຶ້ນ
- ຕັ້ງໜ້າປະກອບສ່ວນເຂົ້າໃນການພັດທະນາປະເທດຊາດຕາມຄວາມສາມາດຂອງຕົນ.

## 2. ເນື້ອໃນ.

- ມະນຸດເປັນຜູ້ສ້າງປະຫວັດສາດ
    + ບົດບາດຂອງມະນຸດໃນການສ້າງປະຫວັດສາດ
    + ມະນຸດເປັນຜູ້ປະດິດສ້າງບັນດາຄຸນຄ່າທາງດ້ານວັດຖຸ ແລະ ຈິດໃຈຂອງສັງຄົມ
    + ມະນຸດເປັນກຳລັງແຮງຂອງຂະບວນການປະຕິວັດສັງຄົມ
    + ມະນຸດເປັນເປົ້າໝາຍຂອງການພັດທະນາສັງຄົມ
    + ມະນຸດເປັນຜູ້ພັດທະນາສັງຄົມ
    + ລັດທິສັງຄົມນິຍົມກັບການພັດທະນາຄົນຮອບດ້ານ

## 3. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາສຶກສາພົນລະເມືອງຂັ້ນມ.5
- ເຈ້ຍແຜ່ນໃຫຍ່, ບິກ, ສໍ, ກາວ
- ຮູບພາບຕ່າງໆທີ່ພົວພັນກັບບົດຮຽນ

## 4. ກິດຈະກຳການຮຽນ-ການສອນ

### ຊົ່ວໂມງທີ 1

- **ທວນຄືນບົດຮຽນເກົ່າ**
- ສ້າງບັນຍາກາດໃຫ້ມີຄວາມມ່ວນຊື່ນ, ການນຳເຂົ້າສູ່ບົດຮຽນຄູອາດຈະນຳໃຊ້ຫຼາຍວິທີ

**ຕົວຢ່າງ**

- ໃຊ້ຮູບພາບ, ບົດເລື່ອງ, ເອກະສານຕ່າງໆ ທີ່ພົວພັນເຖິງບົດຮຽນມາສະເໜີ
- ຄູອາດຈະຕັ້ງຄໍາຖາມໃຫ້ນັກຮຽນຕອບ.

**ຄໍາຖາມ**

+ ມະນຸດມີບົດບາດແນວໃດຕໍ່ການຂະຫຍາຍຕົວຂອງປະຫວັດສາດ?
+ ບັນຫາການພັດທະນາຊັບພະຍາກອນມະນຸດພັກ-ລັດເຮົາໄດ້ເອົາໃຈໃສ່ຄືແນວໃດ?

  ຈາກນັ້ນຄູສະເໜີບົດທີ 9: ມະນຸດເປັນເຈົ້າປະຫວັດສາດ ແລະ ເປົ້າໝາຍພັດທະນາສັງຄົມ

**1. ສົນທະນາລວມໝົດຫ້ອງກ່ຽວກັບມະນຸດຜູ້ເປັນສ້າງປະຫວັດສາດ**

- ຄູຕັ້ງຄໍາຖາມກ່ຽວກັບເຄື່ອງມືອອກແຮງງານມີບົດບາດຕໍ່ກັບການຂະຫຍາຍຕົວຂອງປະຫວັດສາດ (ເອກະສານເພີ່ມເຕີມສໍາລັບຄູ)
- ຄູຊຽນຫຍໍ້ກ່ຽວກັບບົດບາດເຄື່ອງມືອອກແຮງງານຕໍ່ກັບການຂະຫຍາຍຕົວຂອງປະຫວັດສາດໃສ່ເຈ້ຍແຜ່ນໃຫຍ່ແລ້ວຕິດໃສ່ກະດານ.
- ຄູຕັ້ງຄໍາຖາມໃຫ້ນັກຮຽນຄົ້ນຄ້ວາ

**ຄໍາຖາມ**

+ ຄົນບູຮານໄດ້ປະດິດສ້າງເຄື່ອງມືອອກແຮງງານຫຍັງແດ່? ເຄື່ອງມືອອກແຮງງານນັ້ນມີຈຸດແຕກຕ່າງກັນຄືແນວໃດ?
+ ນັກຮຽນຍັງຮູ້ປະເພດເຄື່ອງມືອອກແຮງງານໃດແດ່ ທີ່ມີຜົນກະທົບຕໍ່ການພັດທະນາສັງຄົມຢູ່ແຕ່ລະໄລຍະປະຫວັດສາດ?
+ ເຄື່ອງມືອອກແຮງງານນັ້ນມີຄວາມໝາຍແນວໃດຕໍ່ການກໍາເນີດ ແລະ ການຂະຫຍາຍຕົວຂອງປະວັດສາດ?

- ນັກຮຽນສົນທະນາກັບໝູ່ນັ່ງຂ້າງ
- ຖ້ານັກຮຽນບໍ່ເຂົ້າໃຈຄູອາດຈະອະທິບາຍໃຫ້ຈະແຈ້ງຕື່ມ

**ຄູສະຫຼຸບ**

ປະຫວັດສາດມະນຸດໄດ້ປະກອບສ້າງຂຶ້ນ ໃນເວລາທີ່ມະນຸດຮູ້ປະດິດສ້າງເຄື່ອງມືອອກແຮງງານ. ຍ້ອນຮູ້ປະດິດສ້າງ ແລະ ຮູ້ນໍາໃຊ້ເຄື່ອງມືອອກແຮງງານ, ມະນຸດຈຶ່ງແຍກອອກຈາກ

ໂລກສັດ ແລະ ກາຍເປັນໂລກມະນຸດ. ຈາກນັ້ນປະຫວັດສາດສັງຄົມກໍ່ເລີ່ມປະກົດຕົວຂຶ້ນ, ເຄື່ອງມືອອກແຮງງານໄດ້ມີການດັດແປງພັດທະນາດີຂຶ້ນ, ການຄົມມະນາຄົມ, ສາສະໜາ, ວິທະຍາສາດ, ສິນລະປະ... ກໍກຳເນີດ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ. ຈາກກົກເຫຼົ່ານີ້ກໍຄ່ອຍໆສ້າງບັນດາລັດຕ່າງໆເກີດຂຶ້ນ.

**2. ສົນທະນາກ່ຽວກັບມະນຸດເປັນຜູ້ປະດິດສ້າງບັນດາຄຸນຄ່າທາງດ້ານວັດຖຸ ແລະ ຈິດໃຈຂອງສັງຄົມ.**

- ຄູຕັ້ງຄຳຖາມກ່ຽວກັບບົດບາດຂອງມະນຸດ ໃນການປະດິດສ້າງບັນດາຄຸນຄ່າທາງດ້ານວັດຖຸ ແລະ ຈິດໃຈ

**ຄຳຖາມ**:

+ ເປັນຫຍັງ ຈຶ່ງເວົ້າວ່າມະນຸດ, ເປັນຜູ້ປະດິດສ້າງບັນດາຄຸນຄ່າທາງດ້ານວັດຖຸ ແລະ ຈິດໃຈຂອງສັງຄົມ? ຈົ່ງຍົກບາງຕົວຢ່າງ

- ໝົດຫ້ອງພ້ອມກັນສົນທະນາ, ປະກອບຄວາມເຫັນເພື່ອໃຫ້ເຂົ້າໃຈແຈ້ງ ແລະ ເປັນເອກະພາບກັນ

**ຄູສະຫຼຸບ**

- ມະນຸດຕ້ອງອອກແຮງງານປະດິດສ້າງວັດຖຸສິ່ງຂອງເພື່ອລ້ຽງຊີບ ແລະ ສັງຄົມ. ການຜະລິດວັດຖຸສິ່ງຂອງອອກມາໄດ້ ກໍ່ມີແຕ່ມະນຸດເທົ່ານັ້ນຂະບວນການຜະລິດບໍ່ພຽງແຕ່ຜະລິດວັດຖຸສິ່ງຂອງ ເພື່ອຮັບປະກັນໃຫ້ແກ່ການຄົງຕົວຂອງສັງຄົມ ແຕ່ຍັງຊຸກດັນໃຫ້ລະດັບການຂະຫຍາຍຕົວຂອງສັງຄົມກ້າວຂຶ້ນ.
- ມະນຸດຍັງປະດິດສ້າງບັນດາຄຸນຄ່າ ທາງດ້ານຈິດໃຈຂອງສັງຄົມ, ຊີວິດການເປັນຢູ່ປະຈຳວັນ ແລະ ປະສົບການໃນການອອກແຮງງານຜະລິດ, ມະນຸດແມ່ນແຫຼ່ງກະທູ້ເລື່ອງທີ່ບໍ່ມີຂອບເຂດໃຫ້ແກ່ວິທະຍາສາດ ແລະ ການປະດິດສ້າງສິລະປະວັດທະນະທຳມະນຸດໄດ້ກາຍເປັນນັກປະພັນວັນະຄະດີສິລະປະ ແລະ ໂຄງການວິທະຍາສາດຕ່າງໆ

**3. ການຄົ້ນຄ້ວາດ້ວຍຕົນເອງກ່ຽວກັບມະນຸດເປັນກຳລັງແຮງຊຸກດັນຂອງບັນຂະບວນການປະຕິວັດສັງຄົມ.**

- ຄູໃຫ້ນັກຮຽນຄົ້ນຄ້ວາ ຫຼື ອ່ານບົດຮຽນດ້ວຍຕົນເອງ.
- ຄູຕັ້ງຄຳຖາມໃຫ້ນັກຮຽນຕອບ.

- ຖ້ານັກຮຽນບໍ່ເຂົ້າໃຈຄູອາດອະທິບາຍບາງບັນຫາຕື່ມເພື່ອໃຫ້ເຂົ້າໃຈແຈ້ງ.
- ຄູໃຫ້ນັກຮຽນຍົກຕົວຢ່າງໃນປະຫວັດສາດ ຫຼື ຍົກຕົວຈິງຢູ່ໃນສັງຄົມ, ທ້ອງຖິ່ນ ຫຼື ຢູ່ປະເທດເຮົາມາພິສູດ.

**ຄູສະຫຼຸບ**

- ຍ້ອນຄວາມຕ້ອງການໃຫ້ແກ່ການດຳລົງຊີວິດທີ່ດີກ່ວານັ້ນ ຈຶ່ງຊຸກດັນໃຫ້ມະນຸດລຸກຂຶ້ນຕໍ່ສູ້ຢ່າງບໍ່ຢຸດຢັ້ງເພື່ອປະດິດສ້າງສັງຄົມ. ໃນແຕ່ລະຄັ້ງທີ່ມີການປ່ຽນແປງສັງຄົມ ແລະ ທຸກຂະບວນການປະຕິວັດສັງຄົມລ້ວນແຕ່ແມ່ນມະນຸດເປັນຜູ້ປະດິດສ້າງຂຶ້ນທັງນັ້ນ.

**ຊົ່ວໂມງທີ2**

**4. ສົນທະນາລວມໝົດຫ້ອງ ກ່ຽວກັບມະນຸດເປັນເປົ້າໝາຍຂອງການພັດທະນາສັງຄົມ**

- ສົນທະນາ 3 ຄຳຖາມໃນປື້ມແບບຮຽນ ແລະ 3 ຄຳຖາມເຈາະຈີ້ມດັ່ງນີ້:
  - + ຍ້ອນເຫດຜົນໃດ ຈຶ່ງເວົ້າວ່າມະນຸດເປັນເຈົ້າຂອງປະຫວັດສາດ?
  - + ບົດບາດຂອງມະຫາຊົນໄດ້ສະແດງອອກຄືແນວໃດ?
  - + ເປັນຫຍັງ ຈຶ່ງເວົ້າວ່າມະນຸດເປັນກຳລັງແຮງຂອງຂະບວນການປະຕິວັດສັງຄົມ?
  - + ຢູ່ໃນປະເທດເຮົາກໍ່ຄືໃນໂລກປະຈຸບັນມີບັນຫາດ້ານຫຍໍ້ທໍ້ໃດແດ່ທີ່ກະທົບເຖິງການພັດທະນາສັງຄົມ?
  - + ພວກເຮົາຈະເຮັດແນວໃດ ເພື່ອແກ້ໄຂສິ່ງດັ່ງກ່າວ?
  - + ເປັນຫຍັງ ຈຶ່ງເວົ້າວ່າຄົນເປັນເປົ້າໝາຍຂອງການພັດທະນາສັງຄົມ?
- ຄູອາດຈະຖາມນັກຮຽນ ຫຼື ໃຫ້ກັນຮຽນຄົ້ນຄ້ວາກ່ອນແລ້ວຈຶ່ງເອີ້ນນັກຮຽນຂຶ້ນຕອບ ຫຼື ຄູ ແລະ ນັກຮຽນພ້ອມກັນສົນທະນານຳກັນ

**ຄູສະຫຼຸບ**

- ນັບແຕ່ມະນຸດໄດ້ກຳເນີດຂຶ້ນມາ ເຖິງປະຈຸບັນມະນຸດຍາມໃດກໍ່ມີຄວາມມຸ່ງຫວັງຢາກດຳລົງຊີວິດມີເສລີພາບ ແລະ ມີຄວາມສຸກ ແຕ່ຕົວຈິງຢູ່ໃນສັງຄົມຍັງມີຄວາມບໍ່ຍຸດຕິທຳ, ຄວາມບໍ່ສະເໝີພາບຍັງຄົງຕົວຢູ່ ແລະ ຍັງມີຫຼາຍປັດໄຈອື່ນໆ ທີ່ນາບຂູ່ເສລີພາບ, ຄວາມສຸກ ແລະ ຊີວິດຂອງມະນຸດດ້ວຍເຫດນັ້ນຄົນເຮົາຈຶ່ງລຸກຂຶ້ນຕໍ່ສູ້ຢ່າງບໍ່ຢຸດຢັ້ງ ເພື່ອຄວາມເສລີພາບ ແລະ ຄວາມສຸກຂອງຕົນ ໃນທຸກໆນະໂຍບາຍ ແລະ ການເຄື່ອນໄຫວຂອງປະ

ເທດເຮົາ ແລະ ຂອງບັນດາປະເທດໃນທົ່ວໂລກລ້ອນແນໃສ່ເປົ້າໝາຍພັດທະນາຄົນທັງນັ້ນ.

ຄົນເປັນເຈົ້າຂອງປະຫວັດສາດ ດັ່ງນັ້ນ ມະນຸດຈຶ່ງຕ້ອງໄດ້ເຄົາລົບນັບຖື, ຮັບປະກັນທຸກສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ເພາະຕົນເອງກໍ່ເປັນເປົ້າໝາຍພັດທະນາສັງຄົມເໝືອນກັນ.

**5. ສິນທະນາກ່ຽວກັບລັດທິສັງຄົມນິຍົມຕໍ່ກັບການພັດທະນາຄົນຮອບດ້ານ**

- ໃນຂໍ້ນີ້ນັກຮຽນເຂົ້າໃຈການກໍ່ສ້າງສັງຄົມທີ່ວ່າ" ປະເທດຊາດເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ມີຄວາມສະເໝີພາບ, ມີປະຊາທິປະໄຕ ແລະ ມີຄວາມຍຸຕິທຳ, ທຸກຄົນກິນອີ່ມນຸ່ງອຸ່ນ, ແລະ ທຸກຄົນມີເງື່ອນໄຂໄດ້ພັດທະນາຕົນເອງຢ່າງຮອບດ້ານ ເຊິ່ງເປັນເປົ້າໝາຍອັນສູງສົ່ງຂອງລັດທິສັງຄົມນິຍົມ.

**ຄູຄວນອະທິບາຍໃຫ້ນັກຮຽນເຂົ້າໃຈຢ່າງເລິກເຊິ່ງດັ່ງນີ້:**

- ອີງໃສ່ກົດເກນການຂະຫຍາຍຕົວຂອງປະຫວັດສາດ ເພື່ອອະທິບາຍໃຫ້ນັກຮຽນເຂົ້າໃຈວ່າ: ມະນຸດເຮົາໄດ້ຜ່ານຜ່າ 5 ລະບອບສັງຄົມ, ໃນນັ້ນມີແຕ່ລະບອບສັງຄົມນິຍົມເທົ່ານັ້ນທີ່ຖືວ່າມະນຸດເປັນກຳລັງຊຸກດັນ ແລະ ເປັນເປົ້າໝາຍພັດທະນາສັງຄົມ. ລັດທິສັງຄົມນິຍົມໃນໂລກປະຈຸບັນ, ເຖິງວ່າມີຄວາມຍຸ້ງຍາກຫຼາຍປະການ, ແຕ່ກໍ່ຊອກເຫັນເສັ້ນທາງໃນການພັດທະນາທີ່ແທດເໝາະ ແລະ ມີຜົນງານໃໝ່ຫຼາຍຢ່າງເຂົ້າໃນການພັດທະນາເສດຖະກິດ, ວັດທະນາທຳ ແລະ ສັງຄົມໂດຍສະເພາະຢູ່ປະເທດເຮົາ.
- ຄູຄວນແນະນຳໃຫ້ນັກຮຽນໄປຊອກຫາເອກະສານໃໝ່ ກ່ຽວກັບການລົງທຶນຂອງພັກ-ລັດ, ອຳນາດການປົກຄອງທ້ອງຖິ່ນ ຫຼື ໂຮງຮຽນຕໍ່ກັບການພັດທະນາຄົນຢ່າງຮອບດ້ານ.

**ຄູສະຫຼຸບ**

- ສັງຄົມມະນຸດໄດ້ຜ່ານ 5 ລະບອບສັງຄົມ ແຕ່ໃນນັ້ນມີແຕ່ລັດທິສັງຄົມນິຍົມເທົ່ານັ້ນທີ່ເຮັດໃຫ້ມະນຸດເປັນເປົ້າໝາຍພັດທະນາສັງຄົມ.
- ການສ້າງສັງຄົມທີ່ມີຈຸດໝາຍ ປະຊາຊົນຮັ່ງມີຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງມີຄວາມສາມັກຄີປອງດອງປະຊາທິປະໄຕຍຸຕິທຳ ແລະ ສີວິໄລ ນັ້ນແມ່ນເປົ້າໝາຍສູງສຸດຂອງລັດທິສັງຄົມນິຍົມ, ທັງເປັນທິດທາງ ແລະ ນະໂຍບາຍຂອງພັກລັດເຮົາໄດ້ວາງໄວ້ ເພື່ອສູ້ຊົນໃຫ້ປາກົດຜົນເປັນຈິງເທື່ອລະກ້າວ.

- ຄູແນະນຳໃຫ້ນັກຮຽນແກ້ບົດເຝິກຫັດ 1, 2, 3, ໃນປຶ້ມແບບຮຽນ, ໜ້າ83
- ຄູແນະນຳໃຫ້ນັກຮຽນອ່ານເອກະສານເພີ່ມເຕີມໃນປຶ້ມແບບຮຽນ

• **ເອກະສານເພີ່ມເຕີມສຳລັບຄູ**

***ເຄື່ອງມືອອກແຮງງານຕໍ່ການຂະຫຍາຍຕົວຂອງປະຫວັດສາດ***

ຫ່າງຈາກນີ້ຫຼາຍລ້ານປີໃນໂລກມີທະນີຄົນດຳລົງຊີວິດຢູ່, ຜ່ານການຊອກຫາອາຫານ, ທະນີຄົນປະເພດນີ້ຮູ້ຍ່າງສອງຂາ, ສອງຂາໜ້າຮູ້ຈັບ, ບາຍ ແລະ ນຳໃຊ້ກ້ອນຫີນ, ງ່າໄມ້ເປັນເຄື່ອງມືຫາກິນ, ຄົນບູຮານຢູ່ຮ່ວມກັນເປັນຝູງເປັນໝູ່ຫຼາຍສິບຄົນ, ພວກເຂົາຢູ່ໃນຖ້ຳ, ຕູບຫີນ ຫຼື ຕູບເຮັດດ້ວຍງ່າໄມ້, ມຸງດ້ວຍໃບໄມ້ ຫຼື ຫຍ້າແຫ້ງ, ພວກເຂົາຮູ້ໃຊ້ກ້ອນຫີນເປັນເຄື່ອງມື, ຮູ້ນຳໃຊ້ໄຟຝີງ, ຈີ່ອາຫານກິນ ແລະ ໄລ່ລ່າສັດຮ້າຍ.

ຜ່ານມາຫຼາຍລ້ານປີ ຄົນປະຖົມບູຮານໄດ້ຄ່ອຍໆກາຍມາເປັນຊາດມະນຸດ ທີ່ສະຫຼາດພວກເຂົາຢູ່ຮ່ວມກັນເປັນກຸ່ມ, ມີຫຼາຍຄອບຄົວຢູ່ຮ່ວມກັນເປັນເຊື້ອສາຍເອີ້ນວ່າ: “ກົກເຫຼົ່າໃນໄລຍະຕົ້ນ” ຮູ້ປະດິດເຄື່ອງມື ແລະ ຮູ້ດັດແປງເຄື່ອງມືທີ່ເຮັດດ້ວຍຫີນ.

ປະມານ 4 000 ປີກ່ອນ ຄ.ສ ມະນຸດໄດ້ຮູ້ປະດິດສ້າງເຄື່ອງມືເຮັດດ້ວຍໂລຫະຕໍ່ມາເຄື່ອງມືເຫຼົ່ານັ້ນໄດ້ມີການດັດແປງໃຫ້ດີຂຶ້ນ, ການອອກແຮງງານກໍໄດ້ຮັບຜົນຫຼາຍກ່ວາເກົ່າ, ກຳລັງການຜະລິດກໍເພີ່ມຂຶ້ນ ແລະ ເຄື່ອງມືໃນສັງຄົມກໍຫຼາຍຂຶ້ນ,ຈາກນັ້ນ ຈຶ່ງມີແນວຄິດໂລບມາກໂລພາລະຫວ່າງກົກເຫຼົ່ານີ້ ກັບ ກົກເຫຼົ່າອື່ນເກີດຂຶ້ນເລື້ອຍໆ ຈົນກ້າວໄປເຖິງການຂ້າຟັນກັນເພື່ອຍາດເອົາຂອງທີ່ເຫຼືອຂອງຄົນອື່ນ ແລະ ຂອງສ່ວນລວມມາເປັນກຳມະສິດສ່ວນຕົວ, ຈຶ່ງເກີດມີຄົນຮັ່ງມີ ແລະ ຄົນທຸກຈົນ.

ຈາກນັ້ນ ສັງຄົມປະຖົມບູຮານກໍ່ຄ່ອຍໆ ສິ້ນສຸດລົງ ແລະ ສັງຄົມຂ້າທາດກໍເກີດຂຶ້ນ

• **ສັງຄົມຂ້າທາດ**: ແມ່ນສັງຄົມທຳອິດທີ່ມີຊົນຊັ້ນ, ເຈົ້າທາດແມ່ນຊົນຊັ້ນຂູດຮີດເປັນຜູ້ຢຶດເອົາອຸປະກອນການຜະລິດທັງໝົດຂອງຄົນອື່ນມາເປັນຂອງສ່ວນຕົວເຊັ່ນ: ເຄື່ອງມືອອກແຮງງານ, ດິນດອນ ແລະ ອື່ນໆ. ຂ້າທາດແມ່ນຊົນຊັ້ນຖືກຂູດຮີດຢ່າງປ່າເຖື່ອນດ້ວຍຮູບການໃຊ້ແຮງງານເຖື່ອນ.

• **ສັງຄົມສັກດີນາມີສອງຊົນຊັ້ນ**: ເຈົ້າທີ່ດິນ ແລະ ບ່າວນາ, ເຈົ້າທີ່ດິນແມ່ນຊົນຊັ້ນຂູດຮີດ, ຢຶດເອົາທຸກສິ່ງທຸກຢ່າງເປັນຂອງສ່ວນຕົວເຊັ່ນ: ດິນໄຮ່, ດິນນາ, ພູຜາປ່າໄມ້, ຫ້ວຍນ້ຳລຳເຊ, ໜອງບຶງ, ງົວຄວາຍ ແລະ ເຄື່ອງມືຕ່າງໆ. ບ່າວນາ (ຊາວໄຮ່ນາ) ແມ່ນຊົນຊັ້ນຖືກຂູດຮີດ.

• **ສັງຄົມນາຍທຶນ**: ມີຊົນຊັ້ນນາຍທຶນ ແລະ ຊົນຊັ້ນກຳມະກອນ, ຊົນຊັ້ນນາຍທຶນແມ່ນຍຶດເອົາອຸປະກອນການຜະລິດທັງໝົດເປັນກຳມະສິດສ່ວນຕົວເຊັ່ນ: ໂຮງຈັກ, ໂຮງງານ, ບໍ່ແຮ່, ນິຄົມກະເສດ, ພາຫະນະຄົມມະນາຄົມ ແລະ ອື່ນໆ. ພວກເຂົາບໍ່ອອກແຮງງານ, ແຕ່ຈ້າງກຳມະ ກອນມາຜະລິດ ເພື່ອຂູດຮີດກຳລັງແຮງງານ, ຊົນຊັ້ນກຳມະກອນແມ່ນບໍ່ມີອຸປະກອນການຜະລິດ, ມີແຕ່ຂາຍແຮງງານຂອງຕົນເພື່ອລ້ຽງຊີບ.

• **ສັງຄົມນິຍົມ**: ແມ່ນສັງຄົມທີ່ດີງາມ, ອຸປະກອນການຜະລິດທຸກຢ່າງເປັນຂອງສ່ວນລວມ, ທຸກຄົນພ້ອມກັນເຮັດພ້ອມກັນໃຊ້, ບໍ່ມີກຳມະສິດສ່ວນຕົວກ່ຽວກັບພາຫະນະການຜະລິດ, ບໍ່ມີຊົນຊັ້ນຂູດຮີດ.

## 5. ການວັດ ແລະ ປະເມີນຜົນ

### 1. ແນະນຳຄຳຖາມ ແລະ ແກ້ບົດເຝິກຫັດ

**ບົດເຝິກຫັດ**

- ຄູແນະນຳໃຫ້ນັກຮຽນ ຊອກຫາຂໍ້ມູນກ່ຽວກັບແນວທາງນະໂຍບາຍຂອງພັກ-ລັດ ແລະ ການພັດທະນາຂອງພົນລະເມືອງຢູ່ໃນທ້ອງຖິ່ນ.

**ຕົວຢ່າງ**

- ຈຳນວນຄົນທີ່ໄດ້ຮຽນໜັງສືເທົ່າໃດ ແລະ ແຕ່ລະປີເພີ່ມຂຶ້ນເທົ່າໃດ?
- ປະລິມານຄົນທີ່ໄດ້ກູ້ຢືມເງິນເພື່ອສ້າງເສດຖະກິດຄອບຄົວ ຫຼຸດຜ່ອນຄວາມທຸກຍາກ
- ຈຳນວນຄົນເສຍອົງຄະຢູ່ໂດດດ່ຽວ, ບໍ່ມີໃຜເບິ່ງແຍງ, ລ້ຽງດູມີເທົ່າໃດ.

**ນອກນັ້ນຍັງສັງເກດຈາກ**:

- ການຕອບຄຳຖາມ, ການຕັ້ງໃຈຟັງຄູອະທິບາຍບົດຮຽນ
- ການສົນທະນາບົດຮຽນ ຫຼື ການສົນທະນາເປັນກຸ່ມ

# ພາກທີ II ຄຸນສົມບັດ

## ບົດທີ 10 ຄວາມສຳນຶກກ່ຽວກັບຄຸນສົມບັດ

**ເວລາ 2 ຊົ່ວໂມງ**

## 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍຂອງຄຸນສົມບັດ
- ຈຳແນກຄຸນສົມບັດກັບກົດໝາຍ ແລະ ຮີດຄອງປະເພນີ
- ກຳໄດ້ບົດບາດຄຸນສົມບັດຕໍ່ການພັດທະນາບຸກຄົນ, ຄອບຄົວ ແລະ ສັງຄົມ
- ນຳເອົາຄຸນສົມບັດໄປປັບເຂົ້າໃນຊີວິດປະຈຳວັນ

## 2. ເນື້ອໃນ

- ຄວາມສຳນຶກກ່ຽວກັບຄຸນສົມບັດ
  +ຄຸນສົມບັດແມ່ນຫຍັງ
  +ຈຳແນກຄຸນສົມບັດກັບກົດໝາຍ ແລະ ຮີດຄອງປະເພນີ
- ບົດບາດຂອງຄຸນສົມບັດກັບການພັດທະນາບຸກຄົນ, ຄອບຄົວ ແລະ ສັງຄົມ
  + ຕໍ່ບຸກຄົນ
  + ຕໍ່ຄອບຄົວ
  + ຕໍ່ສັງຄົມ

## 3. ສື່ການຮຽນ-ການສອນ

- ປື້ມແບບຮຽນ ແລະ ຄູ່ມືຄູວິຊາສຶກສາພົນລະເມືອງຂັ້ນ ມ.5
- ຮູບພາບທ່ານສຸພານຸວົງ
- ຮູບພາບຄອບຄົວ
- ຮູບພາບບຸກຄົນທີ່ມີຄຸນສົມບັດ ແລະ ເປັນແບບຢ່າງໃນຫ້ອງຮຽນ ຫຼື ໂຮງຮຽນ
- ຮູບພາບກ່ຽວກັບປະເພນີ:, ການເຮັດບຸນ, ການບາສີສູ່ຂ້ວນ ແລະ ອື່ນໆ
- ເຈ້ຍແຜ່ນໃຫຍ່, ນ້ອຍ, ບິກ, ສໍ, ກາວຕິດ ແລະ ອື່ນໆ ທີ່ກ່ຽວຂ້ອງກັບບົດຮຽນ

## 4. ກິດຈະກຳການຮຽນ-ການສອນ

**ຊົ່ວໂມງທີ 1**

- ທົບທວນບົດຮຽນບົດທີ 9
- ຄູຕັ້ງຄຳຖາມກ່ຽວກັບບົດຮຽນທີ່ໄດ້ຮຽນຜ່ານມາ

  + ການອອກແຮງງານມີບົດບາດສຳຄັນແນວໃດຕໍ່ການພັດທະນາສັງຄົມ
- ໃຫ້ນັກຮຽນຕອບ 1-2 ຄົນຄູອະທິບາຍເພີ່ມເຕີມແລ້ວລ້ຽວເຂົ້າສູ່ບົດຮຽນໃໝ່

**1. ສົນທະນາລວມພົດທ້ອງຄວາມສຳນຶກກ່ຽວກັບຄຸນສົມບັດ**

- ຄູຕັ້ງຄຳຖາມ

  + ຄຸນສົມບັດແມ່ນຫຍັງ?

  + ຄຸນສົມບັດມີຄຸນລັກສະນະແນວໃດ?
- ຄູແບ່ງກຸ່ມໃຫ້ນັກຮຽນຄົ້ນຄວ້າຕາມຄຳຖາມທີ່ຕັ້ງໄວ້ນັ້ນ
- ຕາງໜ້າກຸ່ມຂຶ້ນສະເໜີ
- ກຸ່ມອື່ນຟັງ ແລະ ປະກອບຄວາມເຫັນເພີ່ມເຕີມ
- ຄູຈົດບາງຄຳຕອບທີ່ສຳຄັນຂອງນັກຮຽນໃສ່ກະດານ
- ຄູອະທິບາຍເພີ່ມເຕີມບາງບັນຫາ ທີ່ເຫັນວ່າບໍ່ທັນຄົບຖ້ວນ ເພື່ອໃຫ້ເຂົ້າໃຈເປັນເອກະພາບກັນ

**ຄູສະຫຼຸບ**

- ຄຸນສົມບັດແມ່ນແບບແຜນດຳລົງຊີວິດ ແມ່ນບັນດາທັດສະນະຄະຕິ ແລະ ອຸດົມການ ທີ່ເປັນມາດຖານຂອງມວນມະນຸດຢູ່ໃນສັງຄົມໃດໜຶ່ງ ຫຼື ຊາດໃດໜຶ່ງທີ່ຍອມຮັບວ່າ: ດີ ສະນັ້ນ, ***ຄຸນສົມບັດແມ່ນລະບົບຫຼັກການ, ມາດຖານສັງ ຄົມທີ່ຄົນເຮົາຈະຕ້ອງຕື່ນຕົວປະພຶດຕົນໃຫ້ສອດຄ່ອງກັບຜົນປະໂຫຍດຂອງຊຸມຊົນ ແລະ ສັງຄົມ.***
- ຄຸນລັກສະນະຂອງຄຸນສົມບັດ ແມ່ນຄຸນສົມບັດທີ່ກ້າວໜ້າ ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການຫັນເປັນອຸດສະຫະກຳ ແລະ ທັນສະໄໝ. ໂດຍສະເພາະແມ່ນການຮຽນເອົາຄຸນສົມບັດອັນດີງາມຂອງທ່ານຜູ້ນຳ ແລະ ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ.

- ຄຸນສົມບັດມີລັກສະນະນາມມະທຳ ແລະ ສືບທອດຄວາມສຳນຶກທີ່ດີແມ່ນສິ່ງທີ່ບໍ່ມີຕົວຕົນ, ບໍ່ສາມາດຈັບບາຍດ້ວຍມືໄດ້ ແຕ່ສາມາດເຫັນໄດ້ດ້ວຍການສະແດງອອກທາງພຶດຕິກຳ ແລະ ອີກຢ່າງໜຶ່ງຄຸນສົມບັດບໍ່ໄດ້ເກີດຂຶ້ນເອງ ຫຼື ມີມາແຕ່ກຳເນີດ. ຄຸນສົມບັດຈະເກີດຂຶ້ນໄດ້ ກໍຕໍ່ເມື່ອມີການສຶກສາອົບຮົມຈາກພໍ່ແມ່ ແລະ ສັງຄົມ ໂດຍຜ່ານການທົດສອບຈາກຂະບວນການອອກແຮງງານຕ່າງໆໃນການດຳລົງຊີວິດຕົວຈິງ.

1. ຈຳແນກຄວາມແຕກຕ່າງລະຫວ່າງຄຸນສົມບັດກັບກົດໝາຍ ແລະ ຮີດຄອງປະເພນີ

| ຄຸນສົມບັດ | ກົດໝາຍ | ຮີດຄອງປະເພນີ |
|---|---|---|
| - ເກີດຂຶ້ນໃນຂະບວນວິວັດການອອກແຮງງານ, ຮີດຄອງປະເພນີ ແລະ ອື່ນໆ<br>- ມີລັກສະນະສືບທອດ ແລະປັບປຸ່ງໄປແຕ່ລະຍຸກສັງຄົມ | - ແມ່ນຂໍ້ກຳໜົດທີ່ລັດວາງອອກ ແລະ ປະກາດໃຊ້, ມີຜົນບັງຄັບໃຊ້ສຳລັບພົນລະເມືອງທຸກຄົນ.<br>- ແມ່ນມາດຕະເກນໜຶ່ງທີ່ດັດປັບສາຍພົວພັນສັງຄົມ ແລະ ຮັບປະກັນໂດຍລັດ. | - ແມ່ນແບບແຜນການປະພຶດປະຕິບັດຂອງຄົນເຮົາຕາມຄວາມຊິນເຄີຍເຊິ່ງເປັນມໍລະດົກອັນລ້ຳຄ່າ ແລະ ຕິດພັນກັບການດຳລົງຊີວິດ |

**ຊົ່ວໂມງທີ 2**

**2. ສົນທະນາກ່ຽວກັບບົດບາດຂອງຄຸນສົມບັດຕໍ່ການພັດທະນາບຸກຄົນ, ຄອບຄົວ ແລະ ສັງຄົມ**

- ຄູຕັ້ງຄຳຖາມ
  + ຄຸນສົມບັດມີບົດບາດສຳຄັນຕໍ່ການພັດທະນາບຸກຄົນຄືແນວໃດ?
  + ຄຸນສົມບັດມີບົດບາດສຳຄັນຕໍ່ການພັດທະນາຄອບຄົວຄືແນວໃດ?
  + ຄຸນສົມບັດມີຄວາມສຳຄັນຕໍ່ການພັດທະນາສັງຄົມຄືແນວໃດ?
- ຄູ ແລະ ນັກຮຽນພ້ອມກັນສົນທະນາ ຈາກນັ້ນກໍແບ່ງກຸ່ມໃຫ້ນັກຮຽນຄົ້ນຄວ້າ
- ຄູໃຫ້ຕາງໜ້າກຸ່ມອາສາສະໝັກຂຶ້ນລາຍງານ ຖ້າບໍ່ມີຜູ້ອາສາສະໝັກ ຈຶ່ງເອີ້ນຕາງໜ້າກຸ່ມຂຶ້ນຕອບ

**ຄູສະຫຼຸບ**:

- ຄຸນສົມບັດຕໍ່ການພັດທະນາບຸກຄົນສະແດງອອກເປັນຄົນທີ່ມີນ້ຳໃຈຮັກບ້ານເກີດເມືອງນອນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ເຄົາລົບຕໍ່ລະບຽບກົດໝາຍ, ເອົາໃຈໃສ່ສຶກສາຮ່ຳຮຽນ, ມີຄວາມສາມັກຄີ, ກ້າຫານ, ເອື້ອເຟື້ອເພື່ອແຜ່.
- ຄອບຄົວເປັນສະຖາບັນທີ່ມີອິດທິພົນຕໍ່ການພັດທະນາສັງຄົມຢ່າງເລິກເຊິ່ງເຊັ່ນ: ພັດທະນາບຸກຄະລິກກະພາບ, ທັດສະນະທ່າທີ ແລະ ຄຸນສົມບັດສິນທຳປະຕິວັດ.
- ຢາກເປັນຄົນທີ່ມີຄຸນສົມບັດຢູ່ໃນສັງຄົມເຮົາຄວນປະພຶດຕົນຄື: ຫຼີກເວັ້ນຈາກຄວາມແຂງກະດ້າງ, ສາຍຕາເຂັ່ງຂືມ, ການເວົ້າຈາໃຊ້ສຽງດັງເກີນຄວນ... ບໍ່ວ່າເຮົາຈະຢູ່ໃນຖານະໃດ, ເຫດການໃດກໍຄວນໃຫ້ມີຄວາມເໝາະສົມ, ມີຄວາມສຸພາບຮຽບຮ້ອຍບໍ່ວ່າທາງດ້ານຮ່າງກາຍ ແລະ ຈິດໃຈ
- ຄຸນສົມບັດມີບົດບາດສຳຄັນ ຕໍ່ການພັດທະນາບຸກຄົນ, ຄອບຄົວ ແລະ ສັງຄົມ. ສັງຄົມຈະດີໄດ້ກໍຍ້ອນຄົນເປັນຜູ້ປະຕິບັດ. ສະນັ້ນ, ຄຸນສົມບັດຈຶ່ງເປັນພື້ນຖານຂອງການສ້າງແນວຄິດຈິດໃຈໃຫ້ຕົນເອງກາຍເປັນຄົນທີ່ມີຄຸນນະທຳ ເພື່ອກາຍເປັນພົນລະເມືອງທີ່ດີຂອງສັງຄົມ ແລະ ປະເທດຊາດ. ມີແຕ່ຄົນມີຄຸນສົມບັດດີເທົ່ານັ້ນ ຈຶ່ງຈະເຮັດໃຫ້ສັງຄົມມີຄວາມຍຸຕິທຳ, ສະຫງົບສຸກ ແລະ ເຮັດໃຫ້ການພັດທະນາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ ແລະ ສີວິໄລຕະຫຼອດໄປ.
- ຄູແນະນຳໃຫ້ນັກຮຽນອ່ານເອກະສານເພີ່ມເຕີມໃນປຶ້ມແບບຮຽນ
- ຄູສຶກສາອົບຮົມກ່ຽວກັບຄຸນສົມບັດ ສະແດງອອກດ້ານກິລິຍາມາລະຍາດທີ່ດີມີຄວາມສຳນຶກ ແລະ ການປະພຶດທີ່ຖືກຕ້ອງເຮັດແຕ່ສິ່ງທີ່ມີປະໂຫຍດຕໍ່ຕົນເອງ, ຄົນອື່ນ ແລະສ່ວນລວມ
- ຄູແນະນຳໃຫ້ນັກຮຽນເມືອປະຕິບັດຢູ່ໃນຄອບຄົວ ແລະ ຊຸມຊົນທີ່ຕົນອາໄສຢູ່
- ຄູແນະນຳໃຫ້ນັກຮຽນແກ້ບົດເຝິກຫັດ 1, 2, 3, 4 ແລະ 5 ໃນປຶ້ມແບບຮຽນ ໂດຍແບ່ງນັກຮຽນອອກເປັນ 5 ກຸ່ມ ຕາມບົດເຝິກຫັດ
- ຄູແບ່ງບົດເຝິກຫັດໃຫ້ນັກຮຽນຕາມກຸ່ມເປັນວຽກບ້ານ ແລ້ວມາສົ່ງຄູໃນຊົ່ວໂມງໜ້າ

## 5. ການວັດ ແລະ ປະເມີນຜົນ

- ສັງເກດນັກຮຽນຈາກ:
  + ການຕອບຄຳຖາມ
  + ການເຮັດວຽກເປັນກຸ່ມ
  + ການຕັ້ງໃຈຟັງ ແລະ ປະກອບຄວາມເຫັນ
  + ການສົ່ງວຽກບ້ານ

# ບົດທີ 11 ພັນທະພື້ນຖານ ແລະ ຄຸນສົມບັດ

**ເວລາ 3 ຊົ່ວໂມງ**

## 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍຂອງພັນທະ
- ອະທິບາຍຄວາມໝາຍຂອງມະໂນທຳ
- ອະທິບາຍຈັນຍາບັນ ແລະ ກຽດສັກສີ
- ຈຳແນກຄວາມສຸກບຸກຄົນ ແລະ ຄວາມສຸກຄອບຄົວ
- ຮັກສາຈັນຍາບັນ ແລະ ກຽດສັກສີຂອງຕົນເອງເພື່ອເຮັດໃຫ້ຄອບຄົວ ແລະ ສັງຄົມມີຄວາມສຸກ.

## 2. ເນື້ອໃນ

- ຄວາມສຳນຶກກ່ຽວກັບພັນທະ
  + ພັນທະແມ່ນຫຍັງ
  + ພັນທະຂອງໄວໜຸ່ມລາວ
- ມະໂນທຳ
  + ມະໂນທຳແມ່ນຫຍັງ
  + ສ້າງຄົນໃຫ້ມີມະໂນທຳ
- ຈັນຍາບັນ ແລະ ກຽດສັກສີ
  + ຈັນຍາບັນ
  + ກຽດສັກສີ
- ຄວາມສຸກ
  + ຄວາມສຸກແມ່ນຫຍັງ
  + ຄວາມສຸກບຸກຄົນ ແລະ ຄວາມສຸກສັງຄົມ

## 3. ສື່ການຮຽນ-ການສອນ

- ປຶ້ມແບບຮຽນວິຊາສຶກສາພົນລະເມືອງຂັ້ນ ມ.5
- ຮູບພາບທະຫານພັນທະ

- ຮູບພາບນັກຮຽນເກັ່ງ ທີ່ໄດ້ສ້າງກຽດ ແລະ ຊື່ສຽງມາສູ່ໂຮງຮຽນ

## 4. ກິດຈະກຳການຮຽນ-ການສອນ

### ຊົ່ວໂມງທີ 1

- **ທວນຄືນບົດຮຽນເກົ່າ**
- ຄູຕັ້ງຄຳຖາມ
  + ຄຸນສົມບັດແມ່ນຫຍັງ?
  + ຄົນທີ່ມີຄຸນສົມບັດສະແດງອອກຄືແນວໃດ?
- ຄູເອີ້ນນັກຮຽນຈຳນວນໜຶ່ງຕອບຄຳຖາມ

**ຄູສະຫຼຸບ**:

- ຄຸນສົມບັດແມ່ນແບບແຜນການດຳລົງຊີວິດ ແມ່ນບັນດາທັດສະນະຄະຕິ ແລະ ອຸດົມການທີ່ເປັນມາດຖານຂອງມວນມະນຸດຢູ່ໃນສັງຄົມໃດໜຶ່ງ ຫຼື ຊາດໃດໜຶ່ງທີ່ຍອມຮັບໂດຍສະແດງອອກຜ່ານທາງຮ່າງກາຍ, ວາຈາ ແລະ ຈິດໃຈ.
- ຄົນທີ່ມີຄຸນສົມບັດດີສະແດງອອກ ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ເຄົາລົບນັບຖືລະບຽບກົດໝາຍ, ເອົາໃຈໃສ່ສຶກສາຮ່ຳຮຽນ, ມີຄວາມສາມັກຄີ, ກ້າຫານ, ເອື້ອເຟື້ອເພື່ອແຜ່...

**1. ສົນທະນາລວມກ່ຽວກັບຄວາມໝາຍ ແລະ ພັນທະພື້ນຖານ**

- ຄູຕັ້ງຄຳຖາມ
  + ພັນທະແມ່ນຫຍັງ?
  + ພັນທະຂອງໄວໜຸ່ມລາວສະແດງອອກຄືແນວໃດ?
- ຄູແນະນຳໃຫ້ນັກຮຽນຄົ້ນຄວ້າ ສົນທະນາລວມໝົດຫ້ອງ
- ຄູໃຫ້ນັກຮຽນຈຳນວນໜຶ່ງຕອບຄຳຖາມ
- ຄູຈົດຄຳຕອບຂອງນັກຮຽນໃສ່ກະດານ, ຈາກນັ້ນຄູອະທິບາຍຕື່ມ ເພື່ອໃຫ້ນັກຮຽນເຂົ້າໃຈ ແລະ ເປັນເອກະພາບ

**ຄູສະຫຼຸບ**:

- ພັນທະແມ່ນການສ່ອງແສງໃນດ້ານຄຸນສົມບັດ, ການພົວພັນລະຫວ່າງບຸກຄົນກັບບຸກຄົນ ແລະ ລະຫວ່າງບຸກຄົນກັບສັງຄົມ. ພັນທະແມ່ນສັນຍາລັກພິເສດໜຶ່ງໃນການດຳ

ລົງຊີວິດຂອງແຕ່ລະຄົນ, ເພື່ອຕອບສະໜອງໃຫ້ແກ່ການຄົງຕົວ ແລະ ຂະຫຍາຍຕົວຂອງຕົນເອງ, ຄົນອື່ນ ແລະ ສັງຄົມ, ສະນັ້ນພັນທະແມ່ນຄວາມຮັບຜິດຊອບຂອງບຸກຄົນຕໍ່ຄວາມຮຽກຮ້ອງຕ້ອງການ, ຜົນປະໂຫຍດລວມຂອງຊຸມຊົນ ແລະ ສັງຄົມ.

- ພັນທະຂອງໄວໜຸ່ມສະແດງອອກ: ເຝິກຝົນຫຼໍ່ຫຼອມຕົນເອງໃຫ້ມີຄຸນສົມບັດມີຄວາມຕື່ນຕົວ, ຕ້ານສິ່ງບໍ່ດີ, ປົກປ້ອງສິ່ງທີ່ດີ, ປະກອບສ່ວນສ້າງສັງຄົມ, ເຄົາລົບນັບຖືລະບຽບກົດໝາຍ, ດຸໝັ່ນຄົ້ນຄວ້າຮ່ຳຮຽນ, ຍົກລະດັບຄວາມຮູ້ຄວາມສາມາດ, ມີຄວາມສາມັກຄີຊ່ວຍເຫຼືອຄົນອື່ນ ແລະ ສັງຄົມ, ປະກອບສ່ວນເຂົ້າໃນການພັດທະນາ ແລະ ສ້າງສາປະເທດຊາດໃຫ້ຈະເລີນຮຸ່ງເຮືອງ.

ສະນັ້ນ ພັນທະຂອງຊາວໜຸ່ມລາວແມ່ນຄວາມຮັບຜິດຊອບຂອງບຸກຄົນ ຕໍ່ກັບຄວາມຕ້ອງການ, ຜົນປະໂຫຍດລວມຂອງທຸກຄົນ, ຮູ້ເສຍສະຫຼະຜົນປະໂຫຍດສ່ວນຕົວ ເພື່ອຜົນປະໂຫຍດສ່ວນລວມ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ຊົ່ວໂມງທີ 2**

2. **ສົນທະນາລວມກ່ຽວກັບມະໂນທຳ**

- ຄູຕັ້ງຄຳຖາມ
  + ມະໂນທຳແມ່ນຫຍັງ?
  + ຄົນທີ່ມີມະໂນທຳສະແດງອອກຄືແນວໃດ?
  + ຄົນທີ່ບໍ່ມີມະໂນທຳເປັນຄົນຄືແນວໃດ?
- ຄູໃຫ້ນັກຮຽນແຕ່ລະຄົນຄົ້ນຄວ້າດ້ວຍຕົນເອງ
- ຄູເອີ້ນນັກຮຽນຕອບຄຳຖາມ
- ຄູອະທິບາຍຄືນຄຳຕອບຂອງນັກຮຽນ ແລະ ເພີ່ມເຕີມບາງບັນຫາທີ່ຍັງບໍ່ທັນຄົບຖ້ວນ

**ຄູສະຫຼຸບ**:

+ ມະໂນທຳແມ່ນຄວາມສາມາດໃນການຕີລາຄາ ແລະ ດັດປັບການປະພຶດຄຸນສົມບັດຂອງຕົນເອງເຂົ້າໃນການພົວພັນກັບຄົນອື່ນ ແລະ ສັງຄົມ
+ ຄົນທີ່ມີມະໂນທຳແມ່ນເຮັດໃຫ້ຄົນອື່ນມີຄວາມເຊື່ອໝັ້ນ, ມີຄວາມຕັ້ງໜ້າ ແລະ ປັບປຸງຕົນເອງໃຫ້ສອດຄ່ອງກັບມາດຖານຄຸນສົມບັດ, ສັງຄົມມີຄວາມເມດຕາ, ມີຄວາມ

ສາມັກຄີ, ບໍ່ສ້າງຄວາມເດືອດຮ້ອນໃຫ້ຄົນອ້ອມຂ້າງ ແລະ ສັງຄົມ, ຮູ້ເຝິກຝົນຫຼໍ່ຫຼອມແນວຄິດຄຸນສົມບັດເປັນປະຈຳເພື່ອເຮັດໃຫ້ຕົນເອງມີຄວາມກ້າວໜ້າ.

+ ຄົນທີ່ບໍ່ມີມະໂນທຳແມ່ນຄົນທີ່ບໍ່ມີຄຸນນະທຳ, ບໍ່ມີຄວາມເມດຕາ, ຄວາມສາມັກບໍ່ຮູ້ຄິດ, ວິເຄາະ, ບໍ່ຍອມຮັບຜິດຕໍ່ສິ່ງທີ່ຕົນເອງເຮັດຜິດ...

3. **ສົນທະນາກ່ຽວກັບຈັນຍາບັນ ແລະ ກຽດສັກສີ**

- **ຄູຕັ້ງຄຳຖາມ**
  + ຈັນຍາບັນແມ່ນຫຍັງ?
  + ກຽດແມ່ນຫຍັງ?
  + ສັກສີແມ່ນຫຍັງ?
- ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
- ຄູແນະນຳໃຫ້ນັກຮຽນຄົ້ນຄວ້າ ແລະ ຕອບຄຳຖາມ
- ຄູຢາຍເຈ້ຍແຜ່ນໃຫຍ່ໃຫ້ແຕ່ລະກຸ່ມ ເພື່ອຂຽນຄຳຕອບ (ຖ້າມີ)
- ຄູໃຫ້ຕາງໜ້າກຸ່ມຂຶ້ນສະເໜີ, ກຸ່ມອື່ນຟັງ ແລະ ປະກອບຄວາມເຫັນ
- ຄູອະທິບາຍເພີ່ມເຕີມ ເພື່ອຄວາມເປັນເອກະພາບ, ຈາກນັ້ນຄູແນະນຳນັກຮຽນຈົດໃສ່ເຈ້ຍແຜ່ນໃຫ່ຍຕິດໃສ່ຝາຫ້ອງຮຽນເພື່ອເປັນສະຕິເຕືອນໃຈ.

**ຄູສະຫຼຸບ**:

- ຈັນຍາບັນແມ່ນບັນດາມາດຖານການປະພຶດແມ່ນຄຸນຄ່າການເປັນຄົນທີ່ໄດ້ຮັບຄວາມເຄົາລົບນັບຖື ແລະ ຕີລາຄາສູງຈາກຄົນອື່ນ ແລະ ສັງຄົມ.
- ຕົວຢ່າງ ຈັນຍາບັນຂອງຄູ: ຮູ້ຮັກ, ມີຄວາມເມດຕາ, ສັ່ງສອນຊ່ວຍເຫຼືອ, ເປັນແບບຢ່າງທີ່ດີໃຫ້ແກ່ນັກຮຽນ.

**ກຽດ**: ແມ່ນຄວາມພາກພູມໃຈຂອງຊີວິດ ແລະ ເປັນສິ່ງທີ່ສ້າງຄວາມຮູ້ສຶກພາກພູມໃຈ, ສ້າງຊື່ສຽງທີ່ດີໃຫ້ຕົນເອງ, ຄອບຄົວ, ສັງຄົມ ແລະ ປະເທດຊາດ.

**ສັກສີ**: ຄົນເຮົາຈະຢູ່ໃນຖານະໃດ ກໍລ້ວນແຕ່ມີສັກສີຂອງຄວາມເປັນຄົນໃນດ້ານຈິດໃຈ, ຄຸນສົມບັດ ເຊິ່ງຄົນອື່ນ ແລະ ສັງຄົມຍອມຮັບຕີລາຄາສູງຕໍ່ຄົນຜູ້ນັ້ນວ່າມີສັກສີ. ສະນັ້ນ, ກຽດສັກສີແມ່ນການເຄົາລົບນັບຖື, ໃຫ້ກຽດ, ສ້າງຊື່ສຽງທີ່ດີໃຫ້ແກ່ຕົນເອງ ແລະ ສັງຄົມໃນດ້ານຈິດໃຈ, ຄຸນສົມບັດ ເຊິ່ງເຮັດໃຫ້ຄົນອື່ນ, ສັງຄົມຍອມຮັບ ແລະ ຕີລາຄາສູງຕໍ່ຄົນຜູ້ນັ້ນວ່າມີກຽດສັກສີ.

**ຊົ່ວໂມງທີ 3**

**4. ສົນທະນາກ່ຽວກັບຄວາມສຸກ**

- ຄູຕັ້ງຄຳຖາມ
  - + ຄວາມສຸກແມ່ນຫຍັງ?
  - + ຄວາມສຸກບຸກຄົນແມ່ນຫຍັງ?
  - + ຄວາມສຸກສັງຄົມແມ່ນຫຍັງ?
- ຄູໃຫ້ນັກຮຽນຄົ້ນຄວ້າ ແລະ ຕອບຄຳຖາມ
- ຄູໃຫ້ນັກຮຽນຜູ້ໜຶ່ງຂຶ້ນສະເໜີ, ນັກຮຽນຜູ້ອື່ນປະກອບຄວາມເຫັນເພີ່ມເຕີມ

**ຄູສະຫຼຸບ**:

- ແມ່ນຄວາມມ່ວນຊື່ນ, ເພິ່ງພໍໃຈ, ເມື່ອໄດ້ຮັບການຕອບສະໜອງດ້ວຍຄວາມບໍລິສຸດທາງດ້ານວັດຖຸ ແລະ ຈິດໃຈ.
- ຄວາມສຸກແບ່ງອອກເປັນ 2 ປະເພດຄື:
- ຄວາມສຸກທາງກາຍ: ແມ່ນຄວາມສຸກທີ່ໄດ້ຮັບຈາກການສຳພັດທາງອິນຊີທັງ 5 ຂອງຄົນເຮົາ
- ຄວາມສຸກທາງໃຈ: ແມ່ນຄວາມສຸກທີ່ໄດ້ຮັບຈາກການສຳພັດດ້ວຍຈິດໃຈຄື: ຄວາມສະບາຍກາຍ ແລະ ສະບາຍໃຈ ເຊິ່ງເກີດມາຈາກຈິດໃຈ.
- **ຄວາມສຸກບຸກຄົນ**: ແມ່ນມີສຸຂະພາບແຂງແຮງດີ, ມີການສຶກສາ, ມີວຽກເຮັດງານທຳ, ມີຄົນຍ້ອງຍໍຕໍ່ຜົນງານຂອງຕົນເອງ.
- **ຄວາມສຸກສັງຄົມ**: ແມ່ນການຢູ່ຮ່ວມກັນຢ່າງມີຄວາມສຸກ ມີຄວາມສະຫງົບຖືກຕ້ອງປອງດອງກັນ, ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ທຸກຄົນມີຄຸນນະພາບຊີວິດທີ່ດີ.
- ຄູອາດຈະຕັ້ງຄຳຖາມກວມເນື້ອໃນບົດຮຽນ ເພື່ອປະເມີນວ່ານັກຮຽນເຂົ້າໃຈບົດຮຽນແນວໃດ, ຖ້ານັກຮຽນບໍ່ເຂົ້າໃຈຄູອະທິບາຍຕື່ມ
- ຄູສະຫຼຸບໝົດບົດໂດຍຫຍໍ້ເພື່ອໃຫ້ນັກຮຽນບັນທຶກໃສ່ປຶ້ມ.
- ຄູແນະນຳໃຫ້ນັກຮຽນອ່ານບົດຮຽນຄືນ ແລະ ອ່ານເອກະສານທີ່ກ່ຽວຂ້ອງກັບບົດຮຽນ

- ຄູສຶກສາອົບຮົມກ່ຽວກັບແນວຄິດ ແລະ ກຽດສັກສີ, ຈັນຍາບັນຂອງນັກຮຽນຢູ່ໂຮງຮຽນ, ສັງຄົມ, ເປັນລູກທີ່ດີໃນຄອບຄົວ ແລະ ເປັນຄົນດີໃນສັງຄົມ

## 5. ການວັດ ແລະ ປະເມີນຜົນ

- ຄູແນະນໍາໃຫ້ນັກຮຽນເຮັດບົດເຝິກຫັດ ຂໍ້ທີ 1, 2, 5 ໃນປຶ້ມແບບຮຽນ
- ຄູໃຫ້ນັກຮຽນເຮັດວຽກບ້ານຕາມບົດເຝິກຫັດຂໍ້ທີ 3 ແລະ 4 ແລ້ວສົ່ງໃຫ້ຄູໃນຊົ່ວໂມງໜ້າ
- ສັງເກດນັກຮຽນຈາກ:
  + ການຕອບຄໍາຖາມ
  + ການເຮັດວຽກເປັນກຸ່ມ
  + ການສົນທະນາລວມ ຫຼື ກຸ່ມ
  + ການຕັ້ງໃຈຟັງ ແລະ ປະກອບຄວາມເຫັນ
  + ການສົ່ງວຽກບ້ານ


1.1 ພັນທະແມ່ນຫຍັງ
1.2 ພັນທະຂອງໄວໜຸ່ມລາວ
1. ຄວາມ
ສຳນຶກ
ກ່ຽວກັບ
ພັນທະ
2.1 ມະໂນທຳແມ່ນຫຍັງ
4.2 ຄວາມສຸກບຸກຄົນ
ແລະ ຄວາມສຸກສັງຄົມ
2. ມະໂນທຳ
ບົດທີ11:ມາດຖານ
ພື້ນຖານຂອງຄຸນ
ສົມບັດ
4. ຄວາມສຸກ
2.2 ສ້າງຄົນໃຫ້ມີມະໂນທຳ
4.1 ຄວາມສຸກແມ່ນຫຍັງ
3.ຈັນຍາບັນ
ແລະ
ກຽດສັກສີ
3.1 ຈັນຍາບັນ
3.2 ກຽດສັກສີ

# ບົດທີ 12 ການພັດທະນາຕົນເອງໃຫ້ສົມບູນ

**ເວລາ 1 ຊົ່ວໂມງ**

## 1 . ຈຸດປະສົງ

**ໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍຂອງການພັດທະນາຕົນເອງໃຫ້ສົມບູນ
- ພັດທະນາຕົນເອງໃຫ້ສົມບູນຕາມຄຸນຄ່າຂອງຄຸນສົມບັດສັງຄົມ
- ວາງຈຸດໝາຍເຝິກຝົນຫຼໍ່ຫຼອມຕົນເອງ ໃຫ້ສົມບູນຕາມຄຸນຄ່າຂອງຄຸນສົມບັດ ແລະ ຕັດສິນໃຈຜ່ານຜ່າຂໍ້ຫຍຸ້ງຍາກເພື່ອປະຕິບັດຕາມຈຸດໝາຍທີ່ວາງໄວ້.
- ເຝິກຝົນຫຼໍ່ຫຼອມຄວາມອາດສາມາດໃນການພັດທະນາຕົນເອງໃຫ້ສົມບູນ
- ຊອກຮູ້ຮໍ່າຮຽນຈຸດດີ, ຈຸດເດັ່ນຂອງຄົນອື່ນເພື່ອເປັນບົດຮຽນໃນການພັດທະນາຕົນເອງ.

## 2. ເນື້ອໃນ

- ຄວາມຮັບຮູ້ກ່ຽວກັບຕົນເອງ
  + ລັກສະນະຈຸດພິເສດຂອງຕົນເອງ
  + ການຮັບຮູ້ຕົນເອງ
- ການພັດທະນາຕົນເອງໃຫ້ສົມບູນ
  + ແນວໃດແມ່ນການພັດທະນາຕົນເອງໃຫ້ສົມບູນ?
  + ເປັນຫຍັງຈິ່ງຕ້ອງພັດທະນາຕົນເອງໃຫ້ສົມບູນ
- ວິທີການພັດທະນາຕົນເອງໃຫ້ສົມບູນ

## 3. ສື່ການຮຽນ-ການສອນ.

- ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາສຶກສາພົນລະເມືອງຂັ້ນ ມ.5
- ບົດເລື່ອງສັ້ນ, ຜູ້ເປັນແບບຢ່າງຢູ່ໃນຫ້ອງຮຽນ, ໂຮງຮຽນ, ສັງຄົມ, ເພື່ອເອົາເປັນແບບຢ່າງ.
- ເຈ້ຍແຜ່ນໃຫຍ່ເພື່ອຂຽນແຜນ ຄວາມຕ້ອງການພັດທະນາຂອງນັກຮຽນ.
- ເຈ້ຍ A4 ສໍາລັບໃຫ້ນັກຮຽນແຕ່ລະຄົນແກ້ບົດເຝິກຫັດ, ວາງຈຸດໝາຍ ແລະ ແຜນການ.

## 4. ກິດຈະກຳການຮຽນ-ການສອນ

- ທົບທວນຄືນບົດຮຽນ
- ຄູຕັ້ງຄຳຖາມ
  + ແຕ່ລະຄົນມີຄຸນທາດຄຸນສົມບັດແລ້ວບໍ?
  + ຢາກໃຫ້ມີຄຸນທາດນັ້ນພວກເຮົາຕ້ອງເຮັດຫຍັງແດ່?
- ຄູໃຫ້ນັກຮຽນຕອບ 2-3 ຄົນ
- ຈາກນັ້ນຄູນຳພານັກຮຽນກ້າວເຂົ້າສູ່ບົດຮຽນໃໝ່

**1. ສົນທະນາກ່ຽວກັບຄວາມຮັບຮູ້ຕົນເອງ.**

- ຄູ ແລະ ນັກຮຽນ ພ້ອມກັນສົນທະນາຄຳຖາມທີ່ເວົ້າເຖິງຈຸດພິເສດຂອງຕົນເອງ
- ຄູຕັ້ງຄຳຖາມ:
  + ການຮັບຮູ້ກ່ຽວກັບຕົນເອງແມ່ນແນວໃດ?
  + ການຮັບຮູ້ກ່ຽວກັບຕົນເອງເປັນສິ່ງງ່າຍດາຍ ຫຼື ບໍ່?
  + ມີໃຜທີ່ມີແຕ່ຈຸດດີ ຫຼື ມີແຕ່ຈຸດອ່ອນ?
  + ເພື່ອຢາກພັດທະນາຕົນເອງໃຫ້ດີຂຶ້ນ ແຕ່ລະຄົນຄວນເຮັດຄືແນວໃດ?
- ໃຫ້ນັກຮຽນສົນທະນາເປັນກຸ່ມ ຫຼື ບຸກຄົນກໍ່ໄດ້.
- ຈາກນັ້ນຄູກໍ່ໃຫ້ນັກຮຽນແບ່ງປັນຄວາມຮັບຮູ້ຂອງຕົນເອງກັບໝູ່ເພື່ອນວ່າ: ມີຈຸດໃດຄືກັນ ແລະ ຕ່າງກັນ
- ຄູໃຫ້ນັກຮຽນຈຳນວນໜຶ່ງຂຶ້ນສະເໜີ, ຄົນອື່ນປະກອບຄວາມເຫັນເພີ່ມເຕີມ

**ຄູສະຫຼຸບ**

- ຄວາມຮັບຮູ້ ແມ່ນຄວາມສາມາດພື້ນຖານທີ່ມີຊີວິດຊີວາ, ຊ່ວຍໃຫ້ຄົນເຮົາຮັບຮູ້ຕີລາຄາຖືກຕ້ອງກ່ຽວກັບຕົນເອງ (ຄວາມອາດສາມາດ, ຄວາມຮູ້ສຶກ, ຄວາມມັກ, ຄວາມຊິນເຄີຍ, ຈຸດເດັ່ນ, ຈຸດອ່ອນ...) ແຕ່ລະຄົນກໍ່ມີຈຸດດີທີ່ພາກພູມໃຈ, ດີໃຈກ່ຽວກັບຕົນເອງ ແລະ ກໍ່ມີບາງຈຸດຈະຕ້ອງພະຍາຍາມແກ້ໄຂ ແລະ ພັດທະນາໃຫ້ສົມບູນ. ການຮັບຮູ້ກ່ຽວກັບຕົນເອງແມ່ນຄວາມສາມາດສັງເກດ, ຕີລາຄາເຖິງຕົນເອງເຮັດຖືກ ຫຼື ຜິດ, ການຮັບຮູ້ກ່ຽວກັບຕົນເອງບໍ່ເປັນສິ່ງງ່າຍດາຍ, ມີບາງຄົນເຄີຍຕີລາຄາໃຫ້ຕົນເອງສູງ ຫຼື ຕໍ່າໂພດກ່ຽວກັບຄວາມສາມາດຂອງຕົນ.

- ເພື່ອຂະຫຍາຍຈຸດດີ, ແຕ່ລະຄົນຈະຕ້ອງຮູ້ຈຸດເດັ່ນ ແລະ ແກ້ໄຂຈຸດອ່ອນຂອງຕົນທີ່ຍັງຄົງຄ້າງເພື່ອພັດທະນາຕົນເອງໃຫ້ດີຂຶ້ນ.

**2 ສົນທະນາກ່ຽວກັບການພັດທະນາຕົນເອງໃຫ້ສົມບູນ**

- ຄູອາດຈະໃຫ້ນັກຮຽນສົນທະນາເປັນກຸ່ມ ຫຼື ສົນທະນາລວມໝົດຫ້ອງຕາມຄໍາຖາມ:
  + ແນວໃດແມ່ນການພັດທະນາຕົນເອງໃຫ້ສົມບູນ?
  + ພວກເຮົາຕ້ອງການພັດທະນາຕົນເອງໃຫ້ສົມບູນບໍ່? ເພາະເຫດໃດ?
  + ຢູ່ໃນຫ້ອງ ຫຼື ໃນໂຮງຮຽນ, ມີໃຜແດ່ທີ່ເປັນແບບຢ່າງເພື່ອໃຫ້ທຸກຄົນຮໍ່າຮຽນ ແລະ ພັດທະນາຕົນເອງໃຫສົມບູນ?
- ໃຫ້ຕາງໜ້ານັກຮຽນ ຫຼື ຕາງໜ້າກຸ່ມຂຶ້ນສະເໜີ

**ຄູສະຫຼຸບ**

- ການພັດທະນາຕົນເອງ ແມ່ນຂະບວນການເສີມຂະຫຍາຍຈຸດດີ, ແກ້ໄຂຈຸດອ່ອນ, ຊອກຮູ້ຮໍ່າຮຽນສິ່ງທີ່ດີຂອງຄົນອື່ນ ເພື່ອພັດທະນາຕົນເອງໃຫ້ດີຂຶ້ນ ແລະ ມີຄວາມກ້າວໜ້າ.
- ແຕ່ລະຄົນລ້ວນມີຈຸດດີ ແລະ ຈຸດອ່ອນ, ບໍ່ມີໃຜຈະສົມບູນແບບໝົດທຸກຢ່າງເພາະຢູ່ໃນສັງຄົມແຕ່ລະມື້ກໍ່ມີການພັດທະນາໄປເລື້ອຍໆ, ຄວາມຕ້ອງການຂອງຄົນໃນສັງຄົມກໍ່ສູງຂຶ້ນ. ດັ່ງນັ້ນມັນຮຽກຮ້ອງໃຫ້ທຸກຄົນຕ້ອງເຝິກຝົນຫຼໍ່ຫຼອມຕົນເອງຢູ່ສະເໝີ, ຖ້າຜູ້ໃດບໍ່ມີການພັດທະນາຕົນເອງໃຫ້ສົມບູນ ຄົນຜູ້ນັ້ນກໍ່ຈະກາຍເປັນຄົນຫຼ້າຫຼັງຢູ່ໃນສັງຄົມ.

**3 ສົນທະນາກ່ຽວກັບການວາງຈຸດໝາຍ, ສ້າງແຜນພັດທະນາຕົນເອງໃຫ້ສົມບູນ.**

- ຄູໃຫ້ນັກຮຽນແຕ່ລະຄົນຂຽນແຜນການພັດທະນາຕົນເອງໃນດ້ານຕ່າງໆ.

**ຕົວຢ່າງ**:

- ການມີນໍ້າໃຈ, ມີກຽດສັກສີ, ມີຄວາມຮັບຜິດຊອບ, ຮັກປະເທດຊາດ, ມີມະນຸດສະ ທໍາ , ຄວາມເມດຕາ, ມີມາລະຍາດຄົບຖ້ວນ, ສັດຊື່, ເຂົ້າຫາໝູ່ ແລະ ຮ່ວມມືກັບ ໝູ່...
- ຈາກນັ້ນຄູໃຫ້ນັກຮຽນທຽບສິ່ງທີ່ກ່າວມາຂ້າງເທິງນັ້ນກັບຕົນເອງ ແລະ ຕີລາຄາວ່າຕົນເອງປະຕິບັດໄດ້ອັນໃດ, ຍັງສິ່ງໃດປະຕິບັດບໍ່ທັນໄດ້ ແລະ ສິ່ງໃດທີ່ຕົນເອງຈະພະຍາຍາມປະຕິບັດໃຫ້ໄດ້.
- ຄູອາດຈະຕັ້ງຄໍາຖາມລະດົມສະໝອງນັກຮຽນຕື່ມ

**ຄຳຖາມ**

+ ເພື່ອຢາກພັດທະນາຕົນເອງໃຫ້ສົມບູນ ຈະຕ້ອງຮຽນເອົາຄຸນສົມບັດຫັຍງແດ່ ແລະ ເຮັດດ້ວຍວິທີໃດ?

- ຄູໃຫ້ນັກຮຽນແຕ່ລະຄົນສະເໜີແນວຄວາມຄິດຂອງຕົນ
- ຈາກນັ້ນຄູສະຫຼຸບຫຍໍ້ຄວາມຄິດເຫັນ ແລະ ເວົ້າຫຍໍ້ກ່ຽວກັບສິດ ແລະ ຄວາມຮັບຜິດຊອບຕໍ່ການພັດທະນາຂອງຕົນເອງໃຫ້ສົມບູນ, ແນະນຳວິທີສ້າງແຜນພັດທະນາຕົນເອງໃຫ້ສົມບູນຄື:
  + ຮັບຮູ້ຈຸດດີ, ຈຸດອ່ອນຂອງຕົນ ເພື່ອທຽບໃສ່ບັນດາມາດຖານຄຸນສົມບັດສັງຄົມ
  + ສ້າງແຜນເຝິກຝົນຫຼໍ່ຫຼອມຕົນເອງ
  + ກຳນົດວິທີປະຕິບັດ
  + ກຳນົດຂໍ້ສະດວກ, ຂໍ້ຫຍຸ້ງຍາກທີ່ຈະເກີດຂຶ້ນ ເພື່ອປັບປຸງແກ້ໄຂໃຫ້ທັນເວລາ
  + ກຳນົດຜູ້ຕິດຕາມ, ໃກ້ຊິດ, ໃຫ້ຄວາມຊ່ວຍເຫຼືອ
  + ມີຄວາມຕັດສິນໃຈໃນການປະຕິບັດ ແລະ ມີການສະຫຼຸບຖອດຖອນບົດຮຽນ
  + ຈິງໃຈຮັບເອົາການຕຳນິຕິຊົມຈາກຄົນອື່ນ
  + ເປັນເຈົ້າການ, ມີຄວາມຕື່ນຕົວ ແລະ ຕັ້ງໃຈເຮັດໃຫ້ສຳເລັດ
- ຄູແນະນຳໃຫ້ນັກຮຽນອ່ານເລື່ອງສັ້ນຂໍ້ 2 ແລະ ບົດເຝິກຫັດທີ1, 2, 3 (ໃນປຶ້ມແບບຮຽນໜ້າ102)

## 5. ການວັດ ແລະ ປະເມີນຜົນ

1. ສັງເກດຈາກການຕອບຄຳຖາມ, ເຮັດວຽກເປັນກຸ່ມ
2. ແນະນຳຄຳຖາມ ແລະ ຕອບຄຳຖາມ ແລະ ແກ້ບົດເຝິກຫັດ.

   ບົດເຝິກຫັດທີ່1 (ໃນປຶ້ມແບບຮຽນ)

   + ເຫັນດີ ຂໍ້ ຂ, ຄ
   + ບໍ່ເຫັນດີຂໍ້ ກ, ງ

**ເຫດຜົນ:**

▪ໃຜກໍຕ້ອງການພັດທະນາຕົນເອງໃຫ້ສົມບູນ, ບໍ່ແມ່ນຜູ້ "ມີບັນຫາ" ກ່ຽວກັບຄຸນສົມບັດຈຶ່ງມີການພັດທະນາ ຕົວຢ່າງຂໍ້ ກ

▪ເພື່ອພັດທະນາຕົນເອງໃຫ້ສົມບູນສິ່ງສໍາຄັນທີ່ສຸດຕ້ອງຫ້າວຫັນ, ມີຄວາມຕັດສິນໃຈຂອງຕົນເອງ, ການສະໜັບສະໜູນຊ່ວຍເຫຼືອຂອງຄົນອ້ອມຂ້າງກໍເປັນປັດໄຈຈໍາເປັນຄືກັນແຕ່ບໍ່ເປັນ ບັນຫາສໍາຄັນປານໃດ, ຕົວຢ່າງ: ຂໍ້ (ງ)

**3 ແນະນໍາການກວດກາ ແລະ ປະເມີນຜົນ**

ເພື່ອກວດກາຕີລາຄາຜົນສໍາເລັດ ການຮຽນຂອງນັກຮຽນໃນບົດນີ້, ຄູອາດຈະນໍາໃຊ້ຫຼາຍວິທີແຕກຕ່າງກັນ.

ຕົວຢ່າງອາດຈະຕີລາຄາຜ່ານການເຮັດບົດເຝິກຫັດ, ແຜນການເຝິກຝົນຫຼໍ່ຫຼອມຕົນເອງຂອງນັກຮຽນ ຫຼື ອາດຈະນໍາໃຊ້ບົດເຝິກຫັດ ທີ 1 ໃນປຶ້ມແບບຮຽນ…

**ເອກະສານເພີ່ມເຕີມສໍາລັບຄູ**

- ຢາກກິນເຂົ້າ ຕ້ອງເຮັດນາ
  ຢາກກິນປາ ຕ້ອງແບກແຫລົງນໍ້າ
- ຫຼັງສູ້ຟ້າ ໜ້າສູ້ດິນ
- ຕື່ນເດິກຄືກາ ຫາກິນຄືໄກ່

# ບົດທີ 13 ການສ້າງຄອບຄົວ

**ເວລາ 3 ຊົ່ວໂມງ**

## 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍຂອງຄວາມຮັກ
- ອະທິບາຍຄວາມຮັກທີ່ບໍລິສຸດ
- ອະທິບາຍຄວາມໝາຍ ແລະ ເງື່ອນໄຂແຕ່ງດອງ
- ອະທິບາຍຄວາມໝາຍຄອບຄົວ ແລະ ບົດບາດຂອງຄອບຄົວ
- ກຳໄດ້ເນື້ອໃນພື້ນຖານກ່ຽວກັບການພົວພັນ ແລະ ຄວາມຮັບຜິດຊອບຂອງສະມາຊິກໃນຄອບຄົວ
- ເຝິກຝົນຫຼໍ່ຫຼອມຕົນເອງໃຫ້ຮູ້ຮັກພໍ່ແມ່, ຄອບຄົວດ້ວຍຄວາມຈິງໃຈ.

## 2. ເນື້ອໃນ

- ຄວາມສຳນຶກກ່ຽວກັບຄວາມຮັກ
  + ຄວາມຮັກແມ່ນຫຍັງ
  + ຄວາມຮັກບໍລິສຸດສະແດງອອກແນວໃດ
  + ບາງບັນຫາຄວນຫຼີກເວັ້ນຂອງຊາວໜຸ່ມລາວ
  + ການແຕ່ງດອງແມ່ນຫຍັງ
  + ເງື່ອນໄຂການແຕ່ງດອງ
- ຄອບຄົວ ແລະ ພາລະບົດບາດຂອງຄອບຄົວ
  + ຄອບຄົວແມ່ນຫຍັງ
  + ພາລະບົດບາດຂອງຄອບຄົວ
  + ການພົວພັນ ແລະ ຄວາມຮັບຜິດຊອບຂອງສະມາຊິກໃນຄອບຄົວ

## 3. ສື່ການຮຽນ-ການສອນ

- ປື້ມແບບຮຽນ ແລະ ຄູ່ມືຄູວິຊາສຶກສາພົນລະເມືອງຂັ້ນມ.5
- ຮູບພາບຄອບຄົວທີ່ອົບອຸ່ນ
- ຮູບພາບນັກຮຽນຊ່ວຍເຫຼືອກັນອອກແຮງງານ

- ຮູບພາບການແຕ່ງດອງ

## 4. ກິດຈະກຳການຮຽນ-ການສອນ

**ຊົ່ວໂມງທີ 1**

- ທົບທວນບົດຮຽນບົດທີ 12
- ສະເໜີຮູບການແຕ່ງດອງ
- ຄູຕັ້ງຄຳຖາມ
  + ນີ້ແມ່ນຮູບຫຍັງ?
- ຄູໃຫ້ນັກຮຽນສັງເກດຮູບພາບ ແລະ ຕອບຄຳຖາມ ຈາກນັ້ນຄູລ້ຽວເຂົ້າບົດຮຽນໃໝ່.

1. **ສົນທະນາລວມກ່ຽວກັບຄວາມຮັກ**

- ຄູຕັ້ງຄຳຖາມ
  + ຄວາມຮັກແມ່ນຫຍັງ?
  + ຄວາມຮັກທີ່ຖືກຕ້ອງສະແດງອອກຄືແນວໃດ?
  + ຄວາມຮັກທີ່ບໍລິສຸດສະແດງອອກຄືແນວໃດ?
- ຄູແນະນຳໃຫ້ນັກຮຽນຄົ້ນຄວ້າ ແລະ ສົນທະນາກັບໝູ່ນັ່ງຂ້າງ
- ຄູເອີ້ນນັກຮຽນລຸກຕອບ 3-5 ຄົນ
- ຄູອະທິບາຍຄືນຄຳຕອບຂອງນັກຮຽນ ຈາກນັ້ນຄູສະຫຼຸບ

**ຄູສະຫຼຸບ**:

- ຄວາມຮັກແມ່ນຄວາມຮູ້ສຶກພິເສດລະຫວ່າງຍິງ-ຊາຍ ທີ່ມີຄວາມເຂົ້າໃຈຢ່າງເລິກເຊິ່ງ, ມີຄວາມໃກ້ຊິດຕິດແທດ ແລະ ດຳລົງຊີວິດຢູ່ຮ່ວມກັນໄດ້ຕະຫຼອດຊີວິດ.

**ຄວາມຮັກທີ່ບໍລິສຸດສະແດງອອກດັ່ງນີ້**:

- ມີຄວາມຈິງໃຈ, ຜູກພັນ, ໃກ້ຊິດຕິດແທດ, ມີຄວາມຊື່ສັດ, ເຊື່ອໝັ້ນ ແລະ ເຄົາລົບເຊິ່ງກັນ ແລະ ກັນ, ຮູ້ໃຫ້ອະໄພ.

**ຊົ່ວໂມງທີ 2**

**2 ສົນທະນາລວມກ່ຽວກັບບັນຫາຄວນຫຼີກເວັ້ນຂອງຊາວໜຸ່ມ-ຍິງສາວ**

- ຄູຕັ້ງຄຳຖາມ
  + ເມື່ອຄິດຈະມີຄວາມຮັກເຮົາຄວນຄຳນຶງເຖິງບັນຫາໃດແດ່?

+ ໃນໄວຮຽນຄວນມີຄວາມຮັກແບບໃດຈຶ່ງຖືກຕ້ອງ ແລະ ຄວນຫຼີກເວັ້ນບັນຫາໃດ?

- ຄູແນະນຳໃຫ້ນັກຮຽນຄົ້ນຄວ້າ ແລະ ສົນທະນາກັບໝູ່ນັ່ງຂ້າງ
- ຄູເອີ້ນນັກຮຽນຈຳນວນໜຶ່ງລຸກຂຶ້ນຕອບ, ນັກຮຽນຜູ້ອື່ນຕິດຕາມ ແລະ ປະກອບຄວາມເຫັນ ເພີ່ມເຕີມ
- ຄູອະທິບາຍຄືນຄຳຕອບຂອງນັກຮຽນ ເພື່ອໃຫ້ເອກະພາບ ແລະ ຈະແຈ້ງຕື່ມ

**ຄູສະຫຼຸບ**:

- ເມື່ອຄິດທີ່ຈະມີຄວາມຮັກເຮົາຄວນຄຳນຶງເຖິງອາຍຸກະສຽນຕ້ອງຮອດ 18 ປີ, ສຸຂະພາບຕ້ອງແຂງແຮງ, ມີຄວາມຮັບຜິດຊອບ, ຕ້ອງມີວຽກເຮັດງານທຳທີ່ໝັ້ນຄົງ ແລະ ຄວາມພ້ອມຕ່າງໆ.
- ຖ້າມີຄວາມຮັກກ່ອນໄວຮຽນຄວນຮັກແບບໝູ່ເພື່ອນ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນຮ່ຳຮຽນ ແລະ ເຝິກຝົນຫຼໍ່ຫຼອມຕົນເອງໃຫ້ມີຄວາມກ້າວໜ້າ.
- ຄວນຫຼີກເວັ້ນຄວາມຮັກແບບຊູ້ສາວ, ຮັກຫຼາຍຄົນ ເຊິ່ງເປັນຜົນສະທ້ອນຕໍ່ການຮ່ຳຮຽນ ແລະ ຄວາມກ້າວໜ້າຂອງຕົນ

**3 ສົນທະນາກ່ຽວກັບການແຕ່ງດອງ**

- ຄູຕັ້ງຄຳຖາມ

  + ການແຕ່ງດອງແມ່ນຫຍັງ?

  + ລັດປົກປ້ອງສິດເສລີພາບໃນການແຕ່ງດອງຄືແນວໃດ?

  + ເງື່ອນໄຂການແຕ່ງດອງມີຄືແນວໃດ?
- ຄູໃຫ້ນັກຮຽນອ່ານຂໍ້ 2 ບົດທີ 13 ໃນປຶ້ມແບບຮຽນແລ້ວຕອບຄຳຖາມ
- ຄູຈົດຄຳຕອບຂອງນັກຮຽນໃສ່ກະດານ

**ຄູສະຫຼຸບ**:

- ການແຕ່ງດອງ ແມ່ນງານທີ່ຈັດຂຶ້ນໂດຍໄດ້ຮັບການຢັ້ງຢືນຈາກການຈັດຕັ້ງ, ພໍ່ແມ່ພີ່ນ້ອງທັງສອງຝ່າຍ ແລະ ແຕ່ງດອງຖືກຕ້ອງຕາມກົດໝາຍ

◆ **ລັດປົກປ້ອງສິດເສລີພາບໃນການແຕ່ງດອງຍິງ-ຊາຍດັ່ງນີ້:**

- ຍິງຊາຍທີ່ຮອດກະສຽນອາຍຸ 18 ປີ ມີສິດເສລີພາບ ໃນການເລືອກຄູ່ຮັກຕາມຄວາມສະໝັກໃຈຂອງຕົນເອງ ເພື່ອເອົາກັນເປັນຜົວເມຍ ຕາມຮີດຄອງປະເພນີອັນດີງາມຂອງຊາດລາວເຮົາ.
- ລັດບໍ່ອະນຸຍາດໃຫ້ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງໃດໜຶ່ງບັງຄັບ ຫຼື ຂັດຂວາງການແຕ່ງດອງຂອງລູກຫຼານ
- ຍິງ-ຊາຍທີ່ຮອດກະສຽນອາຍຸເອົາກັນເປັນຜົວ-ເມຍ, ຕ້ອງປະຕິບັດຫຼັກການຜົວໜຶ່ງ-ເມຍດຽວເທົ່ານັ້ນ.
- ເປັນຄົນໂສດ, ເປັນຮ້າງ ຫຼື ເປັນໝ້າຍ ໂດຍມີເອກະສານຢັ້ງຢືນທີ່ຖືກຕ້ອງ
- ບໍ່ເປັນບ້າເສຍຈິດ, ບໍ່ເປັນພະຍາດຮ້າຍແຮງ ຫຼື ບໍ່ເປັນພະຍາດຕິດແປດ

◆ **ການບໍ່ອະນຸຍາດໃຫ້ແຕ່ງດອງ:**

- ບຸກຄົນທີ່ເປັນເພດດຽວກັນ, ເປັນບ້າເສຍຈິດ ຫຼື ເປັນພະຍາດຮ້າຍແຮງ ຫຼື ຕິດແປດທີ່ຈະເປັນອັນຕະລາຍຕໍ່ຊີວິດ ຫຼື ສຸຂະພາບຂອງຜົວ-ເມຍ ແລະ ລູກ.
- ບຸກຄົນທີ່ຢູ່ໃນຕະກຸນຊີງຊາດດຽວກັນ ຂອງບາງຊົນເຜົ່າ

◆ **ຍິງຊາຍຈະແຕ່ງດອງຕ້ອງມີເງື່ອນໄຂດັ່ງນີ້:**

- ມີອາຍຸ 18 ປີຂຶ້ນໄປ, ມີຄວາມຮັກມັກ, ຄວາມສະໝັກໃຈຂອງຄູ່ບ່າວສາວ, ບໍ່ເປັນບ້າ, ເສຍຈິດ ຫຼື ເປັນພະຍາດຕິດແປດຮ້າຍແຮງ.

**ຊົ່ວໂມງທີ 3**

**4 ສົນທະນາລວມກ່ຽວກັບຄອບຄົວ ແລະ ພາລະບົດບາດຂອງຄອບຄົວ**

- ຄູຕັ້ງຄຳຖາມ
  + ຄອບຄົວແມ່ນຫຍັງ?
  + ຄອບຄົວມີບົດບາດຄືແນວໃດ?
  + ສະມາຊິກໃນຄອບຄົວມີຄວາມຮັບຜິດຊອບຕໍ່ກັນຄືແນວໃດ?
- ຄູໃຫ້ນັກຮຽນຄົ້ນຄວ້າ ແລະ ສົນທະນາກັບໝູ່ນັ່ງຂ້າງ ຫຼື ອ່ວາຍໜ້າຫາໂຕະທາງຫຼັງເຮັດກຸ່ມນ້ອຍປະມານ 4-5 ຄົນ ເພື່ອສົນທະນາຄົ້ນຄວ້າ
- ຄູໃຫ້ຕາງໜ້ານັກຮຽນຂຶ້ນຕອບຄຳຖາມ

- ຄູຈົດຄຳຕອບຂອງນັກຮຽນໃສ່ກະດານ
- ຄູສະຫຼຸບຄຳຕອບຂອງນັກຮຽນ ເພື່ອຄວາມເປັນເອກະພາບ

**ຄູສະຫຼຸບ**:

- ຄອບຄົວແມ່ນສະຖາບັນສັງຄົມທີ່ສຳຄັນທີ່ສຸດ, ເປັນຫົວໜ່ວຍຕົ້ນຕໍຂອງສັງຄົມ ເຊິ່ງມີບັນດາ ບຸກຄົນທີ່ດຳລົງຊີວິດຢູ່ຮ່ວມກັນຢ່າງໃກ້ຊິດສະໜິດແໜ້ນ, ມີຄວາມຜູກພັນເຊິ່ງກັນ ແລະ ກັນດ້ວຍການແຕ່ງດອງ ແລະ ການພົວພັນທາງສາຍເລືອດ. ຄອບຄົວແມ່ນຈຸລັງໜຶ່ງຂອງສັງຄົມເຊິ່ງປະກອບມີຜົວ-ເມຍ, ລູກ ຫຼື ສະມາຊິກອື່ນໆດຳລົງຊີວິດຮ່ວມກັນໂດຍມີສຳມະໂນຄົວຍັ້ງຢືນຢ່າງຖືກຕ້ອງ.

  • **ຄອບຄົວມີບົດບາດດັ່ງນີ້**:

- ຄອບຄົວເປັນບ່ອນຂະຫຍາຍສະມາຊິກ, ເປັນບ່ອນລ້ຽງດູ, ສຶກສາອົບຮົມໃຫ້ລູກເຕີບໂຕເປັນຄົນດີມີປະໂຫຍດ ແລະ ບໍ່ສ້າງຄວາມເດືອດຮ້ອນໃຫ້ແກ່ສັງຄົມທັງປະກອບສ່ວນເຮັດໃຫ້ສັງຄົມຄົງຕົວ ແລະ ຂະຫຍາຍຕົວ.

  ◆ **ຄວາມຮັບຜິດຊອບຂອງສະມາຊິກໃນຄອບຄົວ**:

- ພໍ່ແມ່ມີຄວາມຮັບຜິດຊອບຕໍ່ລູກ, ໃຫ້ການລ້ຽງດູ, ສຶກສາອົບຮົມໃນທາງທີ່ດີ, ແນະນຳສັ່ງສອນໃຫ້ຮູ້ລະບຽບວິໄນ ແລະ ສຶກສາອົບຮົມໃຫ້ລູກກາຍເປັນຄົນທີ່ມີຄວາມກະຕັນຍູຕໍ່ພໍ່ແມ່, ເປັນພົນລະເມືອງດີຂອງສັງຄົມ.
- ລູກມີຄວາມຮັກພໍ່ແມ່, ເຄົາລົບ ແລະ ຮູ້ບຸນຄຸນ, ຟັງຄຳສັ່ງສອນ, ຮັກສາກຽດສັກສີ ແລະ ມູນເຊື້ອອັນດີງາມຂອງວົງຕະກູນ. ເມື່ອເວລາທີ່ພໍ່ແມ່ເຖົ້າແກ່ລູກກໍຕ້ອງມີພັນທະລ້ຽງດູ, ເບິ່ງແຍງດ້ວຍຄວາມເອົາໃຈໃສ່ ແລະ ບໍ່ຄວນປະພຶດສິ່ງບໍ່ດີຕໍ່ພໍ່ແມ່.
- ພໍ່ເຖົ້າ, ແມ່ເຖົ້າ, ປູ່ຍ່າ ແລະ ເຄືອຍາດ ມີຄວາມຮັບຜິດຊອບຮັກແພງ, ເອົາໃຈໃສ່ລ້ຽງດູ, ສຶກສາອົບຮົມລູກຫຼານ ແລະ ເປັນແບບຢ່າງທີ່ດີໃຫ້ລູກຫຼານ, ລູກຫຼານກໍຕ້ອງມີພັນທະຮັກແພງ, ເຄົາລົບນັບຖື, ຮູ້ບຸນຄຸນ ແລະ ມີຄວາມຮັບຜິດຊອບເບິ່ງແຍງລ້ຽງດູພວກເພິ່ນຄືກັນ.
- ຄູອາດຈະເອົາຄຳຖາມຢູ່ໃນບົດຮຽນໃຫ້ນັກຮຽນຕອບ
- ຖ້ານັກຮຽນບໍ່ເຂົ້າໃຈຫົວຂໍ້ໃດຄູຕ້ອງອະທິບາຍໃຫ້ແຈ້ງຕື່ມ
- ຄູໃຫ້ນັກຮຽນສະຫຼຸບຄືນແຕ່ລະຫົວຂໍ້ທີ່ໄດ້ຮຽນມາ

- ຄູສະຫຼຸບເປັນແຕ່ລະຫົວຂໍ້ໂດຍສັງເຂບ
  + ຄວາມຮັກ
  + ການແຕ່ງດອງ
  + ຄອບຄົວ
- ຄູແນະນໍາໃຫ້ນັກຮຽນອ່ານປຶ້ມແບບຮຽນ ຫຼື ເອກະສານທີ່ພົວພັນເຖິງບົດຮຽນ
- ຄູສຶກສາອົບຮົມນັກຮຽນມີຄວາມຮັກບໍລິສຸດ, ຖືກຕ້ອງ ປະຕິບັດຕົນເປັນຄົນດີຮູ້ຮັກຄອບຄົວພໍ່ແມ່, ເຖົ້າແກ່ອາວຸໂສ, ມີຄວາມອົບອຸ່ນ ແລະ ມີຊີວິດສົມບູນ

## 5. ການວັດ ແລະ ປະເມີນຜົນ

- ຄູແນະນໍາໃຫ້ນັກຮຽນເຮັດບົດເຝິກຫັດໃນປຶ້ມແບບຮຽນ ຂໍ້ທີ 2, 3, 4, 5, 6 ແລະ 7
- ຄູແນະນໍາໃຫ້ນັກຮຽນເຮັດບົດເຝິກຫັດຂໍ້ທີ 1 ແລະ 9 ເປັນບົດວຽກບ້ານມາສົ່ງໃນຊົ່ວໂມງໜ້າ
- ສັງເກດນັກຮຽນຈາກ:
  + ການຕອບຄໍາຖາມ
  + ການເຮັດວຽກເປັນກຸ່ມ
  + ການສົນທະນາລວມ ຫຼື ກຸ່ມ
  + ການຕັ້ງໃຈຟັງ ແລະ ປະກອບຄໍາເຫັນ
  + ການສົ່ງວຽກບ້ານ

# ບົດທີ14 ຊຸມຊົນ

**ເວລາ 2 ຊົ່ວໂມງ**

## 1. ຈຸດປະສົງ

ເພື່ອໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍກ່ຽວກັບຊຸມຊົນ
- ອະທິບາຍບົດບາດຂອງຊຸມຊົນຕໍ່ການດໍາລົງຊີວິດ
- ອະທິບາຍຄວາມຮັບຜິດຊອບຕໍ່ຊຸມຊົນໃນການເປັນສະມາຊິກຄົນໜຶ່ງຂອງຊຸມຊົນ
- ອະທິບາຍຄວາມເມດຕາ
- ຄວາມເປັນໜຶ່ງດຽວ, ການຮ່ວມມື ແລະ ຫຼັກການຢູ່ຮ່ວມກັນ
- ເຝິກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນຄົນທີ່ມີຄວາມຮັກແພງ, ສາມັກຄີເຊິ່ງກັນ ແລະ ກັນ ໃນຊຸມຊົນ

## 2. ເນື້ອໃນ

- ຊຸມຊົນ ແລະ ບົດບາດຂອງຊຸມຊົນຕໍ່ການດໍາລົງຊີວິດ
  + ຊຸມຊົນແມ່ນຫຍັງ
  + ບົດບາດຂອງຊຸມຊົນ
- ຄວາມຮັບຜິດຊອບຂອງພົນລະເມືອງຕໍ່ຊຸມຊົນ
  + ຄວາມເມດຕາແມ່ນຫຍັງ
  + ຄວາມເປັນໜຶ່ງດຽວ
  + ການຢູ່ຮ່ວມກັນ

## 3. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ຄູ່ມືຄູວິຊາສຶກສາພົນລະເມືອງຂັ້ນ ມ.5
- ຮູບພາບຂອງຊຸມຊົນ, ກຸ່ມຄົນ ຫຼື ກຸ່ມບ້ານ
- ຮູບພາບການຮ່ວມມືກັນໃນການເຮັດວຽກງານໃດໜຶ່ງຂອງກຸ່ມຄົນໃນຊຸມຊົນ
- ຮູບພາບການໃຫ້ຄວາມຊ່ວຍເຫຼືອຂອງຜູ້ຖືກຜົນກະທົບຈາກໄພພິບັດເຊັ່ນ: ນໍ້າຖ້ວມ, ໄຟໄໝ້...
- ເຈ້ຍແຜ່ນໃຫຍ່, ບິກ, ເຝີດຊຽນ, ກາວ, ສະກ໋ອດ ແລະ ອື່ນໆ ທີ່ກ່ຽວຂ້ອງ

## 4. ກິດຈະກຳການຮຽນ-ການສອນ

**ຊົ່ວໂມງທີ 1**

- ທວນຄືນບົດເກົ່າ
- ຄູຕັ້ງຄຳຖາມ
  + ຄອບຄົວແມ່ນຫຍັງ?
- ຄູໃຫ້ນັກຮຽນແຕ່ລະຄົນຄົ້ນຄວ້າ
- ຄູໃຫ້ອາສາສະໝັກລຸກຕອບ
- ຄູອະທິບາຍຕື່ມກ່ຽວກັບຄຳຕອບທີ່ນັກຮຽນຕອບ
- ຄູສະຫຼຸບຄືນເນື້ອໃນຄຳຕອບໂດຍຫຍໍ້
  + ຄອບຄົວແມ່ນສະຖາບັນສັງຄົມທີ່ສຳຄັນທີ່ສຸດ ແລະ ເປັນຫົວໜ່ວຍຕົ້ນຕໍຂອງສັງຄົມ ເຊິ່ງມີບັນດາບຸກຄົນທີ່ດຳລົງຊີວິດຢູ່ຮ່ວມກັນຢ່າງໃກ້ຊິດສະໜິດແໜ້ນ. ຄອບຄົວແມ່ນຈຸລັງໜຶ່ງຂອງສັງຄົມ ເຊິ່ງປະກອບມີ ຜົວ-ເມຍ, ລູກ ຫຼື ສະມາຊິກອື່ນໆ.

**1 ສົນທະນາລວມກ່ຽວກັບຊຸມຊົນ**

- ຄູຕັ້ງຄຳຖາມ
  + ຊຸມຊົນແມ່ນຫຍັງ?
  + ບົດບາດຂອງຊຸມຊົນຕໍ່ການດຳລົງຊີວິດແມ່ນແນວໃດ?
- ຄູແນະນຳໃຫ້ນັກຮຽນຄົ້ນຄວ້າ ແລະ ສົນທະນາກັບໝູ່ນັ່ງຂ້າງ
- ຄູໃຫ້ນັກຮຽນອາສາສະໝັກລຸກຕອບ 3-5 ຄົນ
- ຄູອະທິບາຍຄືນຄຳຕອບຂອງນັກຮຽນ, ຈາກນັ້ນ, ຄູສະຫຼຸບຄືນຄຳຕອບຂອງແຕ່ລະຄົນເພື່ອໃຫ້ເປັນເອກະພາບກັນ

**ຄູສະຫຼຸບ**:

+ ຊຸມຊົນແມ່ນກຸ່ມຄົນ ຫຼື ຫຼາຍຄອບຄົວມາຢູ່ຮ່ວມກັນ ໃນບໍລິເວນດຽວກັນ, ມີລັກສະນະເປັນເພື່ອນບ້ານ, ຍາດຕິພີ່ນ້ອງ ຫຼື ບໍ່ແມ່ນກໍໄດ້. ຊຸມຊົນແມ່ນກຸ່ມຄົນທີ່ຢູ່ຮ່ວມກັນໃນອານາເຂດໃດໜຶ່ງ, ມີຄວາມຮູ້ສຶກຄ້າຍຄືກັນ, ມີຄວາມຜູກພັນ ເຊິ່ງກັນ ແລະ ກັນ, ປະພຶດຕໍ່ກັນ ແລະ ຂຶ້ນຕໍ່ກັນ.

ຊຸມຊົນມີບົດບາດສຳຄັນຕໍ່ການດຳລົງຊີວິດຂອງມວນມະນຸດ ເພື່ອສ້າງຄວາມເຊື່ອໝັ້ນ, ຄ່ານິຍົມ, ອຸດົມການ, ບັນທັດຖານ, ຄຸນນະທຳ.

+ ບົດບາດໃນການດຳລົງຊີວິດຢູ່ໄດ້ໃນຊຸມຊົນ

+ ມີຄວາມໃກ້ຊິດຕິດແທດ, ຜູກພັນກັນ.

+ ເພິ່ງພາອາໄສກັນ, ຊ່ວຍເຫຼືອ, ເບິ່ງແຍງທາງ ດ້ານວັດຖຸ ແລະ ຈິດໃຈ

+ ເຄື່ອນໄຫວໄປຕາມຫຼັກການຄວາມສະເໝີພາບ, ປະຊາທິປະໄຕ ແລະ ຕາມລະບຽບກົດໝາຍ

**2 ສົນທະນາກ່ຽວກັບຄວາມຮັບຜິດຊອບຂອງພົນລະເມືອງຕໍ່ຊຸມຊົນ**

- ຄູຕັ້ງຄຳຖາມ

  + ຄວາມເມດຕາແມ່ນຫຍັງ?

  + ຄວາມເມດຕາຊ່ວຍໃຫ້ການດຳລົງຊີວິດຂອງຄົນເປັນຄືແນວໃດ?

  + ເພື່ອເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດຕ້ອງສະແດງອອກຄືແນວໃດ?

  + ເພື່ອເສີມຂະຫຍາຍມູນເຊື້ອຄວາມເມດຕາຂອງຄົນລາວ ນັກຮຽນຄວນປະພຶດຕົນແນວ ໃດ?

- ຄູຈັດກຸ່ມໃຫ້ນັກຮຽນຄົ້ນຄວ້າຕາມຄຳຖາມ
- ຄູຢາຍເຈ້ຍແຜ່ນໃຫຍ່ໃຫ້ນັກຮຽນຂຽນຄຳຕອບໃສ່ ເພື່ອຂຶ້ນລາຍງານ
- ກຸ່ມອື່ນຟັງ ແລະ ປະກອບຄວາມເຫັນເພີ່ມເຕີມ

**ຄູສະຫຼຸບ**:

- ຄວາມເມດຕາແມ່ນຄວາມເຫັນອົກເຫັນໃຈເຊິ່ງກັນ ແລະ ກັນ, ເບິ່ງແຍງໃນເວລາຫຍຸ້ງຍາກ, ສັບສົນ, ແບ່ງເບົາຄວາມທຸກສຸກ, ປົກປ້ອງຜົນປະໂຫຍດຢູ່ຮ່ວມກັນໂດຍສັນຕິ ແລະ ບໍ່ສ້າງຄວາມເດືອດຮ້ອນໃຫ້ແກ່ກັນ.
- ປະຊາຊົນລາວມີມູນເຊື້ອຊ່ວຍເຫຼືອຮັກແພງ ເຊິ່ງກັນ ແລະ ກັນ ເຊິ່ງໄດ້ກາຍເປັນມູນເຊື້ອອັນດີງາມຂອງຊາດ ທີ່ພວກເຮົາຍັງສືບທອດກັນມາຈົນເຖິງປະຈຸບັນນີ້ ໂດຍສະແດງໃຫ້ເຫັນນ້ຳໃຈຮັກຊາດ, ຮັກເຊື້ອເຜົ່າພົງພັນ, ດຳລົງຊີວິດຢູ່ແຫ່ງຫົນໃດຄົນລາວກໍຍັງເປັນຄົນລາວ, ຍັງມີນ້ຳໃຈຮັກແພງສາມັກຄີກັນສະເໝີ.

**ເພື່ອເສີມຂະຫຍາຍມູນເຊື້ອຄວາມເມດຕາ, ນັກຮຽນລາວທຸກຄົນຕ້ອງປະຕິບັດຕົນດັ່ງນີ້:**

- ເຄົາລົບນັບຖື, ຮູ້ບຸນຄຸນ, ມີຄວາມກະຕັນຍູຕໍ່ພໍ່ແມ່, ຮູ້ເອົາໃຈໃສ່ເບິ່ງແຍງພວກເພິ່ນເວລາເຈັບເປັນ ຫຼື ເຖົ້າແກ່ຊະລາ
- ຮູ້ໃຫ້ອະໄພຊ່ວຍເຫຼືອເພິ່ນເວລາພົບຄວາມຫຍຸ້ງຍາກ
- ເຄົາລົບນັບຖື ແລະ ຮູ້ບຸນຄຸນຕໍ່ນັກຮົບວິລະຊົນຂອງຊາດ ແລະ ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ.

**ຊົ່ວໂມງທີ 2**

**3 ສົນທະນາກ່ຽວກັບຄວາມເປັນໜຶ່ງດຽວ**

- ຄູຕັ້ງຄຳຖາມ
  + ຄວາມເປັນໜຶ່ງດຽວສະແດງອອກຄືແນວໃດ?
  + ຄວາມເປັນເອກະພາບ ແລະ ຄວາມສາມັກຄີຕໍ່ພາຍໃນ ແລະ ພາຍນອກສະແດງອອກຄືແນວໃດ?
  + ຢາກເປັນຄວາມໜຶ່ງດຽວນັກຮຽນຕ້ອງປະພຶດຕົນຄືແນວໃດ?
- ຄູໃຫ້ນັກຮຽນຄົ້ນຄວ້າເປັນກຸ່ມ ຫຼື ຄົ້ນຄວ້າກັບໝູ່ນັ່ງຂ້າງ
- ຄູໃຫ້ນັກຮຽນຂຶ້ນສະເໜີຕາມຄວາມເຂົ້າໃຈຂອງຕົນເອງ
- ຄູຈົດບາງຄຳຕອບທີ່ສຳຄັນຂອງນັກຮຽນໃສ່ກະດານ
- ຄູອະທິບາຍເພີ່ມເຕີມບາງຈຸດທີ່ຍັງບໍ່ທັນຄົບຖ້ວນ

**ຄູສະຫຼຸບ:**

- ການດຳລົງຊີວິດເປັນໜຶ່ງດຽວ ແມ່ນການຢູ່ຮ່ວມກັນຢ່າງໃກ້ຊິດ, ບໍ່ຫ່າງເຫີນຈາກຄົນອ້ອມຂ້າງ, ບໍ່ສ້າງຄວາມຂັດແຍ່ງ, ມີຄວາມປອງດອງ, ເອື້ອເຟື້ອເພື່ອແຜ່ ແລະ ມີສະຕິຕື່ນຕົວປະກອບສ່ວນເຄື່ອນໄຫວວຽກງານລວມຂອງຊຸມຊົນກໍຄືຂອງຊາດ.
- **ພາຍໃນ**: ການດຳລົງຊີວິດຢູ່ຮ່ວມກັນພາຍໃນຊາດ, ມີຄວາມຖືກຕ້ອງປອງດອງກັນລະຫວ່າງປະຊາຊົນບັນດາເຜົ່າ, ເອກະພາບເປັນຈິດໜຶ່ງໃຈດຽວກັນພ້ອມກັນຕໍ່ສູ້, ປົກປັກຮັກສາ ແລະ ພັດທະນາປະເທດຊາດໃຫ້ຈະເລີນສີວິໄລ.
- **ພາຍນອກ**: ແມ່ນການພົວພັນກັບສາກົນ. ສັງຄົມມະນຸດປະກອບມີຫຼາຍເຊື້ອຊາດ, ຫຼາຍເຜົ່າພັນລະດັບການຂະຫຍາຍຕົວຂອງແຕ່ລະຊາດກໍຕ່າງກັນ. ສະນັ້ນ ເພື່ອການຄົງຕົວ

ແລະ ຂະຫຍາຍຕົວຂອງແຕ່ລະຊາດຕ້ອງມີຄວາມປອງດອງກັນໄວ້ ແລະ ເພິ່ງພາອາໄສເຊິ່ງກັນ ແລະ ກັນ.

**ຊາວໜຸ່ມນັກຮຽນພວກ ເຮົາຢາກເປັນໜຶ່ງດຽວກັນໃນຫ້ອງ, ໂຮງຮຽນ, ຊຸມຊົນຈະຕ້ອງປະພຶດຕໍ່ກັນດັ່ງນີ້:**

- ເຄົາລົບນັບຖື, ສາມັກຄີ , ເອົາໃຈໃສ່, ໃກ້ຊິດຕິດແທດ, ມ່ວນຊື່ນ, ເບີກບານ, ຍິ້ມແຍ້ມແຈ່ມໃສຕໍ່ຄູອາຈານ, ໝູ່ເພື່ອນທີ່ຢູ່ອ້ອມຂ້າງ, ບໍ່ຕີຕົວອອກຈາກໝູ່, ບໍ່ແບ່ງພັກແບ່ງພວກ, ບໍ່ສ້າງຂໍ້ຂັດແຍ່ງໃຫ້ເສຍຄວາມສາມັກຄີກັບຄົນອື່ນ.
- ຕັ້ງໜ້າປະກອບສ່ວນການເຄື່ອນໄຫວວຽກງານລວມໝູ່ ແລະ ສັງຄົມທີ່ໂຮງຮຽນ, ທ້ອງຖິ່ນຈັດຂຶ້ນພ້ອມກັນນັ້ນກໍປຸກລະດົມໝູ່ເພື່ອນ ແລະ ທຸກຄົນທີ່ຢູ່ອ້ອມຂ້າງພ້ອມກັນປະກອບສ່ວນຢ່າງເປັນຂະບວນຟ້າວຟັນ.

**4. ສົນທະນາກ່ຽວກັບການຮ່ວມມືກັນ**

- ຄູໃຫ້ນັກຮຽນວິເຄາະຄວາມໝາຍຂອງຄຳສຸພາສິດທີ່ວ່າ:
  - ▪ໄມ້ລຳດຽວ ລ້ອມຮົ້ວບໍ່ໄຂວ່
  - ▪ໄຜ່ບໍ່ພ້ອມ ແປງບ້ານບໍ່ເຮືອງ
- ຄູຕັ້ງຄຳຖາມ
  - + ການຮ່ວມມືແມ່ນຫຍັງ?
  - + ຫຼັກການຮ່ວມມືມີຫຍັງແດ່?
  - + ຢາກເຮັດວຽກໜຶ່ງໃຫ້ສຳເລັດນັກຮຽນຕ້ອງເຮັດຫຍັງແດ່?
- ຄູໃຫ້ນັກຮຽນຄົ້ນຄວ້າ ແລະ ຂຽນໃສ່ເຈ້ຍຕາມຄວາມເຂົ້າໃຈ

**ຄູສະຫຼຸບ**:

- ການຢູ່ຮ່ວມກັນແມ່ນຮ່ວມແຮງຮ່ວມໃຈກັນໃນໜ້າທີ່ວຽກງານ, ການຊ່ວຍເຫຼືອ, ອູ້ມຊູຍູ້ໜູນເຊິ່ງກັນ ແລະ ກັນໃນທຸກດ້ານບໍ່ວ່າຢູ່ຂົງເຂດໃດໆ ເຮົາກໍຕ້ອງມີຈຸດປະສົງອັນດຽວກັນ.
- ການຮ່ວມມືຕ້ອງອີງໃສ່ຫຼັກການຕື່ນຕົວ, ຕ່າງຝ່າຍຕ່າງມີຜົນປະໂຫຍດ, ການຮ່ວມມືມີຫຼາຍລະດັບ ແລະ ຂັ້ນຕ່າງກັນເຊັ່ນ:
- ການຮ່ວມມືລະຫວ່າງສອງຝ່າຍ ຫຼື ຫຼາຍຝ່າຍ

- ການຮ່ວມມື ແຕ່ລະໂຂງເຂດ ຫຼື ການຮ່ວມມືຮອບດ້ານ
- ການຮ່ວມມືລະຫວ່າງບຸກຄົນກັບບຸກຄົນ, ລະຫວ່າງຈຸ, ໜ່ວຍ, ຊຸມຊົນ... ການຮ່ວມມືກັບສາກົນ

- ພວກເຮົາເປັນນັກຮຽນຕ້ອງເຝິກຝົນຫຼໍ່ຫຼອມຕົນເອງໃຫ້ມີນ້ຳໃຈຕໍ່ໝູ່ ແລະ ເຮັດວຽກງານຮ່ວມໝູ່ໃນການຮ່ຳຮຽນ, ອອກແຮງງານ, ປະກອບສ່ວນເຄື່ອນໄຫວວຽກງານສັງຄົມໂດຍມີລາຍລະອຽດດັ່ງນີ້:
  + ຮ່ວມກັນສົນທະນາ ຄົ້ນຄວ້າບົດຮຽນ, ວາງແຜນການເຄື່ອນໄຫວ ແລະ ແບ່ງປັນໜ້າທີ່ໃຫ້ກັນ ແລະ ກັນ ໂດຍສອດຄ່ອງກັບຄວາມສາມາດຂອງແຕ່ລະຄົນ.
  + ມີຄວາມຮັບຜິດຊອບຕໍ່ວຽກງານທີ່ຖືກມອບໝາຍໃຫ້ສຳເລັດ
  + ຮູ້ສົມທົບກັນໃນດ້ານວຽກງານ, ແລກປ່ຽນປະສົບການຮ່ວມກັນ
  + ສະມາຊິກໃນກຸ່ມຮ່ວມກັນຕີລາຄາ, ຖອດຖອນບົດຮຽນ ສິ່ງທີ່ປະຕິບັດໄດ້ໃນໄລຍະຜ່ານມາ.

- ຄູອາດຈະຕັ້ງຄຳຖາມກ່ຽວກັບບົດຮຽນໃຫ້ນັກຮຽນຕອບ
- ຄູອາດຈະອະທິບາຍບາງຂໍ້ທີ່ນັກຮຽນບໍ່ເຂົ້າໃຈ
- ຄູແບ່ງໃຫ້ນັກຮຽນເປັນຜູ້ສະຫຼຸບ

**ຄູສະຫຼຸບຄືນຕາມຫົວຂໍ້ໃຫຍ່ ແລະ ເນື້ອໃນເພື່ອໃຫ້ນັກຮຽນກຳໄດ້ຫົວຂໍ້ທີ່ສຳຄັນເຊັ່ນ**:

  + ບົດບາດຂອງຊຸມຊົນຕໍ່ການດຳລົງຊີວິດ
  + ມູນເຊື້ອຄວາມເມດຕາຂອງຄົນລາວ
  + ການຮ່ວມມືກັນຂອງນັກຮຽນ

- ຄູແນະນຳໃຫ້ນັກຮຽນອ່ານຄືນເນື້ອໃນເອກະສານ ແລະ ເອກະສານເພີ່ມເຕີມໃນປຶ້ມແບບຮຽນ
- ຄູສຶກສາອົບຮົມແນວຄິດ ກ່ຽວກັບຄວາມເປັນໜຶ່ງດຽວ ໃນຊຸມຊົນທີ່ຕົນອາໄສຢູ່ ເພື່ອໃຫ້ມີນິດໄສສາມັກຄີຊ່ວຍເຫຼືອກັນ
- ຄູສຶກສາໃຫ້ນັກຮຽນຮູ້ວ່າ: ຄົນເຮົາເກີດມາໃນໂລກບໍ່ມີຜູ້ໃດສາມາດດຳລົງຊີວິດຢູ່ຢ່າງໂດດດ່ຽວ, ຕ້ອງໄດ້ເພິ່ງພາອາໄສ ເຊິ່ງກັນ ແລະ ກັນ, ຮັກແພງ, ຊ່ວຍເຫຼືອ

## 5. ການວັດ ແລະ ປະເມີນຜົນ

- ຄູແນະນຳໃຫ້ນັກຮຽນເຮັດບົດເຝິກຫັດໃນປຶ້ມແບບຮຽນ ຂໍ້ທີ1 ແລະ 2
- ຄູໃຫ້ນັກຮຽນເຮັດບົດເຝິກຫັດຂໍ້ທີ3 ໃນປຶ້ມແບບຮຽນເປັນວຽກບ້ານແລ້ວສົ່ງໃຫ້ຄູ ໃນຊົ່ວໂມງໜ້າ
- ສັງເກດນັກຮຽນຈາກ:
  + ການຕອບຄຳຖາມ
  + ການເຮັດວຽກເປັນກຸ່ມ
  + ການສົນທະນາລວມ ຫຼື ກຸ່ມ
  + ການຕັ້ງໃຈຟັງ ແລະ ປະກອບຄຳເຫັນ
  + ການສົ່ງວຽກບ້ານ

# ບົດທີ 15 ພາລະກິດກໍ່ສ້າງ ແລະ ປົກປັກ ຮັກສາປະເທດຊາດ

ເວລາ 3 ຊົ່ວໂມງ

## 1. ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍນໍ້າໃຈຮັກຊາດ, ຄວາມສໍາຄັນຂອງພາລະກິດກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ
- ກໍາໄດ້ມູນເຊື້ອຮັກຊາດ, ຮັກບັນພະບຸລຸດລາວບັນດາເຜົ່າ
- ຕັ້ງໜ້າປະກອບສ່ວນເຄື່ອນໄຫວວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ເພື່ອປົກປັກຮັກສາ ແລະ ສ້າງສາປະເທດຊາດ

## 2. ເນື້ອໃນ

- ນໍ້າໃຈຮັກຊາດ
  + ນໍ້າໃຈຮັກຊາດແມ່ນຫຍັງ
- ມູນເຊື້ອຮັກຊາດຂອງປະຊາຊົນລາວບັນດາເຜົ່າ
  + ຮັກປະເທດຊາດ
  + ມູນເຊື້ອຮັກຊາດ
  + ຮັກປະຊາຊົນລາວ ແລະ ບັນພະບູລຸດ
  + ພາກພູມໃຈທີ່ເປັນຄົນລາວ, ຊາດລາວ
  + ຄວາມດຸໝັ່ນ ແລະ ປະດິດສ້າງໃນການອອກແຮງງານ
- ຄວາມຮັບຜິດຊອບໃນການພັດທະນາ ແລະ ປົກປັກຮັກສາປະເທດຊາດ
  + ການພັດທະນາປະເທດຊາດ
  + ການປົກປັກຮັກສາປະເທດຊາດ

## 3. ສື່ການຮຽນ-ການສອນ

- ປື້ມແບບຮຽນ ແລະ ຄູ່ມືຄູ ວິຊາສຶກສາພົນລະເມືອງຊັ້ນ ມ. 5
- ເອກະສານຕ່າງໆທີ່ພົວພັນກັບເນື້ອໃນບົດຮຽນ

- ປຶ້ມມູນເຊື້ອສາມັກຄີຕໍ່ສູ້ຂອງປະຊາຊົນລາວ
- ຮູບພາບຄວາມສາມັກຄີ, ການເຄື່ອນໄຫວຂອງປະຊາຊົນລາວບັນດາເຜົ່າ

## 4. ກິດຈະກຳການຮຽນ-ການສອນ

**ຊົ່ວໂມງທີ 1**

- ຄູສະເໜີຮູບພາບກ່ຽວກັບບົດຮຽນໃໝ່ເຊັ່ນ: ຮູບພາບການຕໍ່ສູ້ຂອງປະຊາຊົນລາວ, ຮູບພາບການກໍ່ສ້າງເຮືອນ, ຫົນທາງ, ເຂື່ອນໄຟຟ້າ ແລະ ອື່ນໆ

**1. ສົນທະນາລວມກ່ຽວກັບນ້ຳໃຈຮັກຊາດ**

- ຄູໃຫ້ນັກຮຽນອ່ານເນື້ອໃນບົດຮຽນຂໍ້ທີ1ແລະ ຂໍ້1.1 ຕາມປຶ້ມແບບຮຽນ, (5 ນາທີ)
  + ຄູຕັ້ງຄຳຖາມ
  + ນ້ຳໃຈຮັກຊາດແມ່ນຫຍັງ?
  + ເພື່ອຕອບສະໜອງນ້ຳໃຈຮັກຊາດຂອງປະຊາຊົນລາວບັນດາເຜົ່ານັກຮຽນຄວນປະພຶດຕົນຄືແນວໃດ?
- ຄູໃຫ້ນັກຮຽນ 2-3 ຄົນລຸກຂຶ້ນຕອບ
- ຄູ ແລະ ນັກຮຽນຮ່ວມກັນສະຫຼຸບ, ຈາກນັ້ນ ຄູອະທິບາຍເພີ່ມເຕີມ

**ຄູສະຫຼຸບ**

- ນ້ຳໃຈຮັກຊາດ ແມ່ນຄຸນສົມບັດອັນໜຶ່ງທີ່ສຳຄັນຂອງພົນລະເມືອງລາວຕໍ່ປະເທດຊາດຂອງຕົນ, ທັງເປັນສັນຍະລັກພິເສດ, ຄວາມຮັບຜິດຊອບຂອງຊາວໜຸ່ມນັກຮຽນທຸກຄົນກຽມພ້ອມເພື່ອຮັບໃຊ້ຊາດ.
- ນ້ຳໃຈຮັກຊາດເກີດມາຈາກຄວາມຮູ້ສຶກ ແລະ ມີຄວາມໃກ້ຊິດຕິດແທດຂອງທຸກຄົນ, ເປັນມູນເຊື້ອອັນໜຶ່ງຂອງປະຊາຊົນລາວບັນດາເຜົ່າ ແລະ ໄດ້ຮັບການສືບທອດຕະຫຼອດມາ. ພວກເຮົາຈິ່ງພ້ອມກັນປົກປັກຮັກສາໃຫ້ຍືນຍົງຄຽງຄູ່ກັບຄົນລາວຕະຫຼອດໄປ.
- ພວກເຮົາເປັນນັກຮຽນຕ້ອງອອກແຮງງານ, ເຝິກຝົນຫຼໍ່ຫຼອມ, ຮ່ຳຮຽນໃຫ້ມີຄວາມສາມາດເພື່ອປົກປັກຮັກສາ ແລະ ຂະຫຍາຍນ້ຳໃຈຮັກຊາດໃຫ້ຍືນຍົງຄົງຕົວຕະຫຼອດໄປ.

**ຊົ່ວໂມງທີ 2**

**2. ສົນທະນາກຸ່ມກ່ຽວກັບມູນເຊື້ອຮັກຊາດຂອງປະຊາຊົນລາວບັນດາເຜົ່າ**

- ຄູແນະນຳນັກຮຽນຈັດກຸ່ມອອກເປັນ 5 ກຸ່ມ
- ຄູຢາຍຄຳຖາມໃຫ້ນັກຮຽນຄົ້ນຄວ້າ

ຄຳຖາມ

+ ຮັກບ້ານເກີດ ແລະ ປະເທດຊາດ ແມ່ນແນວໃດ?
+ ມູນເຊື້ອຮັກຊາດຂອງປະຊາຊົນລາວບັນດາເຜົ່າ ສະແດງອອກໃນປະຫວັດສາດການຕໍ່ສູ້ຄືແນວໃດ?
+ ເປັນຫຍັງພວກເຮົາຈຶ່ງຕ້ອງເຄົາລົບນັບຖື ແລະ ຮູ້ບຸນຄຸນຕໍ່ປະຊາຊົນ ແລະ ບັນພະບູລຸດລາວ?
+ ພວກນ້ອງມີຄວາມພາກພູມໃຈແນວໃດ ທີ່ເປັນຄົນລາວ, ຊາດລາວ?.
+ ປະຊາຊົນລາວມີຄວາມດຸໝັ່ນ ແລະ ປະດິດສ້າງໃນການອອກແຮງງານແນວໃດ?

- ຄູໃຫ້ແຕ່ລະກຸ່ມຄົ້ນຄວ້າ ປະມານ 10 ນາທີ
- ຈາກນັ້ນໃຫ້ແຕ່ລະກຸ່ມຂຶ້ນລາຍງານກຸ່ມອື່ນປະກອບຄວາມເຫັນເພີ່ມເຕີມຖ້າກຸ່ມໃດມີຮູບພາບມາປະກອບການອະທິບາຍຍິ່ງເປັນການດີ ແລະ ສະຫຼຸບໃຫ້ຖືກຕ້ອງເປັນເອກະພາບກັນ.

**ຄູສະຫຼຸບ**

- ຮັກບ້ານເກີດ ແລະ ປະເທດຊາດ ແມ່ນສະແດງເຖິງຄວາມຮັກພໍ່ແມ່, ອ້າຍ, ເອື້ອຍ, ນ້ອງ ແລະ ບັນດາຍາດພີ່ນ້ອງ, ຮັກປະຊາຊົນພາຍໃນບ້ານ. ຮັກບ້ານເກີດ ແລະ ປະເທດຊາດຍັງສະແດງອອກ ຮັກຊັບພະຍາກອນທີ່ອຸດົມຮັ່ງມີ, ຮັກພາສາຄຳເວົ້າ, ຮັກມູນເຊື້ອດຸໝັ່ນຂອງປະຊາຊົນລາວບັນດາເຜົ່າ.
- ມູນເຊື້ອຮັກຊາດຂອງປະຊາຊົນລາວບັນດາເຜົ່າ ສະແດງອອກໃນປະຫວັດສາດແຫ່ງຂະບວນການຕໍ່ສູ້ກູ້ຊາດຢ່າງອົງອາດກ້າຫານ ເພື່ອຕ້ານການຮຸກຮານ, ຄອບຄອງຂອງສັກດີນາຕ່າງດ້າວ, ພວກຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່. ປະຊາຊົນລາວໄດ້ຮັກສາມູນເຊື້ອດັ່ງກ່າວ ເພື່ອປົກປ້ອງຜືນແຜ່ນດິນ, ອຳນາດອະທິປະໄຕ ແລະ

ຄວາມໝັ້ນຄົງຂອງຊາດ, ພາຍໃຕ້ການນຳພາອັນຖືກຕ້ອງ, ສະຫຼາດສ່ອງໃສ ແລະ ປີຊາສາມາດຂອງພັກປະຊາຊົນ ປະຕິວັດລາວ.

- ຄົນລາວເປັນຄົນສຸພາບຮຽບຮ້ອຍ, ຖະໜອມຖ່ອມຕົວ, ມີຄວາມເອື້ອເຟື້ອໂອບເອື້ອອາລີ, ຮູ້ເຫັນອົກເຫັນໃຈກັນ ແລະ ຮູ້ຊ່ວຍເຫຼືອເກື້ອກູນ, ມີຄວາມຈິງໃຈ, ຮັກຄວາມເປັນທຳ, ຮູ້ສຳມາຄາລະວະ ແລະ ມີຄວາມກະຕັນຍູຮູ້ບຸນຄຸນຕໍ່ຜູ້ມີຜົນງານຕໍ່ປະເທດຊາດ. ຄືດັ່ງຄຳສຸພາສິດບູຮານໄດ້ກ່າວໄວ້ວ່າ: “ ໄດ້ກິນໝາກຢ່າລືມຄຸນຜູ້ປູກ, ໄດ້ມີຄວາມສຸກຢ່າລືມຄຸນຜູ້ຕໍ່ສູ້, ໄດ້ມີຄວາມຮູ້ຢ່າລືມຄຸນຜູ້ສັ່ງສອນ.”
- ຍ້ອນວ່າຊາດລາວມີອະລິຍະທຳອັນເກົ່າແກ່, ດຸໝັ່ນ, ສັດຊື່, ຖືກຕ້ອງປອງດອງກັນ ແລະ ມີພູຜາປ່າດົງຂຽວສົດງົດງາມ, ມີແມ່ນ້ຳລຳເຊໄຫຼຜ່ານແຕ່ເໜືອຮອດໃຕ້, ມີຊັບພະຍາກອນທຳມະຊາດຫຼາຍຊະນິດ, ມີວັດທະນະທຳ, ຮີດຄອງປະເພນີເປັນຂອງຕົນເອງ ແລະ ມີມູນ ເຊື້ອອັນດີງາມມາແຕ່ບູຮານນະການ. ພວກເຮົາຮັກ ແລະ ພາກພູມໃຈທີ່ໄດ້ເປັນຄົນລາວ, ຊາດລາວ ແລະ ກຽມພ້ອມທີ່ຈະປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດໃຫ້ຈະເລີນຮຸ່ງເຮືອງສີວິໄລ.
- ປະຊາຊົນລາວໄດ້ສ້າງວັດທະນະທຳທາງດ້ານວັດຖຸ ແລະ ຈິດໃຈ ອັນເປັນເອກະລັກທີ່ມີຄຸນຄ່າຢ່າງຫຼວງຫຼາຍຄື: ສິລະປະວັດທະນະທຳ, ຮີດຄອງປະເພນີ ແລະ ມີຄວາມດຸໝັ່ນອົດທົນໃນການອອກແຮງງານ. ປະຊາຊົນລາວແຕ່ລະເຜົ່າ ລ້ວນແຕ່ມີເອກະລັກທາງດ້ານສິລະປະ, ວັດທະນະທຳ ແລະ ຮີດຄອງປະເພນີເປັນຂອງຕົນເອງ, ເຊິ່ງແມ່ນຜົນງານແຫ່ງການອອກແຮງງານ ແລະ ການດຳລົງຊີວິດຂອງເຂົາເຈົ້າ. ສະນັ້ນ, ພວກເຮົາຕ້ອງເສີມຂະຫຍາຍຜົນງານການປະດິດສ້າງ ແລະ ການອອກແຮງງານ, ຂອງເຜົ່າຕ່າງໆ ເພື່ອປົກປັກຮັກສາ ວັດທະນະທຳອັນດີງາມຂອງຊາດລາວໄວ້ຄຽງຄູ່ກັບຄົນລາວຕະຫຼອດໄປ.

**ຊົ່ວໂມງທີ 3**

3. **ສົນທະນາກຸ່ມກ່ຽວກັບຄວາມຮັບຜິດຊອບໃນການພັດທະນາ ແລະ ປົກປັກຮັກສາປະເທດຊາດ**
   - ຄູແບ່ງນັກຮຽນອອກເປັນກຸ່ມຕາມຄວາມເໝາະສົມ
   - ຄູຢາຍຄຳຖາມໃຫ້ແຕ່ລະກຸ່ມ

**ຄຳຖາມ**

+ ການພັດທະນາປະເທດຊາດແມ່ນຫຍັງ?
+ ຊາວໜຸ່ມ, ນັກຮຽນມີຄວາມຮັບຜິດຊອບຕໍ່ການພັດທະນາປະເທດຊາດຄືແນວໃດ?
+ ການປົກປັກຮັກສາປະເທດຊາດແມ່ນແນວໃດ?
+ ທຸກຄົນມີໜ້າທີ່ ແລະ ພັນທະປົກປັກຮັກສາປະເທດຊາດຄືແນວໃດ?

- ຄູໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານ ຜົນການຄົ້ນຄວ້າໃນກຸ່ມໃຫ້ໝູ່ຟັງ. ນັກຮຽນຄົນອື່ນໆ ໃນກຸ່ມ ຫຼື ນອກກຸ່ມໄດ້ຊັກຖາມ ເພື່ອທຳຄວາມເຂົ້າໃຈ ຫຼື ປະກອບຄວາມເຫັນເພີ່ມເຕີມ.

**ຄູສະຫຼຸບ**:

- ຜົນການລາຍງານຂອງແຕ່ລະກຸ່ມ ແລະ ອະທິບາຍເພີ່ມເຕີມ, ເພື່ອໃຫ້ເປັນເອກະພາບກັນ
  + ການພັດທະນາປະເທດຊາດ ແມ່ນການສືບຕໍ່ກໍ່ສ້າງປະເທດຊາດໃຫ້ໝັ້ນຄົງ, ເຂັ້ມແຂງ, ພາຊາດລາວກ້າວຂຶ້ນເລື້ອຍໆໄປ ແລະ ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ, ກາຍເປັນປະເທດສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.
  ◆ **ຊາວໜຸ່ມ, ນັກຮຽນລາວຈະຕ້ອງປະຕິບັດດັ່ງນີ້**:
  + ດຸໝັ່ນ, ມີທັດສະນະປະດິດສ້າງໃນການຮໍ່າຮຽນ, ອອກແຮງງານ, ມີຈຸດປະສົງໃນການຮໍ່າຮຽນຢ່າງຖືກຕ້ອງ.
  + ຕັ້ງໜ້າເຝິກຝົນຫຼໍ່ຫຼອມທັດສະນະທ່າທີ, ຄຸນສົມບັດ, ດຳລົງຊີວິດປອດໃສຂາວສະອາດ ແລະ ມີຄວາມເຂັ້ມແຂງ, ຫຼີກເວັ້ນປະກົດການຫຍໍ້ທໍ້ໃນສັງຄົມ.
  + ຈົ່ງພ້ອມກັນປະຕິບັດແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດໃຫ້ເຂັ້ມງວດ.
  + ຕັ້ງໜ້າປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດດ້ວຍຄວາມຈິງໃຈ.
  + ກ້າຫານຕຳນິສິ່ງຂ່າວຕໍ່ຜູ້ປະພຶດກົງກັນຂ້າມກັບສິດຜົນປະໂຫຍດຂອງລັດ.

ເພື່ອພາລະກິດສ້າງສາພັດທະນາປະເທດຊາດ, ພວກເຮົາຕ້ອງອອກແຮງກໍ່ສ້າງກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບໃຫ້ເຂັ້ມແຂງ, ໜັກແໜ້ນໃນທຸກດ້ານ, ເພື່ອຮັບປະກັນຢ່າງເປັນເຈົ້າການ ແລະ ຕ້ານທຸກເລ້ລ່ຽມ, ກົນອຸບາຍຂອງສັດຕູຢ່າງທັນການ.

+ ທຸກຄົນລ້ວນແຕ່ມີໜ້າທີ່, ມີພັນທະ ແລະ ຄວາມຮັບຜິດຊອບຕໍ່ການພັດທະນາປະເທດຊາດ.

+ ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ຕໍ່ລະບອບໃໝ່, ມີສະຕິລະວັງຕົວຕໍ່ທຸກເລ້ລ່ຽມແບ່ງແຍກຂອງສັດຕູ.

+ ຕັ້ງໜ້າຮ່ຳຮຽນ, ເຝິກຝົນຫຼໍ່ຫຼອມຄຸນສົມບັດ, ສົນທຳປະຕິວັດທີ່ປອດໃສ, ພັດທະນາສຸຂະພາບໃຫ້ເຂັ້ມແຂງ ແລະ ທົນທານໃນການເຮັດວຽກງານ.

+ ປະກອບສ່ວນເປັນທະຫານພັນທະ ເມື່ອເຖິງອາຍຸກະສຽນ ແລະ ກຽມຮັບໃຊ້ປະຊາຊົນ, ປົກປັກຮັກສາປະເທດຊາດໃຫ້ມີຄວາມສະຫງົບສຸກ ໝັ້ນຄົງ ແລະ ເຂັ້ມແຂງ.

+ ຕອບແທນບຸນຄຸນຜູ້ທີ່ເສຍສະຫຼະຊີວິດເພື່ອຊາດ, ຜູ້ເສຍອົງຄະ, ວິລະຊົນແຫ່ງຊາດທີ່ມີຜົນງານດີເດັ່ນໃນພາລະກິດປະຕິວັດ.

- ຄູອາດຈະຕັ້ງຄຳຖາມກ່ຽວກັບເນື້ອໃນບົດຮຽນໃຫ້ນັກຮຽນຕອບ
- ຄູອາດຈະອະທິບາຍບາງຂໍ້ທີ່ນັກຮຽນບໍ່ເຂົ້າໃຈ

**ຄູສະຫຼຸບຄືນແຕ່ລະຂໍ້ທີ່ຮຽນຜ່ານມາພ້ອມກັບອະທິບາຍເນື້ອໃນໂດຍຫຍໍ້**

- ຄູແນະນຳນັກຮຽນອ່ານຄືນເນື້ອໃນບົດຮຽນ ແລະ ຊອກອ່ານເອກະສານທີ່ກ່ຽວຂ້ອງກັບບົດຮຽນ
- ສຶກສາອົບຮົມແນວຄິດກ່ຽວກັບຄວາມຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກພໍ່ແມ່, ປູ່ຍ່າ, ອ້າຍເອື້ອຍນ້ອງຂອງຕົນເອງ ເພື່ອໃຫ້ມີນິໄສການປະພຶດທີ່ດີ.

## 5. ການວັດ ແລະ ປະເມີນຜົນ

- ສັງເກດພຶດຕິກຳຂອງນັກຮຽນຈາກ:

  + ການຮ່ວມເຮັດກິດຈະກຳໃນກຸ່ມ.

  + ການຕອບຄຳຖາມຂອງນັກຮຽນ

  + ການປະກອບຄວາມເຫັນເພີ່ມເຕີມຂອງກຸ່ມອື່ນ

- ແນະນຳເຮັດບົດເຝິກຫັດ ແລະຕອບຄຳຖາມໃນປຶ້ມແບບຮຽນ

# ບົດທີ 16 ບາງບັນຫາຈະຕ້ອງແກ້ໄຂໃນສັງຄົມໂລກ

**ເວລາ 3 ຊົ່ວໂມງ**

## 1 ຈຸດປະສົງ

**ເພື່ອໃຫ້ນັກຮຽນສາມາດ:**

- ອະທິບາຍການເຊື່ອມໂຊມຂອງສະພາບແວດລ້ອມ
- ປົກປັກຮັກສາສະພາບແວດລ້ອມ, ການປົກປ້ອງສິ່ງແວດລ້ອມ
- ອະທິບາຍ ສາເຫດການເພີ່ມຂຶ້ນຂອງປະຊາກອນ, ການລະບາດຂອງພະຍາດຕ່າງໆ, ການປ້ອງກັນ ແລະ ການຕ້ານພະຍາດຕ່າງໆ

## 2 ເນື້ອໃນ

- ການເຊື່ອມໂຊມ ແລະ ການປົກປັກຮັກສາສະພາບແວດລ້ອມ
  + ການເຊື່ອມໂຊມຂອງສະພາບແວດລ້ອມ
  + ການປົກປັກຮັກສາສະພາບແວດລ້ອມ
- ການເພີ່ມຂຶ້ນຂອງປະຊາກອນ ແລະ ການຈຳກັດປະຊາກອນເພີ່ມຂຶ້ນ
  + ການເພີ່ມປະຊາກອນ
  + ການຈຳກັດປະຊາກອນເພີ່ມຂຶ້ນ
- ການລະບາດຂອງພະຍາດຕ່າງໆ, ການປ້ອງກັນ ແລະ ການຕ້ານພະຍາດຕ່າງໆ
  + ປະເພດຂອງພະຍາດ
    • ພະຍາດປອດແຫ້ງ
    • ພະຍາດໄຂ້ຍຸງ
    • ພະຍາດຖອກທ້ອງ
    • ພະຍາດຫົວໃຈ
    • ພະຍາດມະເຮັງ
    • ພະຍາດໄຂ້ຫວັດສັດປີກ
    • ພະຍາດໂລກເອດ

## 3. ສື່ການຮຽນ-ການສອນ

- ປຶ້ມແບບຮຽນ ແລະ ຄູ່ມືຄູ ວິຊາສຶກສາພົນລະເມືອງ ຂັ້ນ ມ.5
- ຮູບພາບສິ່ງແວດລ້ອມຕ່າງໆທີ່ກ່ຽວພັນກັບບົດຮຽນ
- ຮູບພາບຂອງປະຊາກອນທີ່ອາໄສຢູ່ຢ່າງແອອັດ
- ປຶ້ມສະຖິຕິພົນລະເມືອງ (ຖ້າມີ)
- ຮູບພາບການລະບາດຂອງພະຍາດຕ່າງໆ

## 4. ກິດຈະກຳການຮຽນ-ການສອນ

**ຊົ່ວໂມງທີ 1**

ທວນຄືນບົດຮຽນທີ່ຜ່ານມາ

- ຄູສະເໜີຮູບພາບທີ່ກ່ຽວຂ້ອງກັບປະຊາກອນ, ພະຍາດ ແລະ ອື່ນໆ
- ຄູສະເໜີບົດຮຽນ: ບົດທີ 16 ບາງບັນຫາຈະຕ້ອງແກ້ໄຂໃນສັງຄົມໂລກ

**1 ສົນທະນາການເຊື່ອມໂຊມ ແລະ ການປົກປັກຮັກສາສະພາບແວດລ້ອມ**

- ຄູໃຫ້ນັກຮຽນອ່ານເນື້ອໃນບົດຮຽນຂໍ້ທີ 1.1 ແລະ 1.2 ຕາມປຶ້ມແບບຮຽນ 5 ນາທີ ຈາກນັ້ນຄູຕັ້ງຄຳຖາມສົນທະນາກັບນັກຮຽນດັ່ງນີ້:
- ຄຳຖາມ
  + ສະພາບແວດລ້ອມມີປັດໄຈຫຍັງແດ່?
  + ຍ້ອນຫຍັງ ສະພາບແວດລ້ອມຈິ່ງເຊື່ອມໂຊມ?.
  + ພວກເຮົາຄວນຈະປົກປັກຮັກສາສະພາບແວດລ້ອມຄືແນວໃດ?
- ຄູໃຫ້ອາສາສະໝັກ 4-5 ຄົນລຸກຂຶ້ນຕອບ
- ຄູສະຫຼຸບຄືນການຕອບຄຳຖາມຂອງນັກຮຽນ ຈາກນັ້ນຄູອະທິບາຍເພີ່ມເຕີມ

**ຄູສະຫຼຸບ**:

- ສິ່ງແວດລ້ອມປະກອບດ້ວຍບັນດາປັດໄຈທຳມະຊາດ ແລະ ປັດໄຈດ້ານວັດຖຸທີ່ມະນຸດສ້າງຂຶ້ນ, ເຊິ່ງມັນຢູ່ອ້ອມຂ້າງຄົນເຮົາຄື: ດິນ, ນ້ຳ, ອາກາດ, ບັນດາແຮ່ທາດທີ່ຢູ່ໃຕ້ດິນ, ໃນນ້ຳ, ໃນປ່າ… ການດຳລົງຊີວິດຂອງມະນຸດລ້ວນແຕ່ຕິດພັນສະນິດແໜ້ນກັບທຳມະຊາດ.

- ຍ້ອນການຂະຫຍາຍການກໍ່ສ້າງໃນສະຖານທີ່ຕ່າງໆ, ການບຸກເບີກເນື້ອທີ່ດິນ ເພື່ອດໍາເນີນການຜະລິດ, ການຖິ້ມຂີ້ເຫຍື້ອຊະຊາຍ, ການປ່ອຍນໍ້າເສຍຈາກໂຮງງານອຸດສະຫະກໍາ ລົງໃສ່ແມ່ນໍ້າ, ຄອງບຶງ, ການປ່ອຍມົນລະພິດຈາກໂຮງງານຕ່າງໆຂຶ້ນສູ່ບັນຍາກາດ, ການຖາງປ່າເຮັດໄຮ່ ແລະ ການຕັດໄມ້ທໍາລາຍປ່າຢ່າງຊະຊາຍຂອງປະຊາຊົນໃນທ້ອງຖິ່ນຕ່າງໆ. ຍ້ອນສິ່ງຕ່າງໆເຫຼົ່ານີ້ ຈຶ່ງເຮັດໃຫ້ພູມອາກາດມີການປ່ຽນແປງ ແລະ ເຮັດໃຫ້ສິ່ງແວດລ້ອມເຊື່ອມໂຊມລົງ.
- ການຊົມໃຊ້ວັດຖຸສິ່ງຂອງຕ້ອງໃຫ້ເກີດປະໂຫຍດຢ່າງກ້ວາງຂວາງ, ໃຊ້ໃຫ້ຄຸ້ມຄ່າເຊັ່ນ: ວັດສະດຸທີ່ນໍາໃຊ້ ເມື່ອໝົດສະພາບໃຊ້ງານແລ້ວຕ້ອງມ້ຽນມັດໃຫ້ເປັນລະບຽບ ຫຼື ບາງຢ່າງກໍ່ນໍາມາປ່ຽນແປງສະພາບຄືນໃໝ່ເຊັ່ນ: ຢາສະຕິກ, ກະປ໋ອງ, ໂລຫະອື່ນໆ
- ຕ້ອງມີການບູລະນະ ຫຼື ຟື້ນຟູຂຶ້ນມາທົດແທນເຊັ່ນ: ການປູກຕົ້ນໄມ້, ການຂຸດຄອງລະບາຍນໍ້າ, ຫຼຸດຜ່ອນການປ່ອຍນໍ້າເສຍຈາກໂຮງງານລົງໃສ່ແມ່ນໍ້າ, ການກໍາຈັດຄວັນພິດ ຫຼື ການ ກໍາຈັດສານພິດຕ່າງໆ ຈາກໂຮງງານ.

**ຊົ່ວໂມງທີ 2**

**2. ສົນທະນາກຸ່ມກ່ຽວກັບການເພີ່ມປະຊາກອນ ແລະ ການຈໍາກັດປະຊາກອນ**

- ຄູໃຫ້ນັກຮຽນອ່ານເນື້ອໃນບົດຮຽນຂໍ້ 2.1 ແລະ 2.2 ໃນປຶ້ມແບບຮຽນ
- ຄູແນະນໍານັກຮຽນຈັດກຸ່ມອອກເປັນ 3 ກຸ່ມ ຫຼື ຕາມຄວາມເໝາະສົມ ແລະ ຢາຍຄໍາຖາມໃຫ້ແຕ່ລະກຸ່ມເພື່ອຄົ້ນຄວ້າ
- ຕາງໜ້າກຸ່ມຂຶ້ນສະເໜີ

**ຄໍາຖາມ**

+ ສາເຫດທີ່ພາໃຫ້ປະຊາກອນເພີ່ມຂຶ້ນມີຫຍັງແດ່?.
+ ປະຈຸບັນປະຊາກອນໂລກເພີ່ມຂຶ້ນເທົ່າໃດ ແລະ ເພີ່ມຂຶ້ນຢູ່ທະວີບໃດຫຼາຍກວ່າໝູ່ມີຜົນກະທົບແນວໃດຕໍ່ທໍາມະຊາດ ແລະ ສັງຄົມ?
+ ເພື່ອແກ້ໄຂບັນຫາສັງຄົມ ພັກ-ລັດເຮົາໄດ້ມີນະໂຍບາຍ ຈໍາກັດການເພີ່ມຂຶ້ນຂອງປະຊາກອນລາວຄືແນວໃດ?

- ໃຫ້ແຕ່ລະກຸ່ມຄົ້ນຄ້ວາຄໍາຖາມປະມານ 10 ນາທີໂດຍສັງລວມເອົາຄໍາຕອບຢູ່ໃນປຶ້ມແບບຮຽນ , ຈາກນັ້ນໃຫ້ແຕ່ລະກຸ່ມຂຶ້ນລາຍງານ. ຖ້າກຸ່ມໃດມີຮູບພາບມາປະກອບການອະທິບາຍຍິ່ງ

ເປັນການດີ. ຫຼັງຈາກຂຶ້ນລາຍງານໝົດທຸກກຸ່ມແລ້ວ ຄູຈຶ່ງສະຫຼຸບຄືນການລາຍງານຂອງແຕ່ລະກຸ່ມ ແລະ ສະຫຼຸບໃຫ້ຖືກຕ້ອງເປັນເອກະພາບດັ່ງນີ້:

+ ການເພີ່ມຂຶ້ນຂອງປະຊາກອນມີສາເຫດມາຈາກຫຼາຍປັດໄຈເຊັ່ນ:
  - ມີອັດຕາການເກີດຂອງເດັກແຕ່ລະໄຂງເຂດເພີ່ມຂຶ້ນ
  - ຍ້ອນການບໍ່ຮູ້ໜັງສືຂອງປະຊາຊົນໃນເຂດຊົນນະບົດ ແລະ ຂາດການວາງແຜນຄອບຄົວ
  - ຍ້ອນການເຄື່ອນຍ້າຍຂອງປະຊາກອນຢູ່ເຂດຊົນນະບົດເຂົ້າສູ່ຕົວເມືອງຫຼາຍ
  - ການຫຼັ່ງໄຫຼເຂົ້າສູ່ຕົວເມືອງຂອງຊາວໜຸ່ມ ເພື່ອຊອກຫາວຽກເຮັດງານທຳ
  - ການຫຼຸດຜ່ອນອັດຕາການຕາຍຂອງເດັກນ້ອຍ, ຍ້ອນສິ່ງອຳນວຍຄວາມສະດວກທາງດ້ານການແພດ

+ ໃນປັດຈຸບັນປະຊາກອນໂລກມີປະມານ 6,7 ຕື້ຄົນ ແລະ ຮອດປີ 2020 ປະຊາກອນຈະເພີ່ມຂຶ້ນເຖິງ 7,5 ຕື້ຄົນ ຫຼື ອາດຈະຫຼາຍກວ່ານີ້.

+ ການເພີ່ມຂຶ້ນຂອງປະຊາກອນ ສ່ວນຫຼາຍຢູ່ໃນບັນດາປະເທດທຸກຍາກເຊັ່ນ: ທະວີບອາຊີ, ອາຟຣິກກາ ແລະ ອາເມຣິກາລາຕິນ.

+ ປະຊາກອນເພີ່ມຂຶ້ນຢ່າງໄວວາ ເຮັດໃຫ້ຂາດຄວາມດຸນດ່ຽງຂອງທຳມະຊາດ ແລະ ສັງຄົມ, ຊັບພະຍາກອນທຳມະຊາດກຳລັງບົກແຫ້ງ, ເສດຖະກິດແຫ່ງຊາດຂອງແຕ່ລະປະເທດຊຸດໂຊມລົງ, ເກີດໄພອຶດຫິວ, ພະຍາດຕ່າງໆລະບາດ ແລະ ການວ່າງງານເພີ່ມຂຶ້ນ.

+ ເພື່ອແກ້ໄຂບັນຫາສັງຄົມພັກ-ລັດເຮົາໄດ້ຄົ້ນຄວ້າ, ແກ້ໄຂ ແລະ ກຳນົດລະບົບນະໂຍບາຍຕໍ່ປະຊາກອນຄື:
  - ພັດທະນາການສຶກສາ ແລະ ອາຊີບ
  - ຈັດຫາວຽກເຮັດງານທຳໃຫ້ພົນລະເມືອງ
  - ປິ່ນປົວສຸຂະພາບ ແລະ ສະຫວັດດີການສັງຄົມ
  - ຄຸ້ມຄອງອັດຕາການເກີດ, ການຕາຍຂອງປະຊາກອນ ໃຫ້ສົມຄູ່ກັບອັດຕາການຂະຫຍາຍຕົວຂອງເສດຖະກິດ
  - ເຄື່ອນຍ້າຍ, ດັດສົມປະຊາກອນຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ

+ ເພື່ອຈຳກັດປະຊາກອນເພີ່ມຂຶ້ນ ທຸກຄົນຕ້ອງປະຕິບັດກົດໝາຍ ກ່ຽວກັບການແຕ່ງດອງໃຫ້ຖືກຕ້ອງເຊັ່ນ: ມີຜົວດຽວເມຍດຽວ, ຈຳກັດການແຕ່ງດອງທີ່ບໍ່ເຖິງອາຍຸກະສຽນ ແລະ ໃຫ້ມີການວາງແຜນຄອບຄົວເກີດລູກຫ່າງ.

**ຊົ່ວໂມງທີ 3**

**3. ສົນທະນາລວມ ການລະບາດ, ການປ້ອງກັນ ແລະ ການຕ້ານພະຍາດຕ່າງໆ**

- ຄູໃຫ້ນັກຮຽນແຕ່ລະຄົນພາຍໃນໂຕະດຽວກັນອ່ານ, ສົນທະນາເນື້ອໃນບົດຮຽນຂໍ້ 3.1 ແລະ 3.2 ໃນປຶ້ມແບບຮຽນ, ຫຼັງຈາກນັ້ນຄູແນະນຳນັກຮຽນສະຫຼຸບຫຍໍ້ເນື້ອໃນບົດຮຽນສົ່ງໃຫ້ຄູໃນອາທິດໜ້າ, ເພື່ອກວດເອົາຄະແນນ ພ້ອມທັງສົນທະນາ ເພື່ອສະຫຼຸບຄືນ.
- ຄູອາດຈະຕັ້ງຄຳຖາມກ່ຽວກັບເນື້ອໃນບົດຮຽນໃຫ້ນັກຮຽນຕອບ ເພື່ອປະເມີນຄວາມເຂົ້າໃຈ
- ຄູອາດຈະອະທິບາຍເພີ່ມເຕີມບາງຫົວຂໍ້ທີ່ຮຽນຜ່ານມາ ແລະ ອະທິບາຍສາເຫດຂອງການເກີດພະຍາດຕ່າງໆ (ຖ້າຄູຮູ້ຂໍ້ມູນ)
- ຄູສະຫຼຸບຄືນເນື້ອໃນຂອງແຕ່ລະຂໍ້ໂດຍຫຍໍ້ ເພື່ອໃຫ້ນັກຮຽນຈົດເອົາ
- ສຶກສາອົບຮົມແນວຄິດຂອງນັກຮຽນໃຫ້ຮູ້ອະນຸລັກ ແລະ ປົກປັກຮັກສາສະພາບແວດລ້ອມ, ບໍ່ຖິ້ມຂີ້ເຫຍື່ອຊະຊາຍ, ບໍ່ຈູດຂີ້ເຫຍື່ອທົ່ວທີບ ເພາະຈະເປັນອັນຕະລາຍຕໍ່ຕົນເອງ, ສັງຄົມ ແລະ ອື່ນໆ.

## 5. ການວັດ ແລະ ປະເມີນຜົນ

- ສັງເກດພຶດຕິກຳຂອງນັກຮຽນຈາກ:
  + ການຮ່ວມເຮັດກິດຈະກຳພາຍໃນກຸ່ມ
  + ການຂຶ້ນລາຍງານຂອງແຕ່ລະກຸ່ມ
  + ການຄົ້ນຄ້ວາ ແລະ ລຸກຂຶ້ນຕອບຄຳຖາມຂອງນັກຮຽນ
  + ການປະກອບຄຳເຫັນເພີ່ມເຕີມຂອງກຸ່ມອື່ນ
  + ການຂຽນບົດລາຍງານຂອງນັກຮຽນ


ບົດທີ4 ຕົ້ນກຳເນີດການເຄື່ອນ ເໜັງ, ການຂະຫຍາຍຕົວຂອງ ສິ່ງວັດຖຸ ແລະ ປາກົດການ
ບົດທີ5 ຮູບແບບການເຄື່ອນ ເໜັງ, ການຂະຫຍາຍຕົວຂອງ ສິ່ງວັດຖຸ ແລະ ປາກົດການ
ບົດທີ6 ທ່າອ່ຽງການຂະ ຫຍາຍຕົວຂອງສິ່ງວັດຖຸ ແລະ ປາກົດການ
ບົດທີ3 ການເຄື່ອນເໜັງ ແລະ ການຂະຫຍາຍຕົວ ຂອງໂລກວັດຖຸ
ບົດທີ7ພຶດຕິກຳ ແລະ ບົດບາດ ຂອງພຶດຕິກຳຕໍ່ກັບຄວາມຮັບຮູ້
ບົດທີ2 ໂລກວັດ ຖຸຄົງຕົວພາວະ ວິໄສ
ພາກທີ I ການປະກອບສ້າງ ໂລກະທັດວັດຖຸນິຍົມ ແລະ ວິທີວິທະຍາ
ບົດທີ8 ການຄົງຕົວຂອງສັງຄົມ ແລະ ສະຕິສັງຄົມ
ບົດທີ1: ໂລກະທັດ ແລະ ວິທີສັດຈະວິພາກວັດຖຸນິ ຍົມ
ບົດທີ9 ມະນຸດເປັນຜູ້ສ້າງປະຫວັດ ສາດ ແລະ ເປັນເປົ້າໝາຍພັດທະນາ ສັງຄົມ
ພາກທີ II ຄຸນສົມບັດ
ບົດທີ16 ບາງບັນ ຫາຈະຕ້ອງແກ້ໄຂໃນສັງຄົມໂລກ
ບົດທີ10 ຄວາມສຳນຶກກ່ຽວກັບ ຄຸນສົມບັດ
ບົດທີ15 ພາລະກິດກໍ່ ສ້າງ ແລະ ປົກປັກຮັກ ສາປະເທດຊາດ
ບົດທີ11ມາດຖານພື້ນຖານຂອງ ຄຸນສົມບັດ
ບົດທີ14 ຊຸມຊົນ
ບົດທີ13 ການສ້າງ ຄອບຄົວ
ບົດທີ12 ການພັດທະນາຕົນ ເອງໃຫ້ ສົມບູນ

# ເອກະສານອ້າງອີງ


1. ປື້ມແບບຮຽນພັດທະນາຊຸມຊົນ ຄະນະວິທະຍາສາດສັງຄົມມະຫາວິທະຍາໄລແຫ່ງຊາດ
2. ປື້ມແບບຮຽນສຶກສາພົນລະເມືອງຂັ້ນ ມ.1 (ສະບັບປະຕິຮູບໃໝ່) ປີ 2010
3. ດຣ. ຈະລວຍພອນ ທໍລະນິນ ປະລັດກະຊວງສຶກສາທິການຂອງໄທ ຫຼັກຈັນຍາບັນຂອງຄູ ແລະ ນັກຮຽນ
4. ບົດຄວາມພິເສດຈາກ ອາຈານ ວິລະໄຊ ໂກແວ (ພາສາໄທ) Internet
5. ປື້ມຄວາມຮູ້ພື້ນຖານກ່ຽວກັບປະຊາກອນສຶກສາ, ສຸຂະພາບຈະເລີນພັນ, ເພດສຶກສາ ແລະ ທັກສະຊີວິດ (ສໍາລັບຄູສອນຊັ້ນມັດທະຍົມສຶກສາ)
6. ປື້ມສັງຄົມວິທະຍາເບື້ອງຕົ້ນ ພາກວິຊາວິທະຍາສາດການເມືອງ ຄະນະວິທະຍາສາດສັງຄົມມະຫາວິທະຍາໄລແຫ່ງຊາດປີ 2002
7. ປື້ມຄວາມຮູ້ຄູ່ລາວ ພິທີກໍາການແຕ່ງດອງ ແລະ ຄໍາສອນຄູ່ສົມລົດໃໝ່ ໂດຍ: ດວງໄຊ ຫຼວງພະສີປີ 2005
8. ປື້ມແບບຮຽນປະຊາກອນສຶກສາ ສຸຂະພາບຈະເລີນພັນ ວິຊາສຶກສາພົນລະເມືອງຊັ້ນມັດທະຍົມສຶກສາຕອນຕົ້ນ
9. ປື້ມຊາດລາວ ແລະ ວັດທະນະທໍາລາວປີ 2008
10. ປື້ມບັນດາເຜົ່າໃນລາວ
11. ສ.ປ.ປ ລາວ 30 ປີ 1975-2005 ຄະນະໂຄສະນາອົບຮົບສູນກາງພັກ
12. ຄວາມຮູ້ພື້ນຖານທິດສະດີການເມືອງຊັ້ນຕົ້ນ
13. ປື້ມແບບຮຽນວິທະຍາສາດທໍາມະຊາດຊັ້ນມັດທະຍົມສຶກສາຕອນຕົ້ນ
14. ກົດໝາຍວ່າດ້ວຍກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ
15. ກົດໝາຍວ່າດ້ວຍຄອບຄົວ (ສະບັບປັບປຸງ) ປີ 2008
16. ປື້ມວັດຈະນານຸກົມພາສາລາວ
17. ຄວາມຮູ້ພື້ນຖານປັດຊະຍາມາກ-ເລນິນ, ປີ 1985
18. ມາດຖານຄວາມຮູ້ດ້ານທິດສະດີການເມືອງຊັ້ນຕົ້ນ ປີ 2003
19. ວັດຖຸນິຍົມສັດຈະວິພາກ, ປະຫວັດວິພາກ, ປີ 1978

20. ວັດທະນະທຳຕາເວັນອອກ (ຊັ້ນມັດທະຍົມ ປີທີ7) ປີ 1975
21. ເອກກະສານເຝິກອົບຮົມຄູ-ອາຈານສອນ ວິຊາການເມືອງ ສາຍສາມັນ ແລະ ອາຊີວະສຶກສາ ປີ 2008
22. ແບບຮຽນສຶກສາພົນລະເມືອງຊັ້ນມັດທະຍົມ ປີທີ4, ປີ 2006
23. ສຶກສາພົນລະເມືອງຂັ້ນມ.10 ປີ2 (ພາສາຫວຽດນາມ)